ເຫຼັ້ມ ໑

# ສິນໄຊ



ໂດຍ ປາງຄຳ

ຂຽນເປັນຄຳເວົ້າທຳມະດາ ໂດຍ ອຸທິນ ບຸນຍາວົງ

# ຄຳນຳ

ເລື່ອງສິນໄຊ ສະບັບເປັນຄຳກອນນັ້ນໄດ້ຮັບການພິມ ເຜີຍແຜ່ອອກຢ່າງກວ້າງຂວາງ ຫລາຍກວ່າວັນນະກັມເລື່ອງອື່ນໆ ແລະກືວ່າເປັນເລື່ອງເອກຂອງວັນນະຄະດີບູຮານຂອງລາວເຮົາ. ສຳນວນທີ່ລິດຈະນາຈາກໃບລານ ໂດຍ ມະຫາສິລາ ວີຣະວົງສ໌ ນັ້ນກືວ່າເປັນສະບັບທີ່ສົມບູນກວ່າໝູ່ ແລະພິມອອກມາຫລາຍເທື່ອ ນັບແຕ່ຊຸມປີ 1940 ເປັນຕົ້ນມາ.

ສ່ວນເລື່ອງສິນໄຊ ສະບັບເປັນຄຳເວົ້າທຳມະດາ ຊຶ່ງດັດແປງໃຫ້ອ່ານງ່າຍ ເໝາະສົມ ກັບຜູ້ອ່ານຣຸ່ນໃໝ່ນີ້ ເລີ່ມພິມເທື່ອທຳອິດເມື່ອປີ 1991 ອັນນີ້ເປັນວິທີພາຜູ້ອ່ານເຂົ້າເຖິງວັນນະຄະດີບູຮານອີກຮູບແບບນຶ່ງ ຊຶ່ງຢູ່ຕ່າງປະເທດກໍເຄີຍເຮັດມາແລ້ວ. ປາກົດວ່າ ເລື່ອງສິນໄຊ ສະບັບດັດແປງເປັນຄຳເວົ້າທຳມະດານີ້ ກໍໄດ້ຮັບຄວາມສົນໃຈ ຢ່າງກວ້າງຂວາງ ຈາກຜູ້ອ່ານທັງໄວໜຸ່ມ ແລະໄວແກ່.

ຄວາມສົນໃຈຂອງຜູ້ອ່ານຕໍ່ວັນນະກຳນັ້ນ ຄືກຳລັງດັນໃນທາງບວກ ສຳລັບວັນນະຄະດີລາວ. ຂໍໃຫ້ທຸກຄົນຊ່ອຍເປັນກຳລັງຊຸກຍູ້ວັດທະນາທຳດ້ານນີ້ໃຫ້ຈະເລີນຍິ່ງໆຂຶ້ນ.

10 ກັນຍາ 1996<br>
*ອຸທິນ ບຸນຍາວົງ*<br>
ຜູ້ຮຽບຮຽງ

# ສິບໄຊ

ເຫລັ້ມ 1

ຂຽນເປັນຄຳເວົ້າທຳມະດາ

**ອຸທິນ ບຸນຍາວົງ**

ຮູບປະກອບ

**ວົງສະຫວັນ ດຳລົງສຸກ**

ຈັດພິມ ໂດຍ

ບໍລິສັດ ດອກເກດ ຈັດພິມ

ດອກເກດ

DokkeD

ພິມຄັ້ງທີ 1 : 1991

ພິມຄັ້ງທີ 2: 1993, ໂຮງພິມວັນນະສິນ, ຈຳນວນ 1500 ຫົວ

ພິມຄັ້ງທີ 3 : 1996

ພິມຄັ້ງທີ 4 : 2004

ຈຳນວນ 4000 ຫົວ

ທະບຽນອະນຸຍາດ ເລກທີ:

ອພ35/ພທປ310798

*ໂຮງພິມ ມັນທາຕຸລາດ, ວຽງຈັນ, 2004*

# ສິນໄຊ

ເຫລັ້ມ 1

ຂຽນເປັນຄຳເວົ້າທຳມະດາ
ໂດຍ ອຸທິນ ບຸນຍາວົງ

ຈັດພິມໂດຍ
ບໍລິສັດ ດອກເກດ ຈັດພິມ ຈຳກັດ

# ເມືອງເປັງຈານ

ຕາມນິທານອັນເລົ່າກັນມາ ແຕ່ດຶນນານນັ້ນວ່າໃຕ້ລຸ່ມຟ້ານີ້ ມີເມືອງເປັງຈານ ຊຶ່ງເປັນລັດກະນະຄອນທີ່ມີອຳນາດເຂັ້ມແຂງ ແຜ່ອິດທິພົນກວມອານາເຂດ ອັນກວ້າງໃຫຍ່ໄພສານ, ຫລາຍໆເມືອງມາອ່ອນນ້ອມ ໂດຍເອົາເຄື່ອງບັນນາການ ມາມອບໃຫ້ເປັນປະຈຳທຸກປີ.


Muang Pengchan



ຕົວເມືອງມີກຳແພງລ້ອມ ແລະ ມີນ້ຳອ້ອມເກືອບທຸກດ້ານ. ຫໍຜາສາດຊູຍອດຊໍ່ຟ້າ ສູງຂຶ້ນໄປຈົນຈຸເມກ ແລະຮຸ່ງເຫລື້ອມເປັນຍິບຍັບ ເມື່ອຕ້ອງກັບແສງຕາເວັນ. ບ້ານເຮືອນປຸກ ລຽນຕິດລຽນຕໍ່ກັນໄປຈົນສຸດສາຍຕາ. ຫລັງຄາວັດເປັນສີເຫລືອງຄຳ ປາກົດໃຫ້ເຫັນຢູ່ເປັນຍ່ານໆ ແລະ ງາມສົດໃສຢູ່ໃຕ້ທ້ອງຟ້າສີຄາມ, ໃຜໄດ້ເຫັນກໍວ່າງາມປານສະຫວັນຊັ້ນດາວະດຶງ.

ປະຊາຊົນຊາວເມືອງເປັງຈານ ມີມາກມາຍອັ່ງອໍ, ຊາວພໍ່ຄ້າພານິດຈາກຕ່າງແດນ ຫລັ່ງໄຫລກັນເຂົ້າມາ ເພື່ອທຳການຄ້າຂາຍຢູ່ຕະຫລອດເວລາ, ບາງພ່ອງເອົາສິນຄ້າມາທາງເຮືອສະເພົາ, ບາງພ່ອງມາທາງບົກ. ເສັ້ນທາງຕ່າງໆມາຈອດກັນທີ່ເມືອງນີ້, ຕະຫລາດຈຶ່ງອຸດົມສົມບູນໄປດ້ວຍ ອາຫານການກິນ ແລະສິນຄ້ານາໆຊະນິດ. ຜູ້ຄົນຍ່າງໄປມາສັບສົນ ສຽງເສບຄົບງັນດັງລະງົມ ເປັນທີ່ມ່ວນແມ້ງອອນຊອນໃຈ ຢູ່ຕະຫລອດເວລາ. ພະສົງອົງລະເຈົ້າທີ່ໄດ້ຮຽນຮູ້ຄຳພີສາສະຫນາທັງຫລາຍ ກໍພາກັນແປພະທຳຄຳສັ່ງສອນ ຂອງພະພຸດທະເຈົ້າ ແລະເທສະຫນາອະທິບາຍ ໃຫ້ປະຊາຊົນທົ່ວໄປເຂົ້າໃຈແຈ້ງ ກ່ຽວກັບສັດຈະທຳ ໃນຄຳສອນເຫລົ່ານັ້ນ. ນັກປາດອາຈານສາຂາຕ່າງໆ ມີຈຳນວນນັບບໍ່ໄຫວ, ພວກເສນາອາມາດ ລ້ວນແຕ່ມີຄວາມຮູ້ ປັນຍາຄວາມສະຫລາດຫລັກແຫລມ ແລະ ປະຊຸມກັນເປັນເນື່ອງນິດຢູ່ຂ່ວງສະຫນາມ ພາຍໃນຫໍໂຮງຂອງຜູ້ເປັນເຈົ້າຄອງນະຄອນ.

# ພະຍາກຸສະລາດ

ບັນດາເສນາອາມາດ, ນັກປາດອາຈານ, ປະຊາລາສະດອນແຫ່ງເມືອງເປັງຈານ ມີຄວາມເຫລື້ອມໃສສັດທາ ແລະຈົງຮັກພັກດີ ຕໍ່ຜູ້ເປັນເຈົ້າຄອງນະຄອນ ຊຶ່ງມີນາມວ່າ ພະຍາກຸສະລາດ. ພະອົງທຳການປົກຄອງບ້ານເມືອງ ດ້ວຍຄວາມຍຸຕິທຳ ແລະ ມີເມດຕາກະລຸນາ ຕໍ່ປະຊາຊົນທຸກກ້ວນຫນ້າ. ດັ່ງນີ້ ພະອົງຈຶ່ງໄດ້ຮັບຄວາມເຄົາລົບນັບຖື ແລະ ການອຸທິດທັງແຮງກາຍ ແລະ ແຮງໃຈຈາກປະຊາຊົນ. ອຳນາດທີ່ເກີດຈາກແຮງສັດທາ ຂອງປະຊາລາສະດອນດັ່ງກ່າວ ເຮັດໃຫ້ຊື່ສຽງຂອງພະອົງ ເປັນທີ່ເກງກົວໄປທຸກແຫ່ງຫົນ ແລະ ລືຊາຜາກົດໄປຮອດເມືອງຍັກ.

ພະຍາກຸສະລາດຢູ່ສະຫນຸກສຸກສະບາຍ ໃນຜາສາດ ແລະ ມີມະເຫສີ ຊຶ່ງມີນາມວ່າ ນາງຈັນທາ. ທັງສອງພະອົງຊົງກະເສມສຳລານ ແວດລ້ອມໄປດ້ວຍຊັບສົມບັດ ເຊັ່ນ ແກ້ວ ແຫວນ ເງິນ ຄຳ ເຄື່ອງປະດັບເອ້ຍ້ອງອັນວິຈິດສວຍງາມ, ອ້ອມຮອບຕົວມີແຕ່ສິ່ງຈະເລີນຕາຈະເລີນໃຈ, ໄປທາງໃດກໍມີບໍລິວານແຫ່ແຫນ. ນອກນັ້ນຍັງມີຊ້າງນັບເປັນພັນໆໂຕ ແຕ່ລະໂຕ ມີງາປະດັບດ້ວຍປອກຄຳ ສີເຫລືອງເຫລື້ອມ, ເຫລົ່າຄວານຊ້າງກຳກັບລ້ຽງ ແລະ ເຝິກແອບຊ້າງຢ່າງຕັ້ງຫນ້າ ຢູ່ເດີ່ນອັນກວ້າງໃຫຍ່ ມ້າຈຳນວນຫລາຍ ກໍຖືກນຳມາແອບໃຫ້ເຂົ້າເປັນຂະບວນ ໂດຍມີທະຫານຖືດາບ ຖືຫອກຂີ່ຢູ່ເທິງຫລັງ. ການເຄື່ອນໄຫວ ທີ່ເປັນຈັງຫວະເພືອບໆ ຂອງຂະບວນສັດດັ່ງກ່າວນີ້ ສະແດງໃຫ້ເຫັນເຖິງ ແສນຍານຸພາບຂອງເມືອງເປັງຈານ ທີ່ບໍ່ມີເມືອງໃດມາທຽບໄດ້.



# ບາງສຸມຸນທາ

ແນວໃດກໍຕາມ ພະຍາກຸສະລາດ ກໍມີຄວາມອຸກອັ່ງ ກັງວົນຢູ່ໃນຫົວໃຈ ເພາະພະອົງ ຍັງບໍ່ທັນມີລູກໄວ້ສືບຫນໍ່ແທນແນວ ເພື່ອທຳການປົກຄອງອານາຈັກ ອັນຮຸ່ງເຮືອງນີ້ສືບຕໍ່ໄປ. ພະອົງບໍ່ມີອ້າຍນ້ອງທີ່ເປັນຊາຍ, ມີແຕ່ນ້ອງສາວຄົນດຽວ ທີ່ໂສມງາມປານອິນແຕ້ມແຕ່ງ ແລະ ພະອົງກໍຮັກແພງນ້ອງສາວຜູ້ນີ້ ປານແກ້ວຕາ, ບາງມີຊື່ວ່າສຸມຸນທາ ກຸລະສະຕີຜູ້ງາມເລີດລ້ຳລືເທົ່າ ຫມື່ນເມືອງ, ເປັນມິ່ງຂວັນຂອງຊາວເປັງຈານ, ສຸມຸນທາ ເປັນເຈົ້າຍິງ ໃນຝັນຂອງເຈົ້າຊາຍທົ່ວທັງທະວີບ ແລະເປັນເຈົ້າຍິງໃນຝັນຂອງຍັກກຸມພັນບຳອີກດ້ວຍ.

ບາງສຸມຸນທາ ໃຊ້ຊີວິດຢູ່ຢ່າງກະເສີມສຳລານ ໃນຫ້ອງຫໍ ທີ່ຕົກແຕ່ງປະດັບປະດາດ້ວຍມຸກ ແລະ ລູກແກ້ວຫລາກສີໃສເຫລື້ອມຍິບຍັບ ຄືດັ່ງດາວໃນທ້ອງຟ້າຍາມລາຕີ. ດອກໄມ້ນາໆຊະນິດ ທີ່ຈັດໄວ້ພາຍໃນບໍລິເວນຫ້ອງຫໍ ແລະຕາມສອງຂ້າງຕຽງ ສົ່ງກິ່ນຫອມບໍ່ມີຍາມເຫີຍ. ນົກນາໆຊະນິດສົ່ງສຽງຮ້ອງ ດັງເຈື້ອຍແຈ້ວ, ມີນົກແຂກແກ້ວ ນົກເຂົາ ນົກຄໍ່ ນົກຍູງ ແລະອື່ນໆ ບາງງາມທັງຮູບໂສມງາມທັງນ້ຳໃຈ ແລະມີຄວາມນິຍົມຫລົງໄຫລໃນທຳມະຊາດ, ອອນຊອນພູຜາປ່າໄມ້ ບຸບຜາມາລີ ແລະຮັກສັດສາວາສິ່ງທັງມວນ.





# ກຸມພັນແຫ່ງເມືອງອະໂນລາດ

ເມືອງທີ່ມີຄວາມເຂັ້ມແຂງ ແລະເປັນທີ່ລືຊາຜາກົດອີກເມືອງນຶ່ງ ກໍແມ່ນເມືອງອະໂນລາດ. ຍັກກຸມພັນ ເປັນຜູ້ປົກຄອງເມືອງນີ້. ບັນດາຍັກທັງຫລາຍໃນແຜ່ນດິນ ພາກັນນັບຖືຢຳເກງ ແລະເອົາສິ່ງຂອງມີຄ່າມາມອບໃຫ້ກຸມພັນ ເພື່ອສະແດງຄວາມນອບນ້ອມຄາລະວະ. ກຸມພັນເປັນຍັກທີ່ມີລິດເດດຫລາຍ ເພາະໄດ້ຮຽນຮູ້ເວດມົນຄາຖາ ມາຢ່າງຄົບກ້ວນ ຊ້ຳຍັງເປັນພີ່ນ້ອງເຊື້ອສາຍຂອງພະຍາເວດສຸວັນ ຜູ້ເປັນເຈົ້າຈອມແຫ່ງຍັກ ຊຶ່ງຢູ່ເມືອງຈາຕູມ. ມັນມັກເວົ້າຊຶກຊາກຢ່າງສະຫາວວ່າ: "ໃຕ້ລຸ່ມຟ້ານີ້ ບໍ່ມີຢ້ານຢ່ອນໃຜເວີ້ຍ !"

ນອກຈາກນັ້ນແລ້ວ ກຸມພັນ ຍັງມີຊັບສົມບັດຢ່າງຫລວງຫລາຍ ເຊັ່ນ ແກ້ວມະນີ, ເງິນ ຄຳ ແລະເຄື່ອງປະດັບທຳໂຮງອື່ນໆ. ເວົ້າໄດ້ວ່າ ມັນມີທຸກສິ່ງທຸກຢ່າງຈົນນັບບໍ່ກ້ວນ, ແຕ່ແນວໃດກໍຕາມ ມັນກໍຍັງຫາຜູ້ເປັນມິ່ງມະເຫສີບໍ່ທັນໄດ້ ຈຶ່ງເປັນພະຍາໂທນ ນອນແລ້ງຢູ່ດຽວດາຍຕະຫລອດມາ.

ກຸມພັນຄິດຄະນຶງຫາ ຜູ້ຈະມາເປັນເມຍ ຢູ່ທຸກເວັນທຸກຍາມ, ບໍ່ຮູ້ວ່າ ຍິງທີ່ເຄີຍຮ່ວມສາຍແນບກັນມາແຕ່ຊາດກ່ອນ ໄປເກີດຢູ່ແຫ່ງຫົນໃດ ຈຶ່ງບໍ່ມີໂອກາດຈວບພໍ້ກັນຈົນປານນີ້, ເມື່ອຄິດຫລາຍກໍກາຍເປັນຄວາມອຸກອັ່ງຮ້ອນຫຸ່ມ ຜໍປານມີໄຟສຸມໃນອົກ ຫລື ປານມີຫມໍ້ນະຮົກຢູ່ໃນໃຈ ຈົນເກືອບຈະທົນທານຕໍ່ໄປບໍ່ໄດ້ອີກ. ແລ້ວກຸມພັນກໍທະຍານຂຶ້ນເທິງຟ້າ ໄປຫາພະຍາເວດສຸວັນ ທີ່ເມືອງຈາຕູມ ເພື່ອຂໍການກຽວ

ກັບ ຜູ້ຈະມາເປັນຄູ່ຊ້ອນບອນຮຽງ. ຜູ້ເປັນເຈົ້າຈອມແຫ່ງຍັກ ຮູ້ສາເຫດຂອງຄວາມອຸກອັ່ງກັງວົນຂອງກຸມພັນ ຈຶ່ງບອກໃຫ້ ຮູ້ວ່າ ນາງໄປເກີດໃນໂລກມະນຸດແລ້ວ ມີຊື່ວ່າ ນາງສຸມຸນທາ ເປັນນ້ອງສາວຂອງພະຍາແຫ່ງ ເມືອງເປັງຈານ ຊຶ່ງເປັນອາ ນາຈັກທີ່ເຂັ້ມແຂງ ມີກຳລັງພົນມາກມາຍຫລວງຫລາຍ, ເດ ຊານຸພາບຂອງພະຍາເມືອງນີ້ ລືກ້ອງໄປໄກ ແລະເປັນທີ່ ເກງກົວຂອງບັນດາເມືອງນ້ອຍໃຫຍ່ໃນແຜ່ນດິນ. ພະຍາເວດ ສຸວັນ ໄດ້ສັ່ງຫ້າມບໍ່ໃຫ້ໄປນຳເອົາມາເປັນເມຽ ເພາະຢ້ານ ເກີດພິພາດບາດຫມາງ ແລ້ວໄພພິບັດຈະລຸກລາມມາເຖິງ ຍັກທັງມວນ.

ຝ່າຍກຸມພັນເວົ້າຢ່າງທ້າທາຍວ່າ ຕົນບໍ່ເຄີຍຢ້ານ ຍ່ອນໃຜ ແລະ ຈະໄປນຳເອົານາງໃຫ້ໄດ້ ເຖິງວ່າຈະຢູ່ໃນໂລກ ມະນຸດກໍຕາມ, ເວົ້າແລ້ວມັນກໍຂໍອຳລາ ພະຍາເວດສຸວັນກັບ ຄືນສູ່ເມືອງອະໂນລາດ ແລະໃຊ້ຫົວຄິດປັນຍາ ຫາວິທີເພື່ອຈະ ໄປເອົານາງສຸມຸນທາ ມາເປັນເມຽຕາມທີ່ຕັ້ງໃຈໄວ້.

ກຸມພັນຄິດຫນັກ ກິນເຂົ້າບໍ່ແຊບ ຈິດວີ່ໃຈວອນຫາຜູ້ ເປັນຍອດຊູ້ໃນຝັນ ຈົນນ້ຳຕາໄຫລອາບແກ້ມ. ມັນຄິດວ່າເປັນ ໄປບໍ່ໄດ້ທີ່ຈະໄປຂໍເອົານາງສຸມຸນທາ ມາເປັນຄູ່ຊີວິດ ເພາະ ເຊື້ອແນວແຕກຕ່າງກັນປານຟ້າກັບດິນ, ມີແຕ່ໄປຈອບລັກ ເອົາເທົ່ານັ້ນ ຈຶ່ງພໍມີທາງໄປສູ່ຄວາມສຳເລັດໄດ້. ມັນເອົາມື ລູບອົກໄປມາ ແລະ ຄິດວ່າ ອິດສາເຍື້ອນຕໍ່ໄປບໍ່ໄດ້ອີກແລ້ວ, ຫົວໃຈມັນປັ່ນປ່ວນ ກະວົນກະວາຍ ປານວ່າຈະແຕກທະລາຍ ຕາຍດັບໄປ. ແລ້ວໃນທີ່ສຸດວັນຫນຶ່ງ ມັນກໍຈັບເອົາອາວຸດອັນ ມີສອນ ແລະກົງຈັກທີ່ມີອານຸພາບຮ້າຍແຮງ ແລ້ວບິນຜະ ຫຍອງ ລ່ວງໄປເທິງຟ້າ ມຸ່ງຫນ້າສູ່ເມືອງເປັງຈານ.

# ລາງຝັນບອກເຫດ

ຄືນນີ້ ພາຍຫລັງຟັງມະໂຫລີ ເປັນທີ່ເບີກບານສຳລານໃຈແລ້ວ ພະຍາກຸສະລາດ ກໍເຂົ້ານອນໃນຫ້ອງບັນທົມ. ຄວາມຄິດຂອງພະອົງຍັງວົນວຽນຢູ່ນຳເລື່ອງ ຜູ້ທີ່ຈະມາສືບທອດລາຊະບັນລັງ ເພາະເມືອງເປັງຈານ ອັນຮຸ່ງເຮືອງເຫລືອງເຫລື້ອມນີ້ ຈຳເປັນຕ້ອງມີຫນໍ່ແນວກະສັດ ຜູ້ປີຊາສາມາດໄວ້ທຳການປົກຄອງສືບຕໍ່ໄປ. ອານາຈັກທີ່ມີມາກມາຍຫລາຍເມືອງ ມາຂຶ້ນສ່ວຍເຊັ່ນນີ້ ເປັນທຳມະດາ ທີ່ພະອົງຕ້ອງເປັນຫ່ວງກັງວົນ ແລະ ຄິດຫນັກ ແມ່ນຢາກໄດ້ບຸດຊາຍຫລາຍໆຄົນ ເພື່ອຈະສົ່ງໄປປົກຄອງເມືອງສ່ວຍເຫລົ່ານັ້ນ. ນາງຈັນທາ ຜູ້ເປັນມະເຫສີ ຍັງບໍ່ທັນມີບຸດໄວ້ໃຫ້ພະອົງຊື່ນຊົມເທື່ອເລີຍ.

ພະຍາກຸສະລາດ ເຊືອບຫລັບໄປ ແລ້ວກໍຝັນວ່າມີແຂກຕ່າງດ້າວທ້າວຕ່າງແດນ ທ່າທາງຄືຍັກເວົ້າຈາຊຶກຊາກ ເຂົ້າມາກະຫວາຍສານ ແລ້ວສວຍໂອກາດກອດງ້າວຟັນພະອົງ ຖືກທີ່ແຂນຂວາ ຈົນເລືອດໄຫລອາບຕົນຕົວ. ເຫດການເປັນໄປຢ່າງບໍ່ໄດ້ຄາດຄິດມາກ່ອນ ພະອົງຢ້ານກົວຈົນຫົວໃຈຫັກຫວາມ ຈຶ່ງຮ້ອງເຫຼີສຽງດັງກ້ອງໄປທົ່ວວັງ. ສຽງເຫຼີໃຫລ ປຸກໃຫ້ຄົນພາຍໃນວັງຕື່ນຂຶ້ນມາ, ນາງຈັນທາ ຜູ້ເປັນມະເຫສີ, ນາງສຸມຸນທາ ຜູ້ເປັນນ້ອງສາວ ແລະ ມະຫາດເລັກທັງຫລາຍ ແລ່ນອີ່ເລີເປີເສີ ໄປຍັງຫ້ອງບັນທົມ ແລ້ວປຸກ

ພະຍາກຸສະລາດໃຫ້ຕື່ນ ຈາກອາການຫລັບໃຫລ. ຜູ້ໃດກໍແຕກ
ຕື່ນຕົກໃຈ, ຫລາຍຄົນຮ້ອງໄຫ້ຫລັ່ງນໍ້າຕາ ເພາະຢ້ານພະຍາ

ກຸສະລາດຈະມີໂພຍໄພ ຈົນເຖິງຂັ້ນເສຽຊີວິດ. ເມື່ອພະອົງ
ຮູ້ເມື່ອຄືງແລ້ວ ກໍພົບວ່າ ມີຜູ້ຄົນມາເຕັມຫ້ອງ, ທຸກຄົນພາ
ກັນນົບນອບຂາບໄຫວ້ ທັງຈົ່ມພາວະນາ ຂໍໃຫ້ພະອົງຫາຍ
ຈາກຄວາມທຸກຮ້ອນທັງປວງ. ພະຍາກຸສະລາດ ຟື້ນຄືນເປັນ
ປົກກະຕິ ແລ້ວກໍໄປອາບນໍ້າ ເພື່ອໃຫ້ຮ່າງກາຍ ແລະ ຈິດໃຈ
ເປັນສຸກສະບາຍ, ບັນດາເສນາອາມາດ ພາກັນເບົາອົກເບົາ
ໃຈສະຫງົບສະຕິອາລົມ ແລ້ວກໍຈັດແຈງຕ້ອນຮັບວັນໃຫມ່ທີ່
ພວມໄຂແຈ້ງ.

ຮຸ່ງຂຶ້ນວັນຕໍ່ມາ ພະຍາກຸສະລາດ ມີຄຳສັ່ງເຕົ້າໂຮມ
ເສນາມຸນຕີນ້ອຍໃຫຍ່ ໃຫ້ມາຮັບຟັງ ການເລົ່າເຫດການໃນ
ຄວາມຝັນ ເມື່ອຄືນທີ່ຜ່ານມາ. ພວກທີ່ຖືກເອີ້ນມານີ້ ມີຜູ້ນຶ່ງ
ເປັນຫມໍໂຫນຫລວງ ຊຶ່ງມີປະສົບການເລື່ອງທຳນາຍ ເຫດ
ການຄື້ວດີເປັນພິເສດ ເມື່ອພະອົງເລົ່າເລື່ອງຄວາມຝັນ ສູ່ທຸກ
ຄົນຟັງແລ້ວ ຫມໍໂຫນກໍທຳນາຍວ່າ ອາການຝັນແບບນີ້ ສະ
ແດງວ່າ ພະອົງຈະສູນເສຽພີ່ນ້ອງເຊື້ອວົງກະສັດ ຜູ້ເປັນທີ່
ຮັກແພງ ພໍປານແກ້ວຕາ, ແຕ່ວ່າຖ້າໄດ້ທຳພະລີກຳ ເພື່ອ
ເສຽເຄາະເສຽເຂັນ ແລ້ວເຫດຮ້າຍກໍຈະບໍ່ມາແຕະຕ້ອງເລີຍ,
ພຽງແຕ່ພະອົງອາດຈະໄດ້ຫ່າງເຫີນ ຈາກນະຄອນເປັງຈານ
ໄປເປັນເວລາເຫິງນານພໍສົມຄວນ.

ເມື່ອຊາບຈາກຫມໍໂຫນເຊັ່ນນັ້ນແລ້ວ ພະອົງກໍສວ່າງ
ໃຈຫາຍກັງວົນ ອາລົມແຈ່ມໃສຂຶ້ນ, ແລ້ວບັນດາເສນາອາ
ມາດ ກໍພາກັນເລີກລາກັບເມືອ.



# ມະໂຫລະສົບທີ່ສວນອຸທິຍານ

ມັນເປັນວັນທີ່ແຈ່ມໃສ ນາງສຸມຸນທາ ອອກໄປຍັງສວນອຸທິຍານ ເພື່ອພັກຜ່ອນຢ່ອນອາລົມ ຕາມທີ່ເຄີຍປະຕິບັດມາ ໂດຍມີຂະບວນແຫ່ແຫນຍາວຍືດ ແລະມີທະຫານມ້າຄອຍລະວັງຮັກສາຄວາມປອດໄພຢ່າງເຕັມກຳລັງ. ອອກໜ້າຂະບວນ ແມ່ນພວກເສບດົນຕີທີ່ບັນເລງເພງ ສຽງດັງສະນັ່ນຫວັ່ນໄຫວ, ມີສຽງຄ້ອງສຽງກອງສຽງແກ ປະສົມປະສານກັນ ດັງກ້ອງກັງວານໄປທົ່ວປ່າດົງພົງໄພ ປຸກໃຫ້ສັບພະສັດທັງຫລາຍ ຕາມສອງຂ້າງທາງ ພາກັນແຕກຕື່ນລະວັງຕົວ, ຝູງນົກບິນເຈີດແຈ້ວ ແລ້ວບິນເວີ່ນຂຶ້ນສູ່ເວຫາ ແລະເບິ່ງຄືວ່າ ແນມລົງມາເບິ່ງຂະບວນແຫ່ ດ້ວຍຄວາມຊື່ນຊົມອອນຊອນ.

ເມື່ອໄປຮອດສວນອຸທິຍານ ການລະຫລິ້ນມະໂຫລະສົບຄົບງັນກໍເປັນໄປຢ່າງເຕັມຂີດ. ສຽງປີ່ ສຽງແກສຽງຊູງ ( ກະຈັບປີ່ ) ດັງປະສານເຂົ້າກັບສຽງຄ້ອງສຽງກອງ ຟັງແລ້ວຄ້າຍຄືວ່າ ອຸທິຍານແຫ່ງນີ້ ລອຍຂຶ້ນໄປເທິງຟ້າ. ພວກນາງນາດຕະສົບຟ້ອນແອ່ນ ເຢາະຢ້ອນແຂນຂາຂຶ້ນລົງເຂົ້າກັບຈັງຫວະສຽງຂັບລຳ, ຮ່າງຄີງກົມງາມປະດັບດ້ວຍຮອດ

ແກ້ວໃສເຫລື້ອມຍິບຍັບ. ຜົມຂອງພວກນາງ ເກົ້າເປັນມວຍ ທານ້ຳມັນຈົນເຫລື້ອມ ຕັດກັບຜິວຂາວນວນປານ ດອກຊ້ອນ ເບິ່ງແລ້ວອອນຊອນຕາ ຄືຈະບໍ່ມີມື້ອື່ນເປັນ.

ພວກບ່າວທີ່ຮ່ວມມາໃນຂະບວນ ຕ່າງກໍພາກັນມ່ວນ ຊື່ນຢ່າງເຕັມອີ່ດ. ເຂົາເຈົ້າເກັບດອກໄມ້ມາຮ້ອຍເປັນພວງ, ນັ່ງເວົ້າຢອກໄຍກັນຕາມພຸ່ມໄມ້, ເອົາດອກໄມ້ສຽບໃສ່ແຊມ ຜົມ ແລະ ຂັບລຳກ້ຽວກັນຢ່າງມີຄວາມສຸກ ທາງໃຈກໍພາວະ ນາໃຫ້ມື້ນີ້ບໍ່ມີຍາມສ້ຽງສຸດເປັນ.

ນາງ ສຸມຸນທາ ມ່ວນຊື່ນຕື່ນຕາໄປກັບສຽງເສບລຳ ແລະ ການຟ້ອນນາດຕະສິນຂອງນາງສາວ ຜູ້ຄືງງາມອ່ອນ ຊ້ອຍຄືດັ່ງ ນາງກິນນະລີ, ອາລົມຂອງນາງອ່ອນໄຫວເມີງໃຈ ກັບກິ່ນຫອມ ດອກໄມ້ ທີ່ພວກບໍລິວານເກັບມາກະຫວາຍ ອັນ ມີທັງດອກຈຸມຈີ ດອກເບັ່ງບານ ເບີຍແຍ້ມທີ່ຮ້ອຍເປັນພົ້ວ ເປັນພວງ. ຄວາມຄິດ ຂອງນາງລ່ອງລອຍໄປໄກ ນາງຮູ້ສຶກ ເປັນສຸກໃຈ ທີ່ເຫັນທຸກຄົນ ມ່ວນຊື່ນສະຫນຸກສະຫນານຢູ່ທ່າມ ກາງພຶກສາຊາດ. ການພັກຜ່ອນຢູ່ອຸທິຍານແຫ່ງນີ້ ດຳເນີນ ໄປຈົນຕາເວັນບ່າຍຄ້ອຍ ແສງແດດອ່ອນລົງ ແລະລົມຍາມ ແລງພັດເຢັນສະບາຍ. ທຸກຄົນມ່ວນຊື່ນໃນຫົວໃຈຈົນລືມເວ ລາ.

ໃນຂະນະທີ່ ສຽງເສບຂັບດັງລະງົມ ກ່ອມໃຫ້ທຸກຄົນ ເບີກບານສຳລານໃຈຈົນລືມເນື້ອລືມຄິງນັ້ນ ງ່າໄມ້ບ່ອນບຶງ ແຄມອຸທິຍານ ກໍໄຫວຕິງຢ່າງຮຸນແຮງ ຄືດັ່ງມີລົມພາຍຸ ພັດຕ້ອງ, ສັດປະຫລາດຊູດລົງມາ ຫອບອູ້ມເອົານາງສຸມຸນ ທາ ແລ້ວທະຍານຂຶ້ນສູ່ເວຫາບິນຫນີໄປ ທ່າມກາງຄວາມ ແຕກຕື່ນຕົກສະເງີ້ຂອງທຸກຄົນ. ສຽງດົນຕີຢຸດລົງຢ່າງກະທັນ

ທັບ, ສຽງຮ້ອງເຫຼືໃຫລອື່ເລີເປີເສີເປັນໄປຢ່າງສັບສົນອົນລະ ຫົນ. ທຸກຄົນມີຫນ້າຫລ່າຕາຕາຍ ຈິດໃຈບໍ່ຢູ່ກັບເນື້ອກັບຄີງ, ຕໍ່ມາ ກໍແມ່ນສຽງຮ້ອງໄຫ້ຫ່ວງຫາ, ສຽງຈົ່ມເສຽດາຍ ແລະ ໂສກເສົ້າເສຽໃຈ ທີ່ຕ້ອງມາສູນເສຽຍິງ ຜູ້ເປັນມິ່ງຂວັນເມືອງ ໄປ ໂດຍບໍ່ຄາດຝັນ.

ຍັກກຸມພັນ ໄດ້ລັກເອົານາງສຸມຸນທາໄປແລ້ວ! ຕົວຈິງ ໄຮ້ນີ້ ໄດ້ມາຈອບຢູ່ປ່າແຄມອຸທິຍານ ຄອຍຫາໂອກາດ ເຫມາະສົມ ແລ້ວປ່ອຍຄາຖາອາຄົມໃສ່ທະຫານຍາມຮັກສາ ໃຫ້ມີຄວາມລະເຫລີງໃຈ ແລະຄວາມຢ້ານກົວ ແລ້ວມັນກໍປະ ຕິບັດຕາມ ຈຸດປະສົງອັນຜິດສິນທຳ ຢ່າງສຳເລັດຜົນ.

ເມື່ອສູນເສຽ ຜູ້ເປັນທີ່ເຄົາລົບນັບຖືເຊັ່ນນີ້ ຄວາມສັບ ສົນຮ້ອນຮົນ ກໍເປັນໄປຢ່າງສຸດຂີດ ປານວ່າເກີດໄຟເຜົາໄຫມ້ ສວນແຫ່ງນີ້, ຜູ້ຄົນໂສ້ເຫລ້ກັນ ແລະ ຫລັ່ງກັບຄືນສູ່ເມືອງ, ມີສຽງຈົ່ມ, ສຽງພາວະນາຫາສິ່ງສັກສິດ ໃຫ້ມາປົກປັກຮັກ ສາ ເພື່ອໃຫ້ນາງສຸມຸນທາ ປອດໄພ ແລະໃຫ້ໄດ້ກັບຄືນມາ ສູ່ບ້ານສູ່ເມືອງ.

ບໍ່ດົນ ຂ່າວຮ້າຍກໍໄປຮອດພະລາຊະວັງ. ເສນາອາ ມາດ ທີ່ພວມປະຊຸມກັນຢູ່ ຕ່າງກໍຮ້ອງຄາງຂຶ້ນ ດ້ວຍຄວາມ ປະຫລາດໃຈ ແລະຕົກໃຈ ເພາະຢ້ານເກີດໂກລະຫົນໄປທົ່ວ ເມືອງ. ບາງຄົນແລ່ນນຳຫາລູກຫາເມຽ, ບາງຄົນຫນ້າຫລ່າ ຕາຕາຍ ເຮັດຫຍັງບໍ່ຖືກ. ເສນາຜູ້ໃຫຍ່ຄົນນຶ່ງເຂົ້າໄປບອກ ພະຍາກຸສະລາດ ກ່ຽວກັບເຫດຮ້າຍທີ່ເກີດຂຶ້ນ ພະອົງໄດ້ຍິນ ຂ່າວ ແລ້ວກໍຫົວໃຈຫັກຫວານ ຮູ້ສຶກປານມີຫອກແຫລມ ແທງອົ້າທີ່ເອິກ, ນ້ຳຕາໄຫລ ແລະ ຈົ່ມຮ່ຳໄຮອອກມາວ່າ:



ບັດນີ້ ເສຽແກ່ນແກ້ວ ສະເຫນີຂວັ້າຂອບເມືອງ ແລນໍ
ແຫນງສູ້ຫວຍຫວງເທັ້ງ ແຫງຕົນຕາຍພໍ່າ ກັບກ້ອນ
ແມ່ນຈັກອິດຢູ່ໄດ້ ມີມື້ວຮ່ອມຄະນຶງ ແທ້ແລ້ວ
ວິບາກແຄ້ນ ຄືດູ່ກິນສະແຫລງ
ແມ່ນຊິເນົາໃນປາງ ບໍ່ສະບາຍເບົາຮ້ອນ.

ບອກຈາກຜູ້ຄົນໂສກເສົ້າອາໄລທາ ນາງສຸມຸນທາ ແລ້ວພວກສັດລ້ຽງນ້ອຍໃຫຍ່ທັງຫລາຍ ກໍພາກັນຢືນຊຶງ ດ້ວຍອາການຫງ່ວມເຫງົາ ແລະບໍ່ກິນເຫຍື່ອອາຫານໃດໆ ຄືກັບວ່າ ຮູ້ສໍານຶກໃນບຸນຄຸນຂອງຜູ້ທີ່ເຄີຍລ້ຽງດູ ຊຶ່ງໄດ້ພັດພາກຈາກໄປ ໂດຍບໍ່ເຫລືອຮ່ອງຮອຍ.

ຝ່າຍນາງສຸມຸນທາ ທີ່ຖືກຍັກອູ້ມເຫາະເຫີນໄປນັ້ນ ກໍມີ ອາການຕົກຄະນາຫນ້າເຫລືອງ ເພາະຄາດບໍ່ເຖິງວ່າ ໄພອັນຕະລາຍຈະມາເຖິງຕົວ. ນາງພະຍາຍາມດີ້ນດັ່ນຂັດຂືນ ແຕ່ກໍໄຮ້ຜົນ ເພາະຍັກກຸມພັນ ມີລິດເດດອາຄົມ ແລະມີກໍາລັງແຮງອັນມະຫາສານ. ນາງປຽບຄືນົກນ້ອຍໃນອີ້ງເລັບອັນແຫລມຄົມ ຂອງຮຸ້ງໃຫຍ່ ເຖິງຈະດີ້ນດັ່ນປານໃດ ກໍບໍ່ມີທາງຫລຸດໄດ້. ແລ້ວນາງກໍປ່ອຍໃຫ້ເປັນໄປຕາມກັມຕາມເວນ. ຈົນໃນທີ່ສຸດ ຍັກກຸມພັນ ກໍເອົານາງໄປຮອດເມືອງຍັກ ຊຶ່ງຜາສາດມີຍອດຊໍ່ຟ້າສີສົ້ວຮຸ່ງໃສ ແລະສູງຈົນພຽງເມກ. ໃນຜາສາດ ເຕັມໄປດ້ວຍຊັບສົມບັດມາກມ່າຍກ່າຍກອງ ເຊັ່ນແກ້ວ, ແຫວນ, ເງິນ, ຄໍາ, ມ້າວ, ແຜ່ນແພໄຫມ ແລະ ເຄື່ອງປະດັບຕ່າງໆ ສົ່ງແສງເຫລື້ອມຍິບຍັບ, ແຕ່ຊັບສົມບັດເຫລົ່ານີ້ ກໍບໍ່ໄດ້ເຮັດໃຫ້ ນາງສຸມຸນທາ ປະເອີບໃຈນໍາແຕ່ຢ່າງໃດ. ກຸມພັນເອົາເຄື່ອງຂອງມີຄ່າຮ້ອຍອັນພັນແນວ ມາກອງຕໍ່



ຫນ້າສຸມຸນທາ ເພື່ອໃຫ້ນາງເລືອກເອົາຕາມໃຈມັກ ແຕ່ນາງກໍເມີນເສີຍ. ມັນພະຍາຍາມເວົ້າອີ່ນອອຍ ໃຫ້ນາງເຊົາຄຽດຄົມ ທັງອັບອາສາເຮັດທຸກຢ່າງ ທີ່ນາງປາກະຫນາ, ມັນວ່າທີ່ໄດ້ເຮັດຜິດຮີດຜິດຄອງໄປ ເພາະຢາກໄດ້ນາງມາເປັນມິ່ງມະເຫສີ.

ນາງສຸມຸນທາ ເວົ້າດ່າມັນວ່າ : " ບັກຍັກໂຂຜີເຜດມຶງເອີຍ, ບໍ່ຕ້ອງມາຕົກະແຫລງເວົ້າ ໃຫ້ໃຈອ່ອນດອກ. ເອົາແຕ່ມຶງຊິເຮັດເທາະ, ກູຫ້າມມຶງບໍ່ໄດ້ດອກ. ກູຄືລູກມັ່ງນ້ອຍໆໃນກົງເລັບຂອງເສືອ... "

ຍັກກຸມພັນ ບໍ່ລົດລະຄວາມພະຍາຍາມ, ມັນເອົາອົກເອົາໃຈ ເອົາພວງດອກໄມ້ອັນຫອມຫວນມາຍົກຍໍໃຫ້ ແລະເຮັດຕາມໃຈນາງທຸກຢ່າງ. ເຖິງແມ່ນມັນຈະມີສາວສະຫນົມຫລວງຫລາຍຈົນນັບບໍ່ໄຫວ ແຕ່ກໍບໍ່ປັກໃຈຫລົງໄຫລນຳຜູ້ໃດນອກຈາກສຸມຸນທາຄົນດຽວ ແລະ ຍໍຍົກນາງຂຶ້ນເປັນເອກມະເຫສີເປັນເທວີແຫ່ງ ເມືອງອະໂນລາດ.

ນາງສຸມຸນທາ ຢູ່ໃນທ່າຈຳໃຈ ເພາະຕົວຄົນດຽວ ຢູ່ທ່າມກາງເມືອງຍັກ, ເປັນເຫຍື່ອ ກຸມພັນ ຜູ້ມີລິດເດດແຂງກ້າ, ທັງໄກຈາກພີ່ຈາກນ້ອງ ຈາກເຊື້ອເຜົ່າພົງພັນ. ນາງກຶກອີ່ນອອຍກ່ອມກົ້ງ ຫລາຍວັນຫລາຍຄືນເຂົ້າ ກໍເລີຍຄືດັ່ງຂີ້ເຜີ້ງໃກ້ໄຟ ຍ່ອມເສື່ອມອ່ອນໄປຕາມສະພາບ, ນາງປົງຕົກໂດຍເຊື່ອວ່າ ເປັນຍ້ອນສາຍແນນແຕ່ປາງກ່ອນ, ໃນທີ່ສຸດ ກໍຝືນອົກຝືນໃຈເປັນເມຍຂອງ ກຸມພັນ ທັງທີ່ເຊື້ອແນວຕ່າງກັນ ຈົນບໍ່ມີຫຍັງປຽບທຽບໄດ້.

# ພະຍາກຸສະລາດອອກບວດ

ນັບແຕ່ນາງສຸມຸນທາ ຖືກຍັກຫລອນລັກເອົາໄປ ຈົນເຖິງດຽວນີ້ ກໍກາຍສາມເດືອນແລ້ວ ແຕ່ພະຍາກຸສະລາດ ກໍຍັງທຸກໂສກ, ກິນເຂົ້າບໍ່ແຊບ ກືນຄໍາໃດກໍແຄ້ນ, ຕົນຕົວຈ່ອຍຜອມຫລ່າເຫລືອງພໍປານໃບຕອງແກ່, ໜ້າຕາບໍ່ຊື່ນບານເອົາແຕ່ຄຶດຫານ້ອງສາວທຸກມື້ທຸກວັນ. ພະອົງບໍ່ມີຈິດໃຈຫ້າວຫັນ ໃນການປົກຄອງບ້ານເມືອງເລີຍ, ມີແຕ່ຄິດຢາກໄປບວດແລ້ວດັ້ນດົ້ນໄປສືບຫານ້ອງສາວ. ເມື່ອຄຶດພິຈາລະນາຢູ່ຫລາຍເວລາແລ້ວ ພະອົງກໍຮຽກເອົາມະເຫສີ, ພວກເສນາມຸນຕີມະຫາດເລັກທັງຫລາຍ ຕະຫລອດສາວສະໜົມທຸກສໍ່າມາຟັງການຕັດສິນໃຈ ຂອງພະອົງ.

" ເຮົານີ້ອຸກອັ່ງ ແຄ້ນເຄືອງໃນໃຈຫລາຍ ຈົນຊິເປັນບ້າປ່ວງ, ດັ່ງນີ້ ຈຶ່ງຊິໄປບວດ ຮັກສາສິນໃຫ້ຈິດໃຈສະຫງົບສາກ່ອນ, ບັດນັ້ນ ຊິອອກເດີນທາງທ່ຽວໄປນໍາສືບຫາເບິ່ງ

ນາງສຸມຸນທາ. ຂໍມອບເມືອງເປັງຈານ ໃຫ້ມະເຫສີ ພ້ອມທັງເສນາຜູ້ໃຫຍ່ທັງຫລາຍ ທຳການປົກຄອງ ສືບແທນຕໍ່ໄປ."

ເມື່ອຮູ້ແຈ້ງຈຸດປະສົງຂອງພະຍາດັ່ງນັ້ນແລ້ວ ທຸກຄົນກໍຕໍ່າຄ້ອຍນ້ອຍໃຈຈົນນ້ຳຕາພັງຍ່າວ. ເສນາຜູ້ໃຫຍ່ກາບທູນຕໍ່ພະອົງວ່າ: "ການທີ່ນາງສຸມຸນທາ ພັດພາກສາບສູນໄປນັ້ນ ສ້າງຄວາມໂສກາອາດູນເປັນທີ່ສຸດແລ້ວ, ບັດນີ້ ພະອົງເອງຈະຈາກໄພ່ພົນໄປອີກ, ແທນງວ່າ ໃຫ້ພວກຂ້ານ້ອຍເອົາຕົວເອງເຂົ້າສູ່ກອງໄຟ ໃຫ້ດັບວາຍໄປຫມົດດີກວ່າ."

ສ່ວນນາງ ຈັນທາ ມະເຫສີກໍເວົ້າວ່າ:

" ໃຫ້ຂ້ານ້ອຍແກຸທົວບວດນຳ ເປັນແມ່ຂາວ. ຂ້ານ້ອຍທົນບໍ່ໄດ້ແທ້ໆ ກໍ່າຢູ່ໂດຍປາສະຈາກພະອົງ ເພາະນັບແຕ່ຢູ່ຮ່ວມກັນມາ ທັງສອງເຮົາບໍ່ເຄີຍພັດພາກຈາກກັນເລີຍ, ອີກປະການນຶ່ງ ຂ້ານ້ອຍເປັນຜູ້ມີບຸນຫນ້ອຍ ຈະຕັ້ງຕົວເປັນຜູ້ປົກຄອງໄພ່ພົນຈຳນວນມະຫາສານນີ້ ຊິເປັນໄປບໍ່ໄດ້. ເມື່ອປາສະຈາກພະອົງແລ້ວ ຂ້ານ້ອຍກໍມີແຕ່ຈະແຫ້ງຫ່ຽວຕາຍ..."

ເຖິງແມ່ນວ່າ ຈະຝືນກັບຈິດໃຈຂອງໄພ່ພົນ ແຕ່ພະຍາກຸສະລາດກໍໄດ້ຄິດຮິ່ນຕອງກີ່ກ້ອນ ແລະຕັດສິນໃຈທີ່ຈະໄປບວດແລ້ວ, ພະອົງຊີ້ແຈງວ່າ ຈະຈາກໄປບໍ່ເຫິງບໍ່ດົນພໍໄດ້ເວລາສົມມາພາຄວນແລ້ວ ກໍຈະກັບຕ່າວຄືນມາ. ພະອົງສັ່ງໃຫ້ເສນາ ຈັດແຈງເອົາເຄື່ອງບໍລິຂານ ສຳລັບບວດກຽມໄວ້ຄົບຖ້ວນທຸກຢ່າງ. ຕໍ່ມາມະຫາດເລັກ ກໍໄດ້ຮັບຄຳສັ່ງໃຫ້ມາແກຸທົວພະອົງ.

ການກະກຽມກອງບວດເປັນໄປຢ່າງຟົດຟື້ນ, ສຽງຄ້ອງສຽງກອງດັງຟົດສະນັ່ນ, ບັນຍາກາດສົດຊື່ນແຈ່ມໃສປາ

ກົດກັບຄືນສູ່ວັງອີກ. ຊ້າງຫລາຍໂຕ ກໍ່ກໍນຳມາແຕ່ງເຄື່ອງແຫ່ພິທີ ເພື່ອເຂົ້າສູ່ຂະບວນແຫ່, ງາຂາວໆປະດັບດ້ວຍປອກຄຳເປັນສີເຫລືອງງາມສະດຸດຕາ. ເມື່ອເຖິງເວລາຕາມທີ່ກຳນົດ ພະຍາກຸສະລາດ ກໍລົງຈາກບັນລັງຄຳຂຶ້ນຂີ່ຊ້າງ ແລ້ວຂະບວນແຫ່ ກໍເປັນສາຍອອກໄປເປັນຍືດໆ... ພວກກອງເສບອັນມີປີ່ ຂຸ່ຍ ແລະ ຫອຍສັງ ກໍບັນເລງສຽງສະນັ່ນຟ້າ, ທະຫານມ້າ ແລະທະຫານຍ່າງກໍ່ ດາບ, ຫອນ, ງ້າວ ຄອຍລະວັງຮັກສາຂະບວນແຫ່ອັນຍືດຍາວ ທີ່ພວມມຸ່ງໜ້າສູ່ວັດຂອງລາຊະຄູໃຫຍ່. ຫົນທາງແປນດີ ແລະ ປູດ້ວຍແຜ່ນແຜຈົນຮອດປະຕູໂຂງວັດ. ໄພ່ພົນໄປຮ່ວມອັ່ງອໍເຕັມວັດ ແລະ ລົ້ນອອກມາຢູ່ນອກວັດກໍຫລວງຫລາຍ. ທຸກຄົນນ້ຳຕາໄຫລ ສະອື້ນໃນໃຈ ເພາະຄິດວ່າ ບ້ານເມືອງເຖິງບັ້ນເວັ້ນຫວ່າງຈາກກະສັດ ໃນເມື່ອພະຍາກຸສະຫລາດ ບວດເປັນພະສົງ.

ຢູ່ວັດ ພະສົງຫລາຍຮູບມາໂຮມກັນຢູ່ໃນສິມ ເພື່ອຈັດພິທີບວດ ເມື່ອພະຍາກຸສະລາດ ຊຶ່ງຢູ່ໃນຊຸດນາກມາຮອດແລ້ວ ກໍເຂົ້າໄປຂາບໄຫວ້ພະອຸປະຊາ. ພິທີດຳເນີນໄປກໍ່ກຕ້ອງຄົບຕາມຂະບວນການ. ບັດນີ້ ພະຍາເມືອງເປັງຈານ ກໍ່ເພດເປັນສົມມະນະ ແລະໄປນັ່ງຢູ່ອາສະນະດ້ວຍອາການສະຫງົບ. ຕໍ່ຈາກນັ້ນບໍ່ດົນ ມະເຫສີ, ເສນາອາມາດ, ບໍລິວານທັງຫລາຍ ແລະປະຊາລາສະດອນ ກໍພາກັນທະຍອຍຕ່າວຄືນດ້ວຍໃບໜ້າຫງອຍເຫງົາ. ບັນຍາກາດ ອັນສຸດເສົ້າໂສກາປົກຄຸມໄປທົ່ວເມືອງເປັງຈານ ປານວ່າຈຸດອະວະສານ ໄດ້ມາເຖິງຂີດໝາຍຂອງມັນແລ້ວ.

# ມະຫາເກຸນອອກເດີນທາງ

ພະຍາກຸສະລາດ ບວດຮຽນຢູ່ວັດນີ້ ດົນນານໄດ້ເຈັດເດືອນ ແລະ ມີຄວາມຮູ້ເລິກເຊິ່ງ ເຖິງຂັ້ນເປັນຍອດໃນທາງທຳມະ. ຄູບາເຊື້ອກະສັດອົງນີ້ມີຊື່ວ່າ ມະຫາເກລະກຸສະລາດ ຫລື ທີ່ຄົນທົ່ວໄປເອີ້ນວ່າ ມະຫາເກຸນ. ທ່ານຕັ້ງໃຈຮຽນຮູ້ພະວິໄນ ແລະ ປະຕິບັດຮີດຄອງຢ່າງເຄັ່ງຄັດ. ແນວໃດກໍຕາມມະຫາເກຸນກໍຍັງ ຄິດຄະນຶງຫານ້ອງສາວ ບໍ່ມີຍາມເຊົາ ແລະ ຕັ້ງໃຈແນວແນ່ ທີ່ຈະນຳໄປຊອກຫາໃຫ້ພົບພໍ້ຈົນໄດ້, ດັ່ງນີ້ຈຶ່ງຂາບລາພະເກລະຕົນເປັນຄູບາອາຈານ ແລ້ວເດີນດຽວເຂົ້າປ່າ ຜ່ານພູສູງ ແລະ ແມ່ນ້ຳຫລາຍສາຍ. ມະຫາເກຸນເລາະໄປເລື້ອຍໆ ຈົນຕົກເຖິງຕ່າງແດນ ອັນເປັນເຂດຂອງພວກຊາວແຍ້. ຊາວພູດອຍທີ່ທ່ຽວໄປຫາມາສູ່ກັນ ກັບຊາວແຍ້ນີ້ ກໍມີຊາວຄາຂຽວ, ຊາວເມືອງຢາເຍີ ແລະ ອື່ນໆ.

ມະຫາເກຸນ ໄປຈົນເຖິງແດນໄກໆ ແຕ່ກໍຍັງບໍ່ພົບຮ່ອງຮອຍຂອງນ້ອງສາວເລີຍ, ຍ່າງແຕ່ເຊົ້າເທົ້າຄ່ຳ ໄປຕາມລຳພັງ, ເມື່ອຮອດບ້ານຄົນ ກໍໄປບິນບາດ ພໍໄດ້ເຂົ້າມາສັນ ແລ້ວກໍຍ່າງຕໍ່ທ່າມກາງປ່າດົງວັງກິດ ເຫັນດອກສ້ຽວບານເຮືອງເຮື່ອຫລາຍກົກຫລາຍກໍ ນັບບໍ່ຖ້ວນ ທັງໄດ້ຍິນສຽງນົກສຽງແມງໄມ້ຮ້ອງດັງແວ່ວໆ... ນົກກາເວົາຮ້ອງດັງກ້ອງພົງໄພ ຄືດັ່ງຮ້ອງຫາຄູ່ ທີ່ພັດພາກຈາກກັນເປັນເວລາດົນນານ - ສຽງນີ້ຍັງເຮັດໃຫ້ ມະຫາເກຸນ ຈິດໃຈວິ່ວອນ ສະທ້ອນອີກສະທ້ອນໃຈ, ນົກເຂົາກໍຂັບສຽງ ປະສານກັບສຽງນົກຍູງ, ນົກໃສ່, ນົກເປົ້າ, ນົກສາລິກາ ແລະອື່ນໆ...



ມື້ນຶ່ງ ມະຫາເກຸນ ມາຮອດນ້ຳຕົກຕາດໃຫຍ່ ແລະ ງົດງາມເປັນຕາອອນຊອນ, ສາຍນ້ຳໄຫລທັ່ງໂງ່ນຫີນ ຕົກລົງເຫວເລິກ ຊຶ່ງພື້ນລຸ່ມເປັນພະລານຫີນຮາບພຽງ, ນ້ຳຟົ້ງເປັນຝອຍເຢັນຊື່ນຕະຫລອດເວລາ. ມີສາລາເກົ່າແກ່ແຄມນ້ຳຫລັງນຶ່ງ ຊຶ່ງປາກົດມີຮ່ອງຮອຍ ຂອງຜູ້ຄົນເຄີຍມາພັກເຊົາຢູ່ກ່ອນໃນບ່ອນນີ້ມາແລ້ວ ມະຫາເກຸນ ພັກຢູ່ສາລານີ້ຄືນນຶ່ງເພື່ອພັກຜ່ອນໃຫ້ເຊົາເມື່ອຍລ້າ ແລ້ວກໍເດີນທາງຕໍ່ເມື່ອຮຸ່ງເຊົ້າມື້ກັດມາ.

# ເມືອງຈຳປາ

ນັບແຕ່ເດີນທາງດັ້ນປ່າຜ່າດົງ ມາເປັນເວລາສາມເດືອນປາຍ ມະຫາເກຸນ ກໍມາຮອດແດນເມືອງຈຳປາ. ພະຍາປົກຄອງເມືອງນີ້ຊື່ວ່າ ພະຍາກາມະທາ. ຕົວເມືອງມີກຳແພງລ້ອມ ແລະ ມີຫໍຄອຍຕັ້ງເປັນຍ່ານໆ ຈຳນວນສາມຮ້ອຍບ່ອນ, ຫໍຄອຍນີ້ມີຫລັງຄາເປັນຮູບຍອດຜາສາດ ແລະມີທະຫານຍາມຄອຍລະວັງ ຢູ່ຕະຫລອດເວລາ, ດ້ານນອກມີນ້ຳອ້ອມອີກຊັ້ນນຶ່ງ. ເມື່ອຫລຽວແຕ່ໄກຈະເຫັນຜາສາດຫລາຍຍອດ ຕ້ອງກັບແສງຕາເວັນຈົບເຫລື້ອມຕາ ແລະ ສະທ້ອນເງົາລົງທີ່ໜ້ານ້ຳ. ວັດໃຫຍ່ຫລາຍວັດພົ້ນເດັ່ນຂຶ້ນ ເຫັນຫລັງຄາສີມ ຮຸ່ງເຮືອງເຫລືອງເຫລື້ອມ, ບ້ານເຮືອນລາສະດອນປຸກລຽນກັນຢູ່ເປັນຍ່ານໆ ສະຫລັບດ້ວຍສີຂຽວອຸ່ມທຸ່ມ ຂອງ



ຕົ້ນຫມາກຕົ້ນພ້າວ ທີ່ເຫນັງນວຍນາຍ ເມື່ອລົມພັດຕ້ອງ.

ຄົນຢູ່ໃນເມືອງນີ້ ມີມາກມ່າຍອັ່ງອໍ, ພໍ່ຄ້າຊາວຂາຍທ່ອງທ່ຽວໄປມາເປັນສິບໆ, ພວກນາຍສະເພົາຈາກຕ່າງເມືອງ ພາກັນຂົນເອົາສິນຄ້ານາໆຊະນິດມາ ຕະຫລາດໃຫຍ່ ແລະ ມີຂອງຂາຍຮ້ອຍອັນພັນແນວ. ສິ່ງອໍານວຍຄວາມສະດວກ ມີຫລາຍຢ່າງ ພາໃຫ້ຄົນໃນເມືອງນີ້ ອັນມີທັງພວກເສດຖີ, ພວກກະດຸມພີ, ພວກພາມ ແລະອື່ນໆ ດໍາລົງຊີວິດຢ່າງມີຄວາມສຸກ, ຢູທ່າງສ້າງສາ ແລະ ທໍາການຄ້າຂາຍຫາລາຍໄດ້. ຊາວຕ່າງແດນທີ່ມາຂຶ້ນສ່ວຍຕໍ່ເມືອງຈໍາປາ ກໍມີພວກຄາຂຽວ, ພວກຢາລາຍ ແລະອື່ນໆ...

ມະຫາເກຸນ ໄປພັກເຊົາຢູ່ວັດນອກເມືອງ. ເຈົ້າຫົວຄູຜູ້ເປັນໃຫຍ່ຢູ່ວັດນີ້ ໃຫ້ການຕ້ອນຮັບ ແລະ ທັກຖາມດ້ວຍໄມຕີຈິດອັນດີ ເພາະທ່າທາງ ແລະ ວາດເວົ້າຂອງ ມະຫາເກຸນເປັນທີ່ເຊື່ອຖື ແລະ ກືກໃຈ. ມະຫາເກຸນ ຜູ້ເດີນທາງບອກວ່າມາຢ້ຽມຢາມເບິ່ງບ້ານ ເບິ່ງເມືອງ ເພາະຄົນເຂົາເລົ່າກັນວ່າ ເມືອງນີ້ສະຫນຸກມ່ວນຊື່ນປານເມືອງຟ້າ ທັງມີເມືອງຕ່າງໆ ມາສ່ວຍຄໍາຕັ້ງຫລວງຫລາຍ ຈົນນັບບໍ່ກ້ອນ. ຊາວບ້ານທີ່ຢູ່ໃນວັດໄດ້ຍິນດັ່ງນັ້ນ ກໍເວົ້າເສີມຕໍ່ວ່າ :

" ມີຫລາຍເມືອງໃນໃຕ້ລຸ່ມຟ້ານີ້ ມາຂຶ້ນສ່ວຍຕໍ່ເມືອງຈໍາປາ, ຕົວຢ່າງ ພວກຄາຂຽວ ທີ່ຢູ່ເຂດພູແຜງມ້າ, ພວກນີ້ທ່ຽວໄປຮອດເມືອງແກຸນ, ເມືອງຢາເຍີ, ໄປຮອດເມືອງຍັກ. ພວກເຂົາທ່ຽວໄປມາແບບຄົນກໍໄດ້ ແບບເຫາະເຫີນໄປກໍໄດ້."

ເມື່ອມີຜູ້ເວົ້າຮອດເມືອງຍັກ ມະຫາເກຸນ ເລີຍສວຍໂອກາດສໍາຖາມຕື່ມອີກ ເພື່ອຊອກຮູ້ລາຍລະອຽດກ່ຽວກັບທີ່ຢູ່ຂອງພວກຍັກ. ເຈົ້າຫົວຄູຊີ້ແຈງວ່າ :

" ຟາກເຂດຂອງພວກຄາຂຽວໄປພຸ້ນ ແມ່ນເຂດແດນຂອງຍັກໃຫຍ່ໂຕຊື່ວ່າ ກຸມພັນ. ມັນເປັນເຊື້ອສາຍຂອງພະຍາເວດສຸວັນ ຜູ້ເປັນເຈົ້າຈອມຂອງຍັກ ທີ່ຢູ່ເມືອງຈາຕູມ. ມັນມີລິດເດດເກັ່ງກ້າພໍປານກັບພະນາລາຍພຸ້ນໃດ !"

ເມື່ອໄດ້ຍິນດັ່ງນີ້ ມະຫາເກຸນ ຈຶ່ງເວົ້າວ່າ :

" ຕາມທີ່ເຈົ້າຫົວຄູເລົ່າມານີ້ ເຫັນວ່າກົງກັບຂ່າວທີ່ຍັກ ໄປລັກເອົານາງສຸມຸນທາ ນ້ອງສາວຄີງໆຂອງພະຍາແຫ່ງເມືອງເປັງຈານ. ຍັກໄປລັກເອົາຕອນມີມະໂຫລະສົບຢູ່ສວນອຸທິຍານ, ຈົນຮອດດຽວນີ້ ຍັງບໍ່ຮູ້ຂ່າວຄາວຂອງນາງເລີຍ. ຜູ້ເປັນອ້າຍໂສກເສົ້າຫງ່ວມເຫງົາຫລາຍ ເພາະຄິດຫວ່ງອາໄລຫານ້ອງ, ດັ່ງນີ້ ຈຶ່ງປະລະເມືອງ ແລ້ວອອກນຳຊອກຫານ້ອງສາວ. ອັນຊ່ຳແຕ່ຄົນທຳມະດານີ້ ຊິໄປສູ້ຮົບຕົບຕີເອົາຄືນຊິໄດ້ບໍ່ ? "

ຕໍ່ເລື່ອງນີ້ ເຈົ້າຫົວຄູອະທິບາຍວ່າ: "ຄົນທຳມະດາບໍ່ສາມາດທຳການຕໍ່ສູ້ເອົາຄືນໄດ້ດອກ ຕ້ອງແມ່ນຫນໍ່ ພະໂພທິຍານ[1] ຜູ້ເປັນເຊື້ອວົງພະພຸດທະເຈົ້າ ທີ່ມີລິດເດດ ພໍປານພະອິນພຸ້ນ ຈຶ່ງຊິເອົາຄືນໄດ້."

ພະເກຸລະທັງສອງ ສົນທະນາກັບຫລາຍເລື່ອງ ຈົນເຖິງເວລາຄ່ຳມືດ ແລ້ວກໍພາກັນໄຕ້ທູບທຽນໄຫວ້ພະສູດມົນແລ້ວເຂົ້ານອນ.

[1] **ພະໂພທິຍານ** : ຜູ້ບັນລຸທຳສູງສຸດ ຫລື ຕັດສະຣູ້ແລ້ວຈະເປັນພະພຸດທະເຈົ້າ.

# ພະຍາກຸສະຫລາດຕ່າວຄືນເມືອງ

ແສງຕາເວັນສ່ອງພົ້ນພູຂຶ້ນມາ ເຫນືອຟ້າເມືອງຈຳປາ ສຽງຕີກັງສະດານ[2] ບອກເວລາບິນບາດ, ພະສົງສາມະເນນ ພາກັນອອກຈາກວັດນັ້ນວັດນີ້ ຍ່າງເປັນແຖວໄປບິນບາດຕາມຄຸ້ມຕ່າງໆ ມະຫາເຖນກຸສະລາດ ຍ່າງໄປຮອດຄຸ້ມອັນເປັນທີ່ຢູ່ຂອງ ນັນທະເສດຖີ ຜູ້ມີລູກສາວເຈັດຄົນ ທີ່ພວມເປັນສາວເຕັມຄີງ, ຜູ້ຫລ້າເອີ້ນກັນວ່າ ນາງລຸນ. ພວກນາງພ້ອມກັນມາໃສ່ບາດທຸກວັນເປັນປະຈຳ, ແຕ່ລະຄົນມີຜິວພັນຜ່ອງໃສຂາວນວນ ປານກີບດອກບົວບານ, ຜົມດຳເຫລື້ອມປານນິນ, ຮ່າງຄີງກົມກ້ຽງປະດັບດ້ວຍ ສາຍສັງວານ

---

[2] **ກັງສະດານ** : ລະຄັງວົງເດືອນຮູບມົນໆຄືເດືອນເພັງ.



ເຫລື້ອມຍິບຍັບ. ທັງເຈັດນາງ ນຸ່ງຜ້າສະໃບສີດອກຄຳ ເອົ້າ ກັບວາດຊົງອ່ອນຊ້ອຍ ຍິ້ມນ້ອຍໆພໍງາມ ທ່າທາງສະຫງຽມ ຄ່ຽມຄົມ. ມື້ນີ້ພວກນາງໄດ້ຕັກບາດໃຫ້ທານ ແດ່ຄູບາຕ່າງ ແດນອົງນຶ່ງ ຊຶ່ງພວກນາງບໍ່ໄດ້ຄິດຫຍັງເລີຍເປັນພິເສດ ກື ວ່າເປັນການປະກອບກິດຈະວັດປະຈຳວັນທຳມະດາ. ແຕ່ວ່າ ທຸກອິລິຍະບົດຂອງພວກນາງ ເປັນພາບປະທັບ ຢູ່ໃນຄວາມ ຊົງຈຳຂອງມະຫາເກຸນ ຕະຫລອດເວລາ.

ພາຍຫລັງ ການບິນບາດເຊົ້າວັນນັ້ນ ມະຫາເກຸນ ກໍຕັດສິນໃຈຕ່າວຄືນເມືອງເປັງຈານ ໄວກວ່າທີ່ຄາດຄະເນໄວ້. ເພິ່ນເອົ້າໄປສັ່ງລາເຈົ້າຫົວຄູ ແລ້ວກໍອອກເດີນທາງ ໂດຍມຸ່ງ ຫນ້າໄປຍັງຂົວຂ້າມແມ່ນ້ຳສາຍນຶ່ງ, ຂົວນີ້ຍາວຫ້າຮ້ອຍວາ ປາກົດຕົວຂຶ້ນມາ ຍ້ອນການອະທິດຖານເນລະມິດຂຶ້ນໄວ້ໂດຍ ພະພົມເມື່ອຄັ້ງປາງປະກົມ. ຢູ່ໃກ້ຫັ້ນມີນ້ຳສ້າງແກ້ວ ຊຶ່ງຜູ້ ຄົນມັກສ່ຽງທວາຍເບິ່ງບຸນວາດສະຫນາ ໂດຍຊອງເບິ່ງເງົາ ໃນນ້ຳ ແລ້ວຈະປາກົດເຫັນເສັ້ນຊາຕາຊີວິດ, ຜູ້ທີ່ສ່ຽງທວາຍ ເບິ່ງຄູ່ຊີວິດ ກໍຈະເຫັນຮູບຜູ້ເປັນຄູ່ຮັກ ປາກົດຕາມຫນ້ານ້ຳ. ເມື່ອໄປຮອດບໍລິເວນດັ່ງກ່າວ ມະຫາເກຸນ ກໍໄປຊອງເບິ່ງນ້ຳ ສ້າງ ແລະ ເຫັນຮູບນາງລຸນ ປາກົດເດັ່ນ, ສ່ວນເອື້ອຍທັງຫົກ ນັ້ນ ປາກົດໃຫ້ເຫັນຢູ່ໄກໆ ຄື ຈັ່ງວ່າໄກເປັນຫລາຍໂຍດ.

ການເດີນທາງຕ່າວຄືນ ເປັນໄປຢ່າງເຮັ່ງຮີບ, ຜ່ານ ທົ່ງນາ ແລ້ວເອົ້າສູ່ປ່າໄພຫນາ ທ່າມກາງສຽງນົກຮ້ອງ ກ້ອງດົງ, ດອກໄມ້ປ່າສົ່ງກິ່ນຫອມຫວນ ເຮັດໃຫ້ຫົວໃຈມະຫາ ເກຸນປັ່ນປ່ວນເອົາອັ່ງ ເພາະມີທັງຄວາມຄິດຫ່ວງຫລັງ, ທັງ ຢາກຫົວ ທັງຢາກໄຫ້ທໍ່ໆກັນ, ຜ່ານບັ້ນເດີນທາງອັນຍາວໄກ ໃນທີ່ສຸດ ເພິ່ນກໍມາຮອດເຂດແດນເມືອງເປັງຈານ.

ຂ່າວກ່ຽວກັບ ການຕ່າວຄືນມາ ຂອງມະຫາເງຸນກູ ສະລາດ ດັ່ງໄປຮອດເມືອງເປັງຈານ ດັ່ງນີ້ ນາງຈັນທາ ຜູ້ ເປັນແມ່ເມືອງ ຈຶ່ງສັ່ງໃຫ້ຈັດໂຮມໄພ່ພົນ ພ້ອມດ້ວຍຊ້າງ ມ້າ ອອກໄປຕ້ອນຮັບ ບັນຍາກາດຟົດຟື້ນຊື່ນບານ ປົກຄອງໄປທົ່ວ ເມືອງອີກເທື່ອນຶ່ງ ພໍປານວ່າ ພະອິນ ພະພົມໄດ້ໂຜດໃຫ້ຝົນ ຕົກລົງມາສູ່ພື້ນດິນ ພາຍຫລັງທີ່ແຫ້ງແລ້ງຕິດຕໍ່ກັນຫລາຍ ປີ. ຂະບວນໄພ່ພົນຫລັ່ງອອກຈາກເມືອງເປັນສາຍຍາວຍືດ ໂດຍມີນາງຈັນທາເປັນຜູ້ນຳພາອອກໄປ. ຂະບວນໄປຢຸດລົງຕໍ່ ໜ້າ ມະຫາເງຸນ ເພື່ອນ້ອມນະມັດສະການ, ທຸກຄົນກົ້ມຂາບ ໄຫວ້ ທັງຫລັ່ງນ້ຳຕາດ້ວຍຄວາມຕື້ນຕັນໃຈ ທີ່ເຫັນກະສັດ ຂອງຕົນ ກັບຕ່າວຄືນມາ. ມະຫາເງຸນ ຖາມສະບາຍທຸກສຸກ ກັບອອກຕົນຍາດໂຍມ ດ້ວຍຄວາມເບີກບານສຳລານໃຈ. ຝ່າຍຜູ້ໄປຕ້ອນຮັບກໍສະແດງຄວາມຮູ້ສຶກ ທີ່ເຕັມປ່ຽມໄປດ້ວຍ ຄວາມຈົງຮັກພັກດີ ແລະຄວາມນອບນ້ອມຄາລະວະ ໂດຍ ກ່າວວ່າ ບ້ານເມືອງຍາມທີ່ຂາດພະອົງນັ້ນ ມັນຄືດັ່ງຕົ້ນໄຮ ທີ່ຢູ່ແຄມຝັ່ງນ້ຳໄຫລ ມີແຕ່ຄອງວັນເວລາທີ່ຈະລົ້ມລົງ ໃນຂະ ນະໃດຂະນະນຶ່ງ, ມັນຄືດັ່ງແຫລວໃຫຍ່ໂຕເກັ່ງກາດ ທີ່ຖືກ ຫລົກປີກອອກຫມົດແລ້ວ ນຳໄປປະໄວ້ທ່າມກາງຂີ້ຕົມ, ມັນ ຄືດັ່ງແຜ່ນດິນ ທີ່ຂາດແສງຕາເວັນ ຍ່ອມປົກຄຸມໄປດ້ວຍ ຄວາມມືດມົນອົນທະການ.

ບັນຍາກາດການຕ້ອນຮັບ ມີຊີວິດຊີວາ, ມະຫາເງຸນ ຂຶ້ນແຢ່ງຊ້າງ ແລ້ວຂະບວນແຫ່ ກໍມຸ່ງຫນ້າເຂົ້າສູ່ໃນເມືອງ. ທຳອິດ ພະອົງໄປພັກຢູ່ວັດໃຫຍ່, ພວກເສນາມຸນຕີ ກໍພາກັນ ມາຫ້ອມລ້ອມ ເພື່ອຂາບໄຫວ້ ແລະ ຖາມຂ່າວຄາວກ່ຽວກັບ ນາງສຸມຸນທາ. ມະຫາເງຸນເລົ່າວ່າ ນັບແຕ່ອອກຈາກເມືອງ

ໄປເປັນເວລາດົນນານ ໄດ້ຜ່ານໄປຫລາຍອົງເຂດ ແລະ ໄປຮອດເມືອງຈຳປາ. ເມືອງນີ້ຕິດຕໍ່ພົວພັນ ກັບຫລາຍເມືອງຫລາຍເຊື້ອຊາດ ອັນມີເມືອງແມນ, ເມືອງມ່ານ, ເມືອງທໍ້, ຕະຫລອດຮອດເມືອງຟ້າຕໍ່ອັນເປັນແດນຜີ ເປັນທີ່ເລົ່າລືກັນມາວ່າ ຟາກເຂດນັ້ນໄປອີກແມ່ນແດນຂອງພະຍາຍັກ. ບາງສຸມຸນທາ ອາດຊິຕົກໄປຢູ່ແດນ ຂອງພວກຍັກກຸມພັນ. ເປັນເລື່ອງສຸດວິໄສ ທີ່ຄົນທຳມະດາຈະໄປນຳເອົາຄືນມາໄດ້, ແຕ່ເຈົ້າຫົວຄູຢູ່ວັດແຫ່ງນຶ່ງ ທີ່ເມືອງຈຳປາບອກວ່າ ກ້າມີເຊື້ອແນວເປັນໜໍ່ພະໂພທິຍານ ກໍສາມາດໄປຜາບຍັກລົງ ແລ້ວເອົານາງຄືນມາໄດ້.

ມະຫາເກຸນ ເລົ່າເຫດການຕ່າງໆ ທີ່ໄດ້ພົບພໍ້ ແລະ ຊີ້ແຈງຈຸດປະສົງຂອງພະອົງ ໃຫ້ທຸກຄົນຮູ້. ບັນດາເສນາມຸນຕີຕ່າງໆ ກໍຟັງດ້ວຍຄວາມຕື່ນເຕັ້ນສົນໃຈ ແລະ ມີຄວາມກະຕືລືລົ້ນ ທີ່ຈະປະຕິບັດຄຳສັ່ງ ເພື່ອໃຫ້ເກີດດອກອອກຜົນ.

ຊາວເມືອງເປັງຈານ ທີ່ເຄີຍປະສົບພາວະເວັ້ນຫວ່າງກະສັດມາລະຍະນຶ່ງ ມາບັດນີ້ ເຂົາເຈົ້າປາກະໜາຍຢ່າງແຮງກ້າ ໃຫ້ພະອົງກັບຄືນສູ່ລາຊະບັນລັງອີກ. ດັ່ງນີ້ ມະຫາເກຸນກຸສະລາດ ຈຶ່ງຈຳຕ້ອງລາສິກອອກມາ ເພື່ອຈະເປັນພະຍາຄອງເມືອງຕາມເດີມ ເພື່ອເປັນສິລິມຸງຄຸນ ແລະ ເປັນໄປຕາມຮີດຄອງປະເພນີ, ພວກເສນາອາມາດ ຕະຫລອດໄພ່ພົນກໍພ້ອມກັບຈັດພິທີອຸປະພິເສກ ຫົດສົງໃຫ້ພະອົງຂຶ້ນສະເຫວີຍລາດ ຢ່າງສະຫງ່າຜ່າເຜີຍ. ວັນນັ້ນ ເປັນວັນສຸກ ເວລາງາຍອັນເປັນຍາມໄຊຍະໂຊກ, ກອງດຸລິຍາງບັນເລງເພງສຽງກ້ອງສະນັ່ນ, ສຽງກອງຕະໂພນ ແລະ ກອງຫາງດັງກ້ອງໄປໄກ ປະສານເຂົ້າກັບສຽງສັງ, ສຽງພິນ, ສຽງໄຄ້, ສຽງ

ແຄນ ແລະ ສຽງອູ່ຍ ປຸກໃຫ້ຫມົດເມືອງຕື່ນຂຶ້ນມີຊີວິດຊີວາ. ພະຍາກຸສະລາດ ຂຶ້ນຂີ່ຊ້າງຊື່ວ່າ ພາຍຂວັນ ຊຶ່ງປະດັບປະດາດ້ວຍ ລູກແກ້ວມະນີສີຮຸ່ງໃສ ທີ່ຮ້ອຍເປັນເສັ້ນ ແລະ ແຂວນໄວ້ເປັນຮາວ ຕາມສອງຂ້າງໂຕຊ້າງ, ເສັ້ນສາຍຄໍາ ຂຶງຜ່ານໄປທາງທ້າຍ, ງາປະດັບດ້ວຍປອກຄໍາ ສຸບລຽນກັນ ກີ່ງ ນາງຈັນທາ ຂຶ້ນຂີ່ຊ້າງກ່າວ[3] ຊື່ວ່າ ມະນີນິນ ຊຶ່ງຕົບໂຕ ປະດັບດ້ວຍດາວຄໍາ ເຮັດເປັນຮູບນາກຢູ່ທັງສອງຂ້າງ, ສ່ວນ ພວກນາງສະຫນົມຫລາຍຄົນ ຂຶ້ນຂີ່ຊ້າງພັງ[4] ແລ້ວຂະບວນ ແຫ່ກໍມຸ່ງຫນ້າສູ່ສະຫນາມໄຊ ໂດຍມີພວກທ້າວຂຸນຂີ່ມ້າກີ ແສ້ ຄອຍລະວັງຮັກສາຄວາມສະຫງົບຕາມທົນທາງ ຊຶ່ງປູ ດ້ວຍແພລາຍ, ບໍ່ດົນຂະບວນແຫ່ກໍມາຮອດສະຫນາມໄຊ ຊຶ່ງ ໄດ້ຮັບການກະກຽມໃຫ້ສະຫງ່າງາມຈະເລີນຕາ ປະດັບປະ ດາດ້ວຍ ເສດຕະສັດເຫລືອງເຫລື້ອມ. ພະຍາລົງຈາກຫລັງ ຊ້າງ ແລ້ວເຂົ້າສູ່ຫໍສົງ ໂດຍມີພາມພາພະອົງ ໄປນັ່ງລົງ ເທິງອາສະນະທີ່ເຮັດດ້ວຍແກ້ວ ຢູ່ໃຕ້ຮາງລິນຄໍາ. ເມື່ອພະ ອົງນັ່ງຮຽບຮ້ອຍແລ້ວ ສຽງກອງກໍດັງຂຶ້ນຕຶ້ງໆ, ພະເຖລະຜູ້ ໃຫຍ່ກໍເອົາກະອອມນໍ້າຫອມ ກອກລົງຮາງລິນ ເປັນການ ເລີ່ມຕົ້ນຫົດສົງ, ຕໍ່ຈາກນັ້ນ ກໍແມ່ນບັນດາເສນາມຸນຕີ ແລະ ບໍລິວານທັງຫລາຍ ທໍາການຫົດສົງຕໍ່ໆກັນມາ. ນໍ້າຄັນທະ ເສນ[5] ໄຫລລົງຮາງລິນສົ່ງກິ່ນຫອມກຸ້ມໄປທົ່ວຜາສາດລາຊະ

[3] **ຊ້າງກ່າວ** : ຊ້າງຫນຸ່ມພວມທັນມັງ.

[4] **ຊ້າງພັງ** : ຊ້າງແມ່

[5] **ຄັນທະເສນ** : ນໍ້າຫອມ.

ວັງ. ໄພ່ພົນທີ່ມາຮ່ວມພິທີຢ່າງຄັບຄາຫນາແຫນ້ນ ຮ້ອງສິ່ງ ສຽງສາທຸການດັງຟົດສະນັ່ນ. ຂະນະທີ່ ການຫົດສົງດຳເນີນ ໄປນີ້ ກໍມີການຫວ່ານກັບລະພຶກ ໂດຍໃຊ້ ເງິນ ຄຳ ເປັນຈຳ ນວນຫລວງຫລາຍ.

ຜູ້ຄົນພາກັນຍາດແຍ່ງ ເອົາໃຜເອົາລາວ ຈົນຜູ້ ສິ້ນເຂັ່ຽປະຮ່າງຄືງເປົ່າເປືອຍໄປ ກໍມີ.

ເມື່ອການຫົດສົງສຳເລັດລົງ ພະອົງກໍອອກມານັ່ງທີ່ ບັນລັງຄຳ ທ່າມກາງສຽງດົນຕີ ເສບງັນ ດັງລະງົມພໍປານ ເມືອງສະຫວັນ. ຜູ້ຄົນທີ່ມາເຝົ້າແຫນແຫ່ ເຕັມໄປທົ່ວຫ້ອງ ອັນກວ້າງໃຫຍ່. ນັບເປັນພິທີໃຫຍ່ໂຕມະໂຫລານ ຊຶ່ງມີຄວາມ ຫມາຍສຳຄັນ ຕໍ່ຊາວເມືອງເປັງຈານເປັນຢ່າງຍິ່ງ. ພວກ ພາມຍົກມືຂຶ້ນເປັນຊອນລອນ ທັງກ່າວຄຳກະຫວາຍພອນໄຊ. ພວກເສນາມຸນຕີນ້ອຍໃຫຍ່ຫລັ່ງໄຫລ ເຂົ້າໄປກະຫວາຍທຽນ ຈົນຄົບ ແລ້ວພິທີກໍອັດລົງ.

ພະຍາກຸສະລາດ ຂຶ້ນສະເຫວີຍລາດ ເປັນເຈົ້າຄອງ ເມືອງເປັງຈານສືບຕໍ່ໄປອີກດັ່ງເດີມ.

# ບັ້ນແຕ່ງດອງ

ບັບແຕ່ອື້ນສະເຫວີຍລາດຄືນໃຫມ່ ເປັນຕົ້ນມານີ້ ພະຍາກຸສະລາດ ປາກົດວ່າ ຢູ່ກະເສມສຳລານດີ, ແຕ່ໃນສ່ວນເລິກຂອງຫົວໃຈແລ້ວ ພະອົງຄິດຄະນຶງຫານາງທັງເຈັດ ບໍ່ມີຍາມເວັ້ນຫວ່າງ, ຈິດໃຈປວດກະສັບດັ່ນດິ້ນ, ຍາມກິນຍາມນອນ ມີແຕ່ຄິດອາວອນໂອ້ອາວຫາ.

ພະອົງເລົ່າຄວາມຈິງ ທີ່ໄດ້ໄປພົບເຫັນລູກສາວທັງເຈັດ ຂອງເສດຖີຢູ່ເມືອງຈຳປາ ສູ່ພວກເສນາອາມາດຟັງວ່າ ພວກນາງເຫລົ່ານັ້ນ ງາມປານນາງຟ້າ, ຜູ້ກົກຊື່ວ່າ ນາງປະທຸມມາ, ຜູ້ນ້ອງຫລ້າຊື່ວ່າ ນາງລຸນ. ທ່າທາງກິລິຍາວາດແຕ່ງອົງຊົງເພດຂອງພວກນາງ ສົມເປັນກຸລະສະຕີແລະເຫມາະສົມທີ່ຈະເອົາມາເປັນມິ່ງມະເຫສີ, ພໍ່ເປັນຄົນຊັ້ນຊັ້ນພານ ຊື່ວ່າ ນັນທະເສດຖີ ຊຶ່ງເປັນເຊື້ອວົງພີ່ນ້ອງຂອງພະຍາກາມະທາ ຜູ້ເປັນພະຍາປົກຄອງເມືອງຈຳປາ. ດັ່ງນີ້ ພະອົງຈຶ່ງໂອ້ລົມກັບເສນາອາມາດ ເກືອງຄວາມເຫມາະສົມ ແລະຄວາມເປັນໄປໄດ້ ທີ່ຈະສົ່ງທູດໄປຂໍເອົານາງທັງເຈັດ ມາເປັນ

ມະເຫສີ ເພື່ອຫວັງຈະມີບຸດໄວ້ສືບແທນລາຊະບັນລັງໃນອະນາຄົດ. ພວກເສນາອາມາດນ້ອຍໃຫຍ່ທັງຫລາຍ ຕ່າງກໍຍິນດີ ບໍ່ມີສິ່ງຂັດຂ້ອງໃດໆ ແລະຂັນອາສາທີ່ຈະໄປເຈລະຈາຂໍເອົານາງມາໃຫ້ໄດ້ ຕາມຈຸດປະສົງຂອງພະອົງ.

ເມື່ອເຫັນວ່າ ສະພາບການເປັນທີ່ອຳນວຍ ແລະ ໂອກາດເຫມາະສົມມາຮອດແລ້ວ ພະອົງກໍສັ່ງໃຫ້ເສນາຜູ້ໃຫຍ່ທີ່ຮູ້ຈັກຮີດບ້ານຄອງເມືອງດີ ພິຈາລະນາເບິ່ງສິ່ງທີ່ຈະເອົາເປັນເຄື່ອງບັນນາການໄປຍັງເມືອງຈຳປາ ເພື່ອສູ່ຂໍຕາມປະເພນີໃຫ້ສົມກຽດ ແລະ ຊື່ສຽງ. ມີການຕົກລົງ ເອົາເຄື່ອງບັນນາການຊຶ່ງປະກອບດ້ວຍ ຊ້າງພັນໂຕ, ມ້າພັນໂຕ, ງົວແມ່ພັນຄູ່ກັບທັງຄົນລ້ຽງສັດເຫລົ່ານີ້ ຢ່າງຄົບກ້ວນ, ນອກນັ້ນຍັງມີເງິນ ແລະ ຄຳ ຫນັກພັນຊັ່ງ[6] ຂຸນຄອນ ແລະ ຂຸນສີໄດ້ຮັບການແຕ່ງຕັ້ງໃຫ້ເປັນທູດໄປເຈລະຈາສູ່ຂໍ ແລະ ນຳເຄື່ອງບັນນາການດັ່ງກ່າວໄປຍັງເມືອງຈຳປາ.

ເມື່ອໄດ້ລືກງາມຍາມດີ ສອງຂຸນກໍພາຂະບວນອອກເດີນທາງ ໂດຍມີໄພ່ພົນຮັກສາຄວາມປອດໄພໄປນຳຈຳນວນພັນຄົນ.

ຂະບວນຊ້າງເປັນແຖວຍາວ ຍ່າງໄປເປັນຍວຍໆຕິດໆຕໍ່ໆກັນ, ທັງຫມົດຂະບວນຫລັ່ງໄຫລອອກຈາກຕົວເມືອງຜ່ານເຂດທົ່ງນາ ແລ້ວກໍເຂົ້າສູ່ເຂດປ່າໄມ້ດົງຫນາ, ມີຕົ້ນຄໍ້, ຕົ້ນແຄຜາ, ຕົ້ນຍາງສູງຈົນສຸດຢັ້ງມ[7] ດອກໄມ້ພວມບານເຮືອງເຮື່ອ, ດອກງິ້ວບານເປັນສີແດງ ງາມເດັ່ນເດຽລະດາດ

---

[6] **ຊັ່ງ** : ຫນັກ 80 ບາດ.

[7] **ສຸດຢັ້ງມ** : ແຫງນເບິ່ງຈົນສຸດຂີດເທົ່າທີ່ຈະແຫງນໄດ້.





ຢູ່ທົ່ວ, ດອກຄະຍອມບານເປັນສີເຫລືອງ ພວມຂຸຫລົ່ນລົງດິນ. ນົກກາເວົ້າຮ້ອງສຽງດັງວ່ອນໆ ສະທ້ອນໄປທົ່ວປ່າ ເຮັດໃຫ້ສອງຂຸນຄຶດຮອດ ຄອບຄົວທີ່ປະລະໄວ້ເບື້ອງຫລັງເປັນທີ່ສຸດ. ແນວໃດກໍຕາມ ເພື່ອເຫັນແກ່ວຽກງານຕາມຫນ້າທີ່ ສອງຂຸນເວົ້ານຳກັນວ່າຕ້ອງຮີບຮ້ອນໄປໃຫ້ເຖິງຈຸດຫມາຍໄວໆ ເພາະເສັ້ນທາງຍາວໄກ ແລະຢ້ານວ່າ ໄພ່ພົນຈະຂາດເຂີນສະບຽງອາຫານ ຖ້າວ່າມີການຊັກຊ້າແກ່ເວລາໃຫ້ຍາວໄປ.

ເຖິງເວລາຄ້ອຍຄ່ຳລົງແລງ ສອງຂຸນປ່າວເຕືອນໃຫ້ໄພ່ພົນພັກເຊົາເອົາແຮງ ຈັດການດັງໄຟແຕ່ງກິນໃຫ້ແລ້ວກ່ອນຈະຄ່ຳ, ອີກສ່ວນນຶ່ງ ກໍຈັດແຈງແປງທີ່ພັກນອນແຮມຄືນໄວ້ ຕາມກ້ອງຕົ້ນໄມ້ ຫລື ກ້ອງງ່ອນຜາ ແລ້ວກໍພັກຜ່ອນຊຳຊາຮອດມື້ເຊົ້າວັນໃຫມ່ ແລ້ວຈຶ່ງອອກເດີນທາງຕໍ່ໄປ. ຂະບວນອັນຍາວຍືດ ຊຶ່ງມີທັງຄົນ ແລະ ສັດເດີນດຸ່ງຫນ້າມື້ຕິດມື້ຕໍ່, ຜ່ານຫລາຍປ່າໂຄກ, ດົງຕຶບ ແລະ ຫ້ວຍຮ່ອງຈົນນັບບໍ່ໄຫວ, ເວລາຜ່ານໄປເປັນເດືອນ ຈຶ່ງມາເຖິງແຄມແມ່ນ້ຳຍົມ, ຈາກບ່ອນນີ້ ກໍແນມເຫັນ ເມືອງຈຳປາ ຮຸ່ງເຫລື້ອມຍິບຍັບຢູ່ໃຕ້ທ້ອງຟ້າອັນສົດໃສ. ຜູ້ເດີນທາງຕ່າງກໍໂລ່ງໃຈ ເພາະຈຸດຫມາຍປາຍທາງປາກົດຢູ່ຕໍ່ຫນ້າແລ້ວ. ອີກເທື່ອນຶ່ງ ຂະບວນໄດ້ຢຸດເຊົາເປັນຕອນສຸດທ້າຍ ກ່ອນຈະນຳສານເຂົ້າໄປຍັງຕົວເມືອງ ຂຸນຄອນກັບຂຸນສີ ປຶກສາຫາຮູ້ນຳກັນແລ້ວ ກໍພາຄະນະກິສານມຸ່ງຫນ້າສູ່ ພະລາຊະວັງ ທ່າມກາງປະຊາຊົນຊາວເມືອງຈຳປາມາຫຸ້ມລ້ອມ ເບິ່ງຢ່າງຄັບຄັ່ງອັ່ງອໍ, ຊາວເມືອງພາກັນແຕ່ງເພດດ້ວຍອາພອນອັນສວຍງາມ ເປັນພິເສດ ແລະ ຕ້ອນຮັບແຂກເມືອງ ດ້ວຍອັດທະຍາໄສອັນອົບອຸ່ນ. ພວກຜູ້ສາວກໍສົ່ງສຽງເວົ້າຢອກໄຍຢ່າງມ່ວນຊື່ນ ກັບ

ພວກຜູ້ບ່າວ ທີ່ຮ່ວມມາໃນຄະນະແຂກເມືອງ. ສອງຂຸນຍ່າງອອກຫົວແຖວໄປຍັງສຳນັກຂອງ ມະຫາເສນາ ຜູ້ສຳເລັດລາຊະການບ້ານເມືອງ ແລະ ແຈ້ງຈຸດປະສົງຂອງການມາຢ້ຽມຢາມຄັ້ງນີ້ ໂດຍບອກວ່າ ພະຍາກຸສະລາດ ຜູ້ຄອງເມືອງເປັງຈານ ປະສົງຢາກໄດ້ລູກສາວທັງເຈັດຂອງນັນທະເສດກີໄປເປັນມະເຫສີ ເພື່ອຫວັງໄດ້ຜູ້ສືບຫນໍ່ແທນແນວ ທີ່ເປັນເຊື້ອວົງກະສັດ ແຫ່ງເມືອງຈຳປາ, ອີກທັງຍັງເປັນການສ້າງສະພານແຫ່ງມິດໄມຕີ ລະຫວ່າງສອງແຜ່ນດິນນີ້ ໃຫ້ຈະເລີນງອກງາມຕະຫລອດໄປ ຊົ່ວກາລະນານ. ເພື່ອຈຸດປະສົງອັນສູງສົ່ງດັ່ງກ່າວນີ້ ພະຍາກຸສະລາດ ມີສານເຖິງ ພະຍາກາມະທາ, ດັ່ງນີ້ ຈຶ່ງຂໍໃຫ້ມະຫາເສນາຜູ້ເປັນກົກ ເປັນເຄົ້າຊ່ອຍແນບນຳ ແລະ ອຳນວຍໃຫ້ບັນລຸຜົນຕາມຄວາມມຸ່ງມາດປາຖະຫນາດັ່ງກ່າວນີ້ດ້ວຍ.

ຝ່າຍມະຫາເສນາສະແດງຄວາມຍິນດີ ທີ່ສອງແຜ່ນດິນນີ້ ມີນະໂຍບາຍຂອດຮັກຂອດແພງຊຶ່ງກັນແລະກັນ ແລະວ່າທີ່ສອງຂຸນກືສານມານີ້ ເປັນການຖືກຕ້ອງຕາມຮີດຄອງທີ່ປະຕິບັດກັນມາແຕ່ບູຮານນະການແລ້ວ. ມະຫາເສນາພ້ອມທັງຂຸນນາງຜູ້ໃຫຍ່ແຫ່ງເມືອງຈຳປາ ນຳເອົາເນື້ອໃນຂອງສານ ແຈ້ງຕໍ່ພະຍາກາມະທາ ຢ່າງລະອຽດ. ພະອົງມີຈິດໃຈເບີກບານມ່ວນຊື່ນ ແລະ ສັ່ງໃຫ້ນຳແຂກເມືອງເຂົ້າພົບໃນວັນນັ້ນ ແລ້ວມະຫາເສນາກໍແຕ່ງໃຫ້ຂຸນຈັນ ເສນາຜູ້ນ້ອຍພາແຂກເມືອງເຂົ້າສູ່ທໍ່ສະຫນາມ ພ້ອມດ້ວຍເຄື່ອງບັນນາການຄົບກ້ວນ ເພື່ອທຳພິທີກະຫວາຍທຽນແກ່ກະສັດ ຜູ້ຄອງເມືອງຈຳປາ.

ຂຸນຄອນ ແລະ ຂຸນສີ ແຕ່ງຕົວດ້ວຍເຄື່ອງນຸ່ງສີສົດໃສ ພາກັນຂີ່ມ້າ ໂດຍມີຂຸນຈັນ ເປັນຜູ້ນຳພາເຂົ້າໄປຍັງທ່ສະໜາມ ທ່າມກາງຜູ້ຄົນເຕັມບໍລິເວນ. ທັງສາມຂຸນລົງຈາກມ້າ ແລ້ວກໍເຂົ້າໄປໃນຫ້ອງອັນກວ້າງຂວາງ ສະຫວາດສະເຫວີຍ. ຂຸນຄອນ ແລະ ຂຸນສີ ເອົາເຄື່ອງບັນນາການອັນມີເງິນ ແລະ ແພໄໝ ມອບແກ່ມະຫາເສນາກ່ອນ, ແລ້ວຕໍ່ມາມະຫາເສນາກໍພາແຂກເມືອງເຂົ້າກະຫວາຍທຽນແກ່ ພະຍາກາມະທາ. ໃນການກະຫວາຍທຽນນີ້ ນອກຈາກສານແລ້ວກໍມີເງິນນຶ່ງໝື່ນ ແລະ ຄຳພັນກ້ອນ. ພະຍາກາມະທາ ໃຫ້ການຕ້ອນຮັບແຂກເມືອງ ດ້ວຍອັດທະຍາໄສ ອັນດີຍິ່ງ ແລະ ກ່າວວ່າ

"ພະຍາກຸສະລາດ ທີ່ສະເຫວີຍລາຊະສົມບັດ ຢູ່ເມືອງເປັງຈານ ພຸ້ນ ຍັງຢູ່ສຸກສະບາຍດີບໍ?"

ຂຸນຄອນຍົກມືໃສ່ຫົວແລ້ວຕອບໄປວ່າ :

"ເພິ່ນຍັງຢູ່ສະບາຍດີທຸກປະການ, ແຕ່ເພິ່ນກໍຍັງມີຄວາມປະສົງທີ່ເໜືອສິ່ງອື່ນໃດຢູ່ບໍ່ເລີກບໍ່ແລ້ວ ນັ້ນກໍຄືຢາກໄດ້ນາງທັງເຈັດ ຊຶ່ງເປັນລູກສາວຂອງ ນັນທະເສດຖີ ຜູ້ເປັນເຊື້ອສາຍ ຂອງພະຍາ ໄປເປັນມິ່ງມະເຫສີ. ດັ່ງນີ້ ຂ້ານ້ອຍຈຶ່ງໄດ້ຂ້າມພູຂ້າມດອຍ ລ່ວງມາຮອດພີ້ ໂດຍນຳເອົາເຄື່ອງບັນນາການມາກະຫວາຍ ແລະ ຫວັງວ່າພະຍາຈະກະລຸນາເຫັນດີຕາມພະປະສົງດັ່ງກ່າວດ້ວຍ."

ພະຍາກາມະທາ ຮັບຟັງເລື່ອງລາວ ດ້ວຍຄວາມປິຕິຍິນດີ ແລະ ກ່າວວ່າ : "ເມືອງເປັງຈານນັ້ນ ຂາດເຂີນເຊື້ອແນວນາງກະສັດຊັ້ນບໍ ພວກເຈົ້າທັງສອງ ຈຶ່ງຈຳຕ້ອງດັ້ນດົ້ນມາຮອດແຫ່ງນີ້. "

ຂຸນຄອນຕອບວ່າ: " ຜູ້ສາວທີ່ເປັນເຊື້ອແນວໜໍ່ກະສັດກໍຫລາຍນັບເປັນພັນ ແຕ່ເບິ່ງຄືວ່າ ບໍ່ມີນາງໃດເປັນທີ່ພໍໃຈຂອງເພິ່ນເລີຍ, ເພິ່ນແນມມາແຕ່ກໍ້າຝ່າຍເມືອງຈຳປາພີ້ຕະຫລອດເວລາ. ກ້າພະຍາຕອບປະຕິເສດ ຫລື ສະແດງຄວາມຂັດຂ້ອງແນວໃດແນວນຶ່ງ ຊຶ່ງເຮັດໃຫ້ຄວາມຫວັງພັງທະລາຍແລ້ວ ຈັ່ງໃດພະຍາກຸສະລາດ ກໍຄົງດັ່ນດິ້ນຫອດຫິວຕາຍເປັນແນ່ແທ້."

ໄດ້ຍິນດັ່ງນັ້ນ ພະຍາກາມະທາ ກໍກ່າວຕອບດ້ວຍອາລົມດີວ່າ ບໍ່ຂ້ອງບໍ່ຂັບ ແລ້ວບອກໃຫ້ເສນານຳພາແຂກເມືອງໄປຫາບັນທະເສດກີ ທັງມີຄຳສັ່ງແນບນຳໄປພ້ອມວ່າ ບໍ່ໃຫ້ປະຕິເສດ, ແຕ່ໃຫ້ປູກແຕ່ງຕາມຈຸດປະສົງທີ່ເວົ້າມາ ໃນສານນັ້ນ.

ແລ້ວຕໍ່ມາ ຂຸນຈັນ ກໍພາແຂກເມືອງ ໄປຍັງພາສາດຂອງບັນທະເສດກີ. ຫລັງຈາກລົມກັນພໍຮູ້ຈັກວ່າ ແມ່ນໃຜມາແຕ່ໃສແລ້ວ ຂຸນຄອນກໍບອກຈຸດປະສົງ ທີ່ໄດ້ມາຮອດມາເຖິງຄັ້ງນີ້. ທຳອິດຝ່າຍບັນທະເສດກີ ສະແດງຄວາມຂັດຂ້ອງໂດຍກ່າວວ່າ :

ຫ້າມຈຳໜ່າຍ

ອັນນຶ່ງ ພໍ່ກໍຮັກຍິ່ງພ້ຽງພະລັບເລືອດໃນອົກດູດັ່ງຄາວໄກສຸດ ບໍ່ວາງໄປໄດ້ ເມຽເສດກີເອງກໍເວົ້າວ່າ ລູກສາວທັງເຈັດນັ້ນ ປຽບຄືໜ່ວຍຕາ ຊິໃຫ້ລວັກເອົາໜ່ວຍຕາອອກໄດ້ຈັ່ງໃດ.

ຝ່າຍຂຸນຄອນ ກໍບໍ່ລົດລະຄວາມພະຍາຍາມ ໂດຍອ້າງເຫດຜົນຫລາຍປະການ ຄືໃຫ້ເສດກີແນມເຫັນການໄກໄວ້, ຂໍໃຫ້ຄຶດວ່າ ເປັນການສ້າງສະພານທອງທ່ຽວໄຕ່ ເພື່ອໃຫ້ເມືອງໃຫຍ່ສອງຝ່າຍກໍ້າ ມີຂັ້ນໃດແກ້ວກ່າຍກັນ.

ພາຍໃນເຮືອນຂອງເສດຖີມີພີ່ນ້ອງ ຈຸ້ມເຈື້ອມາຮວມ ຟັງນຳຫລາຍຄົນ, ທຸກຄົນເວົ້າອົບຮົມໃຫ້ສອງຜົວເມຽເສດຖີ ປະຕິບັດຕາມ ທີ່ພະຍາກາມະທາ ສັ່ງແນະນຳມາ ເພາະວ່າ ສາຍແນນວາງມາແຕ່ຟ້າແຕ່ແຖນແລ້ວ ຈຶ່ງບໍ່ຄວນຂ້ອງຂືນ. ໃນທີ່ສຸດຜົວເມຽເສດຖີ ກໍເອີ້ນລູກສາວທັງເຈັດມາຖາມ. ຜູ້ພໍ່ ເວົ້າວ່າ

"ພະຍາເມືອງເປັງຈານ ມີຄວາມປະສົງຢາກໄດ້ລູກ ຫມົດທຸກຄົນ ໄປເປັນມະເຫສີ ພວກລູກຈະວ່າແນວໃດ?"

ລູກສາວທັງເຈັດເວົ້າວ່າ : "ສຸດແລ້ວແຕ່ພໍ່ແມ່, ຫາກ ພໍ່ແມ່ເຫັນດີ ພວກລູກກໍບໍ່ຊ່າງຂືນຄວາມ."

ບັນທະເສດຖີ ຕັດສິນໃຈດ້ວຍຄວາມລຳບາກ ເພາະ ມັນເທົ່າກັບເອົາມີດຄົມໆ ມາຄວັກເອົາຕາຕົນເອງອອກ, ມັນ ສຸດແສນທໍລະມານ ທີ່ພວກລູກໆຈະຕ້ອງ ມາພັດພາກຈາກພໍ່ ແມ່ໄປ, ແຕ່ໂດຍເຫັນແກ່ຄວາມສຳພັນອັນດີງາມ ແລະຍືນ ຍົງລະຫວ່າງສອງນະຄອນ ທ່ານຈຶ່ງຍອມຍົກລູກສາວໃຫ້ໄປ, ສ່ວນເມຽກໍຝືນໃຈທີ່ສຸດ ແຕ່ເມື່ອເຫັນວ່າ ມັນເປັນກຽດອັນສູງ ສຸດ ທີ່ລູກສາວຂອງຕົນຈະໄດ້ເປັນມິ່ງມະເຫສີ ຈຶ່ງສະຫລະໄປ ແຕ່ນ້ຳຕາຂອງຄວາມເປັນແມ່ກໍໄຫລອາບແກ້ມ. ນາງເວົ້າ ສັ່ງສອນລູກໃຫ້ຮັກແພງກັນ ຢ່າກິ້ມປະລະໄລກັນ. ໃຫ້ປະຕິບັດ ຕົນຄ່ຽມຄົມສຸຂຸມ, ຊອກຮຽນຮູ້ຮີດຄອງລາຊາ ເພື່ອບໍ່ໃຫ້ທຳ ຕົນຜິດພາດ, ພ້ອມດຽວກັນນາງກໍເວົ້າກັບສອງຂຸນ ຜູ້ເປັນ ທູດວ່າ :

" ຈຶ່ງບອກພະຍາກຸສະລາດ ໃຫ້ສັ່ງສອນເອົາ ແນວໃດທີ່ພວກນາງບໍ່ຮູ້ ກ່ຽວກັບຮີດຄອງທຳນຽມໃນວັງ, ກ້າວ່າພວກນາງເຮັດຜິດພາດປະການໃດ ຈົນບໍ່ສາມາດແກ້ໄຂໄດ້ກໍ່ໃຫ້ສົ່ງຄືນມາຫາພໍ່ແມ່, ຢ່າໄດ້ລົງໂທດຫນັກຫນ່ວງເຖິງຂັ້ນຕາຍເລີຍ."

ສອງຂຸນຜູ້ເປັນທູດ ຮັບຄຳຕາມທີ່ພໍ່ແມ່ ຂອງນາງທັງເຈັດບອກ ແລ້ວຕໍ່ມາກໍ່ມອບ ເຄື່ອງບັນນາການ ອັນມີຄ່າມະຫາສານ ຊຶ່ງພະຍາເມືອງເປັງຈານ ເລືອກເຟັ້ນສົ່ງມາ. ການປະຕິບັດຫນ້າທີ່ຂອງຂຸນຄອນ ແລະຂຸນສີ ເປັນໄປຕາມຈຸດປະສົງຢ່າງຮຽບຮ້ອຍດີທຸກປະການ.

ກ່ອນທີ່ນາງທັງເຈັດຈະອອກເດີນທາງໄປຍັງ ເມືອງເປັງຈານ ຜູ້ເປັນພໍ່ຈັດແຈງແບ່ງສົມບັດໃຫ້ເທົ່າໆກັນທຸກຄົນຊຶ່ງມີ ເງິນຄຳ, ສັດລ້ຽງ ແລະ ສາວໃຊ້ຈຳນວນນັບເປັນຮ້ອຍໆ. ໃນມື້ອອກເດີນທາງ ພວກນາງກໍ່ທຽນເຂົ້າໄປຂາບລາພໍ່ແມ່ ດ້ວຍນ້ຳຕາໄຫລອາບແກ້ມ. ຜູ້ເປັນແມ່ເປັນຫວ່ງເປັນໃຍນຳລູກຫລາຍທີ່ສຸດ ໂດຍສະເພາະນາງລຸນ ເພາະຍັງນ້ອຍ, ຈຶ່ງບອກໃຫ້ຜູ້ເປັນເອື້ອຍທັງຫລາຍ ເອົາໃຈໃສ່ເບິ່ງແຍງບອກສອນນ້ອງ. ເວົ້າແລ້ວແມ່ກໍ່ເປັນລົມສະຫລົບໄປຈົນຕ້ອງເດືອດຮ້ອນຄົນທັງເຮືອນ. ເພື່ອກອບກູ້ເອົາຊີວິດແມ່ຄືນມາ ມີການໃຊ້ຢຸກຢາ ທັງຄາຖາອາຄົມ ແລະ ນ້ຳມົນເປົ່າເປັນອຶກກະທຶກ, ໃນທີ່ສຸດຜູ້ເປັນແມ່ກໍ່ຟື້ນຄືນມາ.

ການສັ່ງລາທີ່ເສົ້າສະຫລົດ ເຕັມໄປດ້ວຍນ້ຳຕາ ກໍມາຮອດບັ້ນພັດພາກຈາກໄປ, ນາງທັງເຈັດຂຶ້ນນັ່ງເທິງສະລ່ຽງແພໄໝ ສອດດ້ວຍໄມ້ຄານສີເຫລືອງຄຳ ແລ້ວໄພ່ພົນກໍຫາມພວກນາງອອກຈາກຕົວເມືອງໄປ ທ່າມກາງສຽງຮ້ອງໄຮ້ຟົດຟື້ນຂອງຊາວເມືອງຈຳປາ ທີ່ມາເຝົ້າເບິ່ງຕາມສອງຂ້າງທາງ.

ຂະບວນແຫ່ໄປເຕົ້າໂຮມກັນຢູ່ສາລານອກເມືອງບ່ອນພັກເຊົາໄພ່ພົນສ່ວນໃຫຍ່, ແລ້ວການເດີນທາງອັນຍາວໄກຈຶ່ງເລີ່ມຕົ້ນ ໂດຍມີຊ້າງມີມ້າເປັນພາຫະນະ, ໄພ່ພົນອີກສ່ວນນຶ່ງຍ່າງເປັນແຖວຍາວຢຽດ ທັງຄອຍລະແວດລະວັງຮັກສາຄວາມສະຫງົບ. ທັງຫມົດມຸ່ງຫນ້າກັບຄືນສູ່ເມືອງເປັງຈານດ້ວຍບັນຍາກາດສົດຊື່ນສົມຫວັງ.

ການເດີນທາງກິນເວລາຫລາຍວັນ, ຜ່ານດົງຫລວງ, ຂ້າມຫ້ວຍຮ່ອງ, ລຽບເຫວຊັນ, ໃນທີ່ສຸດ ກໍມາຮອດເຂດຊານເມືອງເປັງຈານ. ຂຸນຄອນກັບຂຸນສີ ສັ່ງໃຫ້ຄົນຂີ່ມ້າໄວພະລັນໄປບອກພະຍາກຸສະລາດ ຊາບລ່ວງຫນ້າກ່ອນ, ພະຍາຜູ້ຄອງຄອຍດ້ວຍໃຈຈົດຈໍ່ມາເປັນເວລາດົນນານນັ້ນ ຕື່ນເຕັ້ນດີໃຈຫາອັນປຽບບໍ່ໄດ້, ແລ້ວກໍສັ່ງໃຫ້ເສນາອາມາດທ້າງຫາຂະບວນໄປຕ້ອນຮັບ ມ້າຂາວນັບເປັນຫມື່ນໂຕກຶກບຳມາ ກະກຽມແຕ່ງອານໃສ່, ມ້າຊື່ວ່າ ສິນທວາ ສຳລັບພະຍາຂີ່ກໍກຶກແຕ່ງຢ່າງສະຫງ່າງາມ ອານປະດັບດ້ວຍ ດອກດວງຮູບດາວຄຳເຫລືອງເຫລື້ອມ, ພວກຟ້ອນລະບຳປະຈຳລາຊະສຳນັກແຕ່ງຕົວສີສົດ, ທຸກຄົນຍິ້ມແຍ້ມແຈ່ມໃສ ທີ່ຈະໄປຕ້ອນຮັບ

ແຂກຈາກແດນໄກ, ທຸກສິ່ງທຸກຢ່າງກຽມພ້ອມແລ້ວ ພະຍາກຸສະລາດ ກໍຂີ່ມ້າອອກໄປ ໂດຍມີເສນາບັບຫມື່ນຂີ່ມ້າແຫ່ຄອຍລະວັງຮັກສາເປັນແຖວຍາວຍືດ, ຂະບວນຜ່ານທົ່ງນາຫລວງແລ້ວຜ່ານປ່າ, ພົ້ນຈາກບ່ອນນີ້ ກໍພໍດີແນມເຫັນຊ້າງທີ່ນາງທັງເຈັດຂີ່ມາ, ພະຍາກຸສະລາດຢຸດມ້າໄວ້ແລ້ວແນມເບິ່ງ ດ້ວຍຫົວໃຈທີ່ເປັນສຸກ, ຕໍ່ມາຂຸນຄອນ ແລະ ຂຸນສີ ເລັ່ງມ້າເຂົ້າມາລາຍງານເຖິງ ຄວາມສຳເລັດ ໃນການໄປສູ່ຂໍເອົານາງທັງເຈັດ ຕະຫລອດຮອດການເດີນທາງ ທີ່ເປັນໄປດ້ວຍຄວາມຮຽບຮ້ອຍ ຈົນກ້າວມາຮອດວັນນີ້. ແລ້ວພະຍາກໍຂີ່ມ້າເຂົ້າໄປຫາພວກນາງ ແລະ ອວານເອົາຂະບວນເດີນທາງເຂົ້າສູ່ຕົວເມືອງ. ຊ້າງ ແລະ ມ້າ ທັງໄພ່ພົນຫລັ່ງໄຫລເຂົ້າມາຈົນອັ່ງອໍເຕັມເມືອງ, ຊ້າງແຕ່ລະໂຕທີ່ພວກນາງຂີ່ມາ ໄປຢຸດຢູ່ທີ່ ເກີຍຂວາງ[8] ເພື່ອໃຫ້ພວກນາງລົງ, ແລ້ວຂຸນຄອນກັບຂຸນສີ ກໍພາຢ່າງຊ້າໆ ເຂົ້າໄປຫາ ພະຍາກຸສະລາດ ທີ່ເຝົ້າເບິ່ງຢູ່ໃກ້ໆນັ້ນ, ຕໍ່ມາ ພະຍາກໍພານາງທັງເຈັດເຂົ້າສູ່ທໍາພັກທ່າມກາງບັນຍາກາດສົດຊື່ນແຈ່ມໃສ ທີ່ມີເສນານ້ອຍໃຫຍ່ ແລະ ບໍລິວານທັງຫລາຍມາຮ່ວມຕ້ອນຮັບ.

ພະຍາກຸສະລາດ ບອກແກ່ພວກນາງວ່າ : " ຈະຈັດພິທີອຸປະພິເສກ ຂຶ້ນເປັນມະເຫສີທັງເຈັດຄົນ ໃຫ້ມີຄວາມສຸກສະເຫມີກັນ, ທຸກໆຄົນຈະໄດ້ຮັບເງິນຄຳ ຈາກການສ່ວຍສາອາກອນ ແລະ ຊັບສົມບັດອື່ນໆ ອີກຫລາຍຢ່າງ, ກ້າຍາມໃດ

[8] **ເກີຍຂວາງ** : ບ່ອນທຽບຊ້າງສຳລັບຄົນຂຶ້ນ ຫລື ລົງຈາກຊ້າງ.

ຢາກກັບເມືອຢາມພໍ່ແມ່ພີ່ນ້ອງ ກໍຈະຈັດໄພ່ພົນໄປສົ່ງ ແລະ ອຳນວຍຄວາມສະດວກສະບາຍໃຫ້ທຸກປະການ."

ຫໍທົດສິງໄດ້ຮັບການປະດັບປະດາ ຢ່າງສວຍງາມສະດຸດຕາ, ເມື່ອຮອດລຶກງາມຍາມດີ ໝໍໂຫນຂາບເຊີນໃຫ້ເລີ່ມຕົ້ນພິທີ, ແລ້ວພະຍາກຸສະລາດ ກໍຈູງມືນາງທັງເຈັດ ເຂົ້າສູ່ຫໍທົດສິງ. ພວກນາງໄປນັ່ງລົງເທິງອາສະນະ ແລ້ວການທົດສິງດ້ວຍນ້ຳອຸດຕະມະ[9] ເພື່ອເປັນສິລິມຸງຄຸນ ກໍດຳເນີນໄປຊ້າໆແຕ່ຄຣຶມຄຶມ. ຫລັງຈາກນັ້ນ ພວກນາງກໍມານັ່ງອ້ອມພາຂວັນ ເພື່ອຮັບພອນ ແລະ ຜູກຄໍ່ຕໍ່ແຂນ, ສຸດທ້າຍ ພະຍາກຸສະລາດ ມອບວັດຖຸສິ່ງຂອງສຳລັບໃຊ້ໃນຫ້ອງຫໍເພື່ອໃຫ້ທັງເຈັດນາງ ມີຊີວິດຢູ່ຢ່າງສະບາຍ ເຕັມທີ່ປາສະຈາກຄວາມທຸກກັງວົນໃດໆ. ສ່ວນຂຸນຄອນ ກັບຂຸນສີ ກໍໄດ້ຮັບການຍ້ອງຍໍຊົມເຊີຍ ທີ່ປະຕິບັດໜ້າທີ່ ດ້ວຍຄວາມສຳເລັດ, ທັງສອງໄດ້ຮັບການເລື່ອນຊັ້ນຂຶ້ນເປັນເຈົ້າກົມ ຮຽກວ່າ ກົມມະຂຸນຄອນ ແລະ ກົມມະຂຸນສີ.

ພະຍາກຸສະລາດ ຄອງລາຊະສົມບັດຢ່າງເປັນສຸກໂດຍມີມະເຫສີພາບດຽວກັນ 8 ຄົນ. ພະອົງຮັກແພງນາງຈັນທາມະເຫສີຜູ້ເກົ່າ ແລະ ນາງທັງເຈັດ ມະເຫສີຜູ້ໃຫມ່ ດ້ວຍນ້ຳໃຈກະລຸນາເທົ່າທຽມກັນ.

---

[9] **ນ້ຳອຸດຕະມະ** : ນ້ຳທີ່ຜ່ານການສູດມົນ ອວຍພອນໃຫ້ຢູ່ເຢັນເປັນສຸກ.

# ທ້າວສິນໄຊ ເກີດ

ພະຍາກຸສະລາດ ຄິດຄະນຶງຫານາງສຸມຸນທາ ຜູ້ເປັນນ້ອງສາວ ບໍ່ມີຍາມຈືດຈາງຫວ່າງເວັ້ນ, ທຸກເວລານາທີ ພະອົງ ຄິດຄົ້ນຫາວິທີກຳຣາບປາບຍັກໃຫ້ປະລາໄຊ ແລ້ວເອົານ້ອງສາວກັບຄືນ ມາເປັນມິ່ງບ້ານຂວັນເມືອງຕາມເດີມ. ເມື່ອໄດ້ມະເຫສີຕື່ມອີກເຈັດຄົນ ຊຶ່ງເປັນເຊື້ອແນວກະສັດແຫ່ງເມືອງຈຳປາ ດັ່ງນີ້ ພະອົງຫວັງວ່າ ຈະໄດ້ລູກຊາຍທີ່ມີລິດເດດເກັ່ງກ້າສາມາດຜາບແພ້ພວກຍັກພວກມານທັງຫລາຍ. ພະອົງບອກມະເຫສີທັງແປດວ່າ ໃຫ້ຕັ້ງໃຈອະທິຖານວິງວອນເທບພະເຈົ້າ ເພື່ອໃຫ້ສິ່ງຜູ້ປະເສີດເລີດລ້ຳມາເກີດນຳ, ມາເຫສີຜູ້ໃດ ໄດ້ລູກຕາມຄວາມປາກະໜາດັ່ງກ່າວນີ້ ຈະໄດ້ເປັນເອກອັກຄະມະເຫສີ.

ນາງຈັນທາ ແລະ ນາງລຸນ ນ້ອມໄຫວ້ຫາພະອິນ ຂໍໃຫ້ສົ່ງຜູ້ມີບຸນມາເກີດນຳ ເພື່ອໃຫ້ເປັນໜໍ່ພະໂພທິຍານ ໃນພາຍໜ້າ. ໃນຄ່ຳຄືນທີ່ສອງນາງທຳການອະທິຖານນັ້ນ ພະອິນຢູ່ເທິງຟ້າຫລຽວລົງມາຍັງໂລກມະນຸດ ແລະ ຮູ້ແຈ້ງເຖິງຄວາມປາກະໜາຂອງພວກນາງ ຈຶ່ງສົ່ງລູກສາມອົງລົງມາເກີດ ໂດຍໃຫ້ສອງອົງເກີດໃນທ້ອງນາງລຸນ, ແລະນຶ່ງອົງເກີດໃນທ້ອງຂອງນາງຈັນທາ. ຄືນນັ້ນ ເມື່ອນາງລຸນຫລັບໄປກໍຝັນວ່າ ພະຈັນໄດ້ສະເດັດລົງມາ ຢູ່ຊື່ເທິງຫົວສິ່ງແສງຮຸ່ງເຫລື້ອມໄປທົ່ວພິພົບ, ມືຂອງນາງລຸນ ຈັບງ້າວດວງໃສເປັນປະກາຍມາບແມບ, ສ່ວນນາງຈັນທາຝັນວ່າ ໄດ້ຂີ່



ຊ້າງເຜືອກຂາວບໍລິສຸດ ແລ້ວໜີອອກຈາກເມືອງໄປ. ພະຍາກຸສະລາດ ກໍຝັນດີເປັນພິເສດ ຄືໃນບໍລິເວນຣາຊະວັງ ປາກົດມີສະໃຫຍ່ເກີດຂຶ້ນ, ມີດອກບົວສີແດງສາມດອກ ພວມບານເຣືອງເຣື່ອ ແລະ ສົ່ງແສງຮຸ່ງເຫລື້ອມໄປຮອດເມືອງຟ້າ, ສ່ວນດອກອື່ນໆ ພວມຈູມຈີເປັນຊອບລອບອ້ອມສາມດອກນັ້ນໄວ້.

ນາງຈັນທາ ແລະ ນາງລຸນ ຕັ້ງທ້ອງກືພາມານັບແຕ່ຄືນນັ້ນ ເປັນຕົ້ນມາ. ສ່ວນນາງທັງທົກ ກໍຕັ້ງທ້ອງໃນເວລາດຽວກັນທັງໝົດ.

ພະຍາກຸສະລາດ ເລົ່າຄວາມຝັນອັນປະຫລາດຕ່າງໆນັ້ນ ສູ່ຄົນທັງຫລາຍຟັງ. ພວກເສນາ ຜູ້ໃຫຍ່ກ່າວວ່າ ຝັນແນວນີ້ ພະອົງຈະໄດ້ລູກຊາຍຜູ້ປະເສີດສາມຄົນ, ເປັນຊາຍທີ່ມີລິດເດດຜາບແພ້ສັດຕູໝູ່ມານຈາກທຸກທິດທຸກທາງ. ພະອົງດີໃຈເປັນຢ່າງຍິ່ງທີ່ໄດ້ຟັງເລື່ອງອັນເປັນມຸງຄຸນ, ແຕ່ຍັງຢາກຮູ້ວ່າ ມະເຫສີຄົນໃດຈະໄດ້ລູກຜູ້ປະເສີດດັ່ງກ່າວນັ້ນ. ພະອົງສັ່ງໃຫ້ໝໍໂຫນມາທຳນາຍເບິ່ງ ແລະ ພາຍຫລັງໄລ່ເລກດູມໍ ຕາມຫລັກເກນເລກທໍລະຄຸນ[10] ແລ້ວໝໍໂຫນບອກວ່ານາງລຸນກັບນາງຈັນທາ ຈະມີລູກຊາຍຜູ້ກ້າຫານລື່ນໂລກມາເກີດນຳ, ສ່ວນນາງທັງທົກຈະໄດ້ລູກຊາຍທີ່ຊົ່ວຊ້າເຫລືອປະມານ.

ຄຳທຳນາຍຂອງໝໍໂຫນ ນຳຄວາມຍິນດີມາສູ່ພະຍາກຸສະລາດກັບມະເຫສີ ຄືນາງຈັນທາ ແລະນາງລຸນ ຢ່າງລົ້ນເຫລືອ, ແຕ່ພ້ອມດຽວກັນນັ້ນ ນາງທັງທົກຊ້ຳມີແຕ່

[10] **ເລກທໍລະຄຸນ** : ວິທີການຄິດໄລ່ເພື່ອເຮັດປະຕິທິນ ແລະ ທຳນາຍເຫດການຮ້າຍດີ ຕາມປີຈຸລະສັງກາດ.

ຄວາມອັບອາຍຂາຍໜ້າ ແລະກຶກຜູ້ຄົນຫຍໍ້ຫຍັບໄປທົ່ວເມືອງ. ຂ່າວກ່ຽວກັບເລື່ອງທີ່ນາງທັງທົກບໍ່ພໍໃຈ ຕໍ່ຄຳທຳນາຍຂອງໝໍໂຫນນັ້ນ ດັງໄປຮອດຫູແມ່ຢາແຝດຄົນນຶ່ງ ທີ່ມັກເລາະລ່ອງໄປຕາມໃນເມືອງ ເພື່ອສິ້ງຊອມຫາຜູ້ທີ່ຈະໃຫ້ສິນຈ້າງຮາງວັນ.

ແລ້ວວັນນຶ່ງ ແມ່ຢາແຝດກໍເຂົ້າໄປຫານາງປະທຸມມາ ຜູ້ເປັນເອື້ອຍໝູ່ ຂອງນາງທັງທົກ, ການສົນທະນາແບບຊຸບຊິ່ມ ດ້ວຍຄວາມລະມັດລະວັງ ດຳເນີນໄປເປັນເວລາດົນນານ ຈົນເປັນທີ່ເຂົ້າໃຈກັນດີ ລະຫວ່າງສອງກ້ຳສອງຝ່າຍ, ແມ່ຢາແຝດເຂົ້າໃຈແຈ້ງ ເຖິງຈຸດປະສົງຂອງພວກນາງທັງທົກ ແລ້ວຍິ້ມຢູ່ໃນໃຈ ເພາະໄດ້ພໍ້ເຫຍື່ອສົມຄວາມປາຖະໜາ ແລະ ເວົ້າອວດອ້າງຄວາມສັກສິດຂອງຢາແຝດຂອງຕົນວ່າ ສາມາດເຮັດໃຫ້ຄວາມຮັກລະຫວ່າງຊາຍ-ຍິງຈືດຈາງຫ່າງອອກໄປຍາມໃດກໍໄດ້, ຫລືວ່າ ຖ້າມີຄົນຄຽດໃຫ້ກັນ ແລະ ຊັງກັນ ເຖິງຂັ້ນຢູ່ຮ່ວມໂລກດຽວກັນບໍ່ໄດ້ ກໍສາມາດເຮັດໃຫ້ຄົນເຫລົ່ານັ້ນ ຮັກຫອມກັນໄດ້ຈົນລືມແລງລືມງາຍ. ແມ່ຢາແຝດວ່າ : " ບັນຫາຂອງນາງທັງທົກນີ້ ບໍ່ມີຫຍັງຫຍຸ້ງຍາກຈັກດີ້ ແກ້ໄຂຄາວດຽວກໍສຳເລັດລຸລ່ວງ ສະດວກສະບາຍ, ຂໍພຽງແຕ່ເອົາຄຳແດງໆໃສ່ມືໃຫ້ພໍເປັນກຳລັງໃຈ ເພື່ອໄປເສກເປົ່າຢາແຝດ ໃຫ້ມັນເຂັດມັນຢຳ ແລ້ວທຸກສິ່ງທຸກຢ່າງຈະເປັນໄປຕາມຈຸດປະສົງ."

ທັງທົກນາງເວົ້າເປັນສຽງດຽວກັນ ດ້ວຍຄວາມໂມໂຫໂກທາ ແລະ ຢືນຢັນດ້ວຍຄວາມໜັກແໜ້ນວ່າ ຈະຕອບບຸນແທນຄຸນຢ່າງບໍ່ອັ້ນ ຖ້າແຜນການສຳເລັດຕາມຄາດໝາຍ. ພວກນາງເຕັມໄປດ້ວຍອາລົມເຄືອງແຄ້ນ ທີ່ຢູ່ດີໆ

ກໍມີຜູ້ມາກ່າວຫາວ່າ ເປັນຄົນຕ່ຳຊ້າຈັງໄຣ ຈົນຖືກຫຍໍ້ຫຍັນນິນທາຈາກຄົນທົ່ວທັງເມືອງ.

ເມື່ອໄດ້ໂອກາດ ແມ່ຢາແຝດຜູ້ເຕັມໄປດ້ວຍເລ່ຫລ່ຽມກໍຈອບມອງເຂົ້າໄປໃນຫ້ອງອາບນ້ຳຂອງ ພະຍາກຸສະລາດ ແລ້ວເອົາຢາແຝດໃສ່ລົງໄປໃນໄຫນ້ຳ. ພຶດຕິກັມດັ່ງກ່າວນີ້ດຳເນີນໄປດ້ວຍຄວາມລະມັດລະວັງ ແລະ ບໍ່ມີຜູ້ອື່ນໄດ້ສັງເກດເຫັນເລີຍ. ພໍຮອດຍາມອາບນ້ຳ ພະຍາກໍເອົາບວຍຕັກນ້ຳໃນໄຫ ອາບຕາມປົກກະຕິ. ເມື່ອຫົດນ້ຳໄປໄດ້ຫລາຍບວຍ ພະອົງກໍຮູ້ສຶກແປກຕ່າງໃນຈິດໃຈ, ມັນເປັນຄວາມຫຸ່ມຮ້ອນປັ່ນປ່ວນ ຫົວໃຈອັ່ງແໜ້ນໄປດ້ວຍຄວາມຊັງ ຄວາມບໍ່ໄວ້ເນື້ອເຊື່ອໃຈນາງຈັນທາ ແລະນາງລຸນ. ຂະນະດຽວກັນ ພະອົງກັບຮູ້ສຶກເປັນຫວ່ງ ກັງວົນນຳພວກນາງທັງຫົກ ຊຶ່ງຫມໍໂຫນເຄີຍທຳນາຍໂຊກຊາຕາໄວ້ໃນແງ່ບໍ່ດີບໍ່ງາມ.

ອາການປະຫລາດຕ່າງໆ ຂອງພະຍາ ດຳເນີນໄປຕະຫລອດມື້ ແລະ ບໍ່ມີທ່າຈະຢຸດເຊົາລົງໄດ້, ດັ່ງນີ້ ພະອົງຈຶ່ງສັ່ງໃຫ້ຫມໍໂຫນມາໄລ່ເລກດູນໍເບິ່ງໃຫມ່. ນາງທັງຫົກ ສວຍໂອກາດນີ້ ກ່ອນທີ່ຫມໍໂຫນຈະເຂົ້າໄປຍັງຜາສາດຂອງພະຍາ ໂດຍເອົາຄຳຍັດໃສ່ມືໃຫ້ຫມໍໂຫນ ທັງຊັບຊິ່ມ ບອກວ່າ ໃຫ້ເວົ້າແຕ່ແນວດີ ເປັນມຸງຄຸນກ່ຽວກັບພວກນາງທັງຫົກ.

ຕໍ່ຫນ້າພະຍາກຸສະລາດ ແລະທ່າມກາງເສນາອາມາດ ຫມໍໂຫນທຳນາຍຄິດຫນັກ, ໄລ່ເລກຫລາຍຫລົບຫລາຍຕາວ ແລ້ວກ່າວຂຶ້ນວ່າ : " ຂ້ານ້ອຍອີງຕາມເລກອອກມາເຫັນວ່າ ຊາຕາຂອງນາງທັງຫົກນັ້ນດີ, ສ່ວນນາງຈັນທາກັບນາງລຸນ ບໍ່ມີໂຊກຄືດັ່ງທີ່ທຳນາຍໄວ້ແຕ່ກ່ອນ, ທີ່ຮ້າຍແຮງໄປກວ່ານັ້ນ ກໍຄືກຸມມານໃນທ້ອງຂອງນາງທັງສອງນີ້ ຈະບໍ່

ມີຮູບໂສມຄືມະນຸດທົ່ວໄປ, ແຕ່ຈະເປັນສັດປະຫລາດໂຕເຮີ ຮ້າຍ"

ໄດ້ຍິນດັ່ງນັ້ນ ພະຍາກຸສະລາດ ຮູ້ສຶກບໍ່ດີໃຈ ແຕ່ກໍ ເຮັດຫຍັງບໍ່ໄດ້ໃນເວລານີ້ ຕ້ອງຄອຍໃຫ້ວັນເວລາ ເປັນສິ່ງຕັດ ສິນ ເພາະຫມໍໂຫນກໍກ່າວໄປຕາມເລກມໍທີ່ອອກມາ, ພະອົງ ກໍ່າໃຫ້ມະເຫສີແຕ່ລະຄົນປະສູດລູກອອກມາສາກ່ອນ ແລ້ວ ຫລັກຖານຕົວຈິງກໍຈະພິສູດຕົວມັນເອງ.

ເວລາຜ່ານໄປ ຈົນລ່ວງຮອດເດືອນຫົກອອກໃຫມ່ຄໍ່າ ນຶ່ງ ອັນເປັນເວລາກີພາຄົບເກົ້າເດືອນ ຂອງມະເຫສີທັງ ຫມົດ. ບາງລຸນເປັນຜູ້ທໍາອິດເຈັບທ້ອງຈ້າວໆ ແລ້ວລູກກໍ ອອກມາ, ຮູບໂສມເປັນຫອຍສັງ ເຮັດໃຫ້ຜູ້ຄົນອັນມີແມ່ລ້ຽງ ຫມໍຕໍາແຍ ແລະ ບາງສະຫນົມທັງຫລາຍປະຫລາດໃຈ ອ້າ ປາກມືນຕາກວ້າງ, ຕໍ່ມາສຽງເວົ້າກ່າວຂວັນທີ່ບໍ່ເປັນມຸງຄຸນ ກໍດັງເປັນແຊວໆ.

ຂະນະທີ່ສຽງເນືອງນັນບໍ່ທັນມິດງຽບລົງນັ້ນ ບາງລຸນ ກໍອອກລູກຜູ້ທີສອງເປັນມະນຸດຮູບງາມ ມືກືທະນູ ແລະດາບ ອອກມາພ້ອມ. ຕາມປະເພນີ ລູກຝາແຝດທີ່ເກີດລຸນ ກືກຍົກ ໃຫ້ເປັນອ້າຍ ແລະໃສ່ຊື່ວ່າ ສິນໄຊ, ສ່ວນຜູ້ນ້ອງຊື່ ສັງທອງ. ທ້າວທັງສອງ ກືກນໍາໄປລ້າງສ່ວຍດ້ວຍນໍ້າຫອມ ແລ້ວນໍາ ໄປວາງໄວ້ພານທອງ ແລະຫົ່ມຄຸມດ້ວຍແພໄຫມຄໍາ ທ່າມ ກາງສາຍຕາທີ່ງຶດງໍ້ອັດສະຈັນໃຈ ເພາະປາກົດການ ທໍາ ນອງນີ້ ບໍ່ເຄີຍມີມາກ່ອນ. ທະນູ ແລະດາບ ທີ່ສິນໄຊກືຕິດຕົວ ມານໍານັ້ນ ກືກເກັບມ້ຽນໄວ້ ແລະປິດເປັນຄວາມລັບ. ກັດນັ້ນມາກໍແມ່ນນາງຈັນທາເຈັບທ້ອງອອກລູກ, ເດັກທີ່ເກີດ ມາເປັນລາຊະສີ ຫລື ສິງ ທີ່ມີທັງງວງທັງງາ ຮູບຮ່າງປະ

ຫລາດກວ່າສັດໃດໆໃນພິພົບ. ເສນາອາມາດທັງຫລາຍ ເວົ້າກັນວ່າ ເດັກເກີດໃຫມ່ເປັນຕົວອຸບາດ ທີ່ອາດຈະນຳຄວາມຫາຍຍະນະມາສູ່ບ້ານເມືອງ ຈຶ່ງສົມຄວນເອົາໄປໄຫລນ້ຳ ຫລື ເອົາໄປປ່ອຍໄວ້ໃນປ່າ. ແຕ່ນາງຈັນທາ ແລະ ນາງລຸນ ຜູ້ເປັນແມ່ ບໍ່ຍອມຟັງສຽງຜູ້ໃດ, ເຖິງຈະເປັນຕາຍຮ້າຍດີແນວໃດ ກໍບໍ່ຍອມປະປ່ອຍລູກ ເພາະໄດ້ອະທິຖານຂໍນຳພະອິນແລ້ວ.

ໃນວັນດຽວກັນນີ້ ນາງທັງຫົກກໍອອກລູກ ເປັນຊາຍລ້ວນທັງຫົກຄົນ. ຜູ້ເປັນແມ່ຕ່າງກໍຊື່ນຊົມຍິນດີ ທີ່ຄຳທຳນາຍເທື່ອໃຫມ່ຂອງຫມໍໂຫນກາຍເປັນຄວາມຈິງທຸກປະການ. ພວກນາງເອົາຊະນະການຫຍໍ້ຫຍັນຈາກຜູ້ບໍ່ຫວັງດີ ແລະລົບລ້າງຄວາມອັບອາຍຂາຍຫນ້າໄປໄດ້ຢ່າງຫມົດກ້ຽງ. ມັນເປັນວັນ ຊຶ່ງເຮັດໃຫ້ພວກນາງມີຄວາມເຊື່ອຫມັ້ນໃນອະນາຄົດ ຢ່າງບໍ່ເຄີຍເປັນມາກ່ອນ.

ພາຍໃນບໍລິເວນລາຊະວັງ ກຸ່ມຄົນແບ່ງອອກເປັນສອງຝ່າຍ, ຄືຝ່າຍທີ່ເຂົ້າຂ້າງນາງຈັນທາ ແລະນາງລຸນ ກໍເລົ່າລືກັນໄປວ່າ ເດັກທັງສາມ ແມ່ນພະອິນລົງມາເກີດ, ຝ່າຍທີ່ເຂົ້າຂ້າງນາງທັງຫົກ ກໍມ່ວນຊື່ນຟົດຟື້ນ ທີ່ບັດນີ້ເມືອງເປັງຈານ ມີຫນໍ່ກະສັດໄວ້ສືບລາຊະບັນລັງ ຕາມຈຸດປະສົງຂອງພະຍາ ຜູ້ປົກຄອງເມືອງແລ້ວ.

ເວລາຜ່ານໄປຫລາຍວັນ ພະຍາກຸສະລາດ ກໍອະນຸຍາດ ໃຫ້ມະເຫສີທັງແປດເອົາລູກໄປໃຫ້ເບິ່ງ. ພະອົງປິຕິຍິນດີຢ່າງລົ້ນເຫລືອ ທີ່ເຫັນລູກຊາຍອັນເກີດຈາກນາງທັງຫົກ ຜູ້ເປັນສາຍເລືອດຂອງຕົນເອງ. ແຕ່ເມື່ອເຫັນເດັກທີ່ເກີດຈາກນາງຈັນທາ ແລະ ນາງລຸນ ຊຶ່ງມີຮູບຮ່າງຜິດມະນຸດທົ່ວໄປ

ແລ້ວ ພະອົງມີຄວາມຜິດຫວັງຢ່າງແຮງ ແລະ ເອົາອັ່ງໃນໃຈ ເພາະຢ້ານວ່າເດັກທີ່ເກີດມາຈະແພ້ບ້ານແພ້ເມືອງ.

ພະອົງກ່າວວ່າ : " ມັນຜິດເຊື້ອຜິດແຊງ ບໍ່ຄວນລ້ຽງໄວ້ ເພາະຢ້ານເຂັດຢ້ານຂວງ, ຊິເຮັດໃຫ້ບ້ານເມືອງຫລົ້ມຈົມ..."

ຄຳເວົ້າຂອງພະຍາຜູ້ເປັນພໍ່ຂອງເດັກເອງ ຕຳຕ້ອງຫົວໃຈນາງທັງສອງ ຈົນພວກນາງແຄ້ນອັ່ງແທບັນ ແລ້ວຫລັ່ງລົ້ນອອກມາເປັນນ້ຳຕາໄຫລອາບແກ້ມ. ພວກນາງປະຕິເສດທີ່ຈະປະຕິບັດຕາມຈຸດປະສົງຂອງພະຍາ ແລະ ກ່າວວ່າ: " ເຖິງແມ່ນ ລູກຊິເປັນສັດເດຣັດສານກໍຕາມ ພວກຂ້ານ້ອຍຂໍລ້ຽງໄວ້ ເພາະໄດ້ໄຫວ້ວອນຂໍນຳພະອິນແລ້ວ, ກືວ່າມັນຄືຕີນຄືມືຂອງທຸກໆຄົນ ບໍ່ມີໃຜຊິຕັດຖິ້ມໄດ້. ກ້າເອົາລູກໄປປ່ອຍປ່າ ພວກຂ້ານ້ອຍກໍຊິໄປຢູ່ນຳ, ກ້າເອົາໄປຝັງດິນ ຫລື ຜູກຈົມນ້ຳ ຂ້ານ້ອຍກໍຂໍແນບຢູ່ຂ້າງລູກ ຂໍຕາຍນຳລູກ ເພາະບໍ່ອາດປະລະໄລໄກຈາກລູກໄປໄດ້..."

ນາງຈັນທາ ແລະນາງລຸນ ອຸ້ມກອດລູກແລ້ວລົງຈາກຜາສາດຂອງພະຍາກຸສະລາດ ດ້ວຍນ້ຳຕານອງໜ້າ. ພວກນາງໄດ້ຕັດສິນໃຈແລ້ວຢ່າງເດັດຂາດ ທີ່ຈະບໍ່ປະຖິ້ມລູກ.

ພະຍາກຸສະລາດຄິດແຕ່ວ່າ ລູກທີ່ມີຮູບຮ່າງຜິດມະນຸດນັ້ນ ຄືໂຕອຸບາດ ທີ່ຈະເຮັດໃຫ້ເກີດຄວາມຫາຍະນະ, ດັ່ງນັ້ນ ເພື່ອຫາທາງກຳຈັດໄພອັນຕະລາຍແຕ່ຫົວທີ ພະອົງຈຶ່ງຮຽກໂຮມ ເສນາອາມາດທັງຫລາຍ ເພື່ອປຶກສາຫາຮູ້ກ່ຽວກັບວິທີການ ເຮັດໃຫ້ໂຕອຸບາດຈັງໄຣ ພົ້ນໄປຈາກເມືອງເປັງຈານ. ທາງສຽງສ່ວນຫລາຍ ກໍແມ່ນວ່າ ບໍ່ຄວນລ້ຽງ

ເດັກປະຫລາດນີ້ໄວ້ ເພາະຈະແພ້ພະຍາຜູ້ເປັນກະສັດຂອງເມືອງ ທັງຈະເກີດຄວາມສັບສົນອົນລະຫົນ ແລ້ວພາໃຫ້ບ້ານເມືອງເສົ້າຫມອງຫລົ້ມຈົມ. ຈໍາເປັນຕ້ອງເອົາເດັກໄປປ່ອຍປ່າ.

ແລ້ວພະຍາກຸສະລາດ ຜູ້ກຶກພິດຢາແຝດຈົນຂາດສະຕິສໍາປະຊັນຍະ ກໍສັ່ງໃຫ້ເສນາໄປບອກນາງຈັນທາ ແລະ ນາງລຸນ ເອົາລູກໄປປ່ອຍໃນປ່າ ໃຫ້ພົ້ນຫູພົ້ນຕາໄວໆ ນັບແຕ່ວັນນັ້ນ.

ມັນເປັນວັນ ແຫ່ງທຸກຂະເວທະນາ ທີ່ຫາຄໍາບັນຍາຍໄດ້ຍາກ. ນາງທັງສອງເອົາຜ້າຕຸ້ມລູກນ້ອຍທັງສາມ. ສັ່ງລາຜູ້ຄົນແລ້ວຍ່າງມຸ່ງຫນ້າສູ່ປ່າ. ພວກບ່າວໄພ່ ຜູ້ຈົງຮັກພັກດີພາກັນຕີເອິກເປັນທຸກນໍາທັງນໍ້າຕານອງຫນ້າ. ນັບເປັນການ**ອໍາລາ** ທີ່ມີສຽງສະອື້ນ ຊຶ່ງເປັນສັນຍານເຕືອນວ່າ ບໍ່ມີວັນທີ່**ຈະ**ຕ່າວຄືນມາເຫັນຫນ້າອີກ.

ນາງຈັນທາ ແລະ ນາງລຸນພາລູກບຸກເຂົ້າປ່າໄພຫນາ ໄປໄກໆຈົນກຶກຕັດຂາດ ຈາກໂລກພາຍນອກ. ພວກນາງຍອມສະຫລະທຸກຢ່າງແມ່ນແຕ່ຊີວິດຂອງຕົນເອງ ເພື່ອລູກນ້ອຍ ໂດຍຍອມທົນທຸກທໍລະມານ ໃຊ້ຊີວິດຢູ່ກາງປ່າ ຫາຫມາກໄມ້ ຫົວເຜືອກຫົວມັນມາລ້ຽງລູກ ດ້ວຍຄວາມກະຫນອມແພງ. ເອົາຮົ່ມໄມ້ ແລະ ງ່ອນຜາເປັນບ່ອນຊຸ້ນບັງແດດບັງຝົນ ເອົາເດືອນດາວເປັນເພື່ອນທາງໃຈ ແລະ ເປັນແສງສະຫວ່າງເຍືອງທາງໃນຄ່ໍາຄືນອັນດໍາມືດ.

# ຊີວິດໃນປ່າ

ນາງຈັນທາ ແລະນາງລຸນ ພາລູກຜະຈົນໄພຢູ່ໃນປ່າ, ປະສົບຄວາມລຳບາກຍາກແຄ້ນແສນສາຫັດ, ບາງຄັ້ງຕ້ອງກິນໝາກໄມ້ ທີ່ເປັນເຫຼືອນຂອງລິງ ຂອງບ່າງທີ່ເຮັດຫລູດຕົກລົງມາຈາກເທິງຕົ້ນໄມ້, ກາບດັ້ນປ່າຜ່າດົງດຳເນີນໄປ ໂດຍບໍ່ມີຈຸດໝາຍ, ບ່ອນໃດມີເຄື່ອງກິນຫລາຍກໍພັກເຊົາຢູ່ຫລາຍມື້ ແລ້ວກໍຍ້າຍໄປໜ້າເລື້ອຍໆ. ບາງມື້ທ້າຊີວິດຕັ້ງແຂ່ງຝົນ ຈົນປຽກອອນຍອນ, ຮ່າງກາຍສັ່ນສະທ້ານຍ້ອນຄວາມໜາວເຢັນ ແລະ ຍ້ອນຖືກນາບຂູ່ ຈາກສຽງສັດປ່າ ອັນມີ ນົກເຄົ້າ ນົກຂີ້ກີ່ ແລະ ທີ່ເປັນຈ້ອຍໆ ກໍແມ່ນສຽງທະນີຮ້ອງດັງກ້ອງຜາ. ນາງທັງສອງໄດ້ຍິນສຽງເຫລົ່ານີ້ແລ້ວ ກໍຢ້ານຈົນສັ່ນເຊັນ ແຕ່ກໍຈຳໃຈພາລູກຜ່ານຜ່າ ອຸປະສັກຂວາງກັ້ນທຸກຢ່າງ ແລ້ວມຸ່ງໄປໜ້າເລື້ອຍໆ, ສ່ວນທາງໃຈ ກໍໄຫວ້ວອນຫາພະອິນ ໃຫ້ລົງມາຊ່ອຍເບິ່ງແຍງຍາມຍາກ ໂດຍສະເພາະມາຊ່ອຍໃຫ້ລູກນ້ອຍທັງສາມ ພົ້ນທຸກພົ້ນຍາກ ທີ່ພວມຜະເຊີນຢູ່ໃນຂະນະນີ້.

ຊີວິດຢູ່ໃນປ່າຜ່ານໄປນຶ່ງເດືອນ ທ່າມກາງທຳມະຊາດ ທີ່ບໍ່ຄ່ອຍອຳນວຍສຳລັບ ແມ່ຍິງລ້ຽງລູກອ່ອນ ຄວາມເດືອດຮ້ອນຈຶ່ງທັບກຸ້ມກອງເປັນໝື່ນຊັ້ນແສນຊັ້ນ. ພະອິນຫລິງລົງມາຍັງໂລກລຸ່ມ ເຫັນຊີວິດທັງຫ້າ ພວມປະສົບເຄາະກຳຢ່າງໜັກໜ່ວງ ຈຶ່ງເນລະມິດຜາສາດ ອັນວິຈິດສວຍງາມຂຶ້ນໃຫ້ນຶ່ງຫລັງ. ວັນນັ້ນ ນາງທັງສອງອູ້ມລູກເລາະປ່າດົງ, ຂຶ້ນຫວິດຈາກເຫວຊັນ ແລ້ວແນມໄປທາງທິດເໜືອ

ກໍເລີຍ ເຫັນລັດສະຫມີເປັນສີສົ້ວຮຸ່ງໃສຢູ່ອຶ່ງຕຶ່ງ. ເມື່ອຫຍັບເຂົ້າໄປໃກ້ໆ ກໍພົບວ່າ ແມ່ນຜາສາດຫລັງງາມຕັ້ງຢູ່ກາງປ່າພົງໄພ. ສະຕິລະວັງໄພ ພາໃຫ້ພວກນາງຄິດວ່າ ຢ້ານແມ່ນຜີປ່າມາເຮັດລວງຫລອກໄວ້ ຈຶ່ງພາກັນລັ່ງເລໃຈ ບໍ່ກ້າເຂົ້າໄປໃນ.

ນາງຈັນທາເວົ້າວ່າ : "ທ້າຊີວິດພວກເຮົາເລາະຢູ່ໃນປ່າແຫ່ງນີ້ ແມ່ນພ້ອມທີ່ຈະປະເຊີນ ກັບຄວາມຕາຍທຸກເມື່ອທຸກຍາມ, ເປັນແນວໃດກໍເປັນກັນ, ມາພາລູກເຂົ້າໄປເບິ່ງເທາະ ! "

ແລ້ວເມື່ອກ້າວຂາເຂົ້າໄປ ພວກນາງກໍພາກັນຕົກສະເງີ້ດ້ວຍຄວາມປະຫລາດໃຈ ເພາະທີ່ປາກປະຕູມີປ້າຍຂຽນບອກວ່າ: " ອັນນີ້ແມ່ນຜາສາດທີ່ພະອິນເນລະມິດໄວ້ ໃຫ້ເປັນທານແກ່ເຊື້ອວົງກະສັດທັງຫ້າພະອົງ " ພ້ອມທັງມີຊື່ທ້າວນ້ອຍທັງສາມ ຂຽນໄວ້ຢ່າງບັນຈົງ.

ນາງຈັນທາ ແລະ ນາງລຸນ ອູ້ມລູກເຂົ້າໄປອາໄສຢູ່ໃນຜາສາດ ອັນວິຈິດພິດສະດານຫລັງນີ້. ພວກນາງຍ່າງເລາະເບິ່ງຫ້ອງນັ້ນຫ້ອງນີ້ ດ້ວຍຄວາມອັດສະຈັນ, ຫ້ອງນຶ່ງມີເຄື່ອງກິນຫລາຍຊະນິດ ກືກຈັດກຽມໄວ້ ແລະ ພວມສົ່ງກິ່ນຊວນແຊບ ລອຍມາເຂົ້າດັງ. ຫ້ອງນຶ່ງມີເຄື່ອງນຸ່ງ ເຮັດດ້ວຍແຜ່ນແພອັນຈົບງາມສີສັນສະດຸດຕາ ມີຫລາຍຊຸດຫລາຍຂະຫນາດ ສຳລັບທັງຫ້າຄົນ ທີ່ພວມສະພັດສະພອຍຢູ່ດຽວນີ້. ຢູ່ຕາມຝາມີຮູບສັດ ໃນລີລາຕ່າງໆ ເຊັ່ນ ຊ້າງ ຢູ່ໃນທ່າມ້ວນງວງ, ມີທັງຊ້າງນ້ອຍແນບຕິດຂ້າງແມ່ ໂດຍເອົາງວງຈ່ອງນົມແມ່ໄວ້, ມ້າທ້າວຄະນອງ ມີຫມາກທຶ່ງແຂວນໄວ້ທີ່ຄໍ ຢູ່ໃນທ່າທະຍານໄປຫນ້າ, ຄວາຍແມ່ນອນດົມລູກ, ນາງໂຕຢືນຢູ່



ໂດຍມີລູກຢືນຕິດຂ້າງບໍ່ຍອມຫ່າງ, ຮູບນົກບາງໆຊະນິດເຊັ່ນ : ນົກທົ່ງ, ນົກເຫບ, ຫ່ານ, ແຫລວ, ບາງ ພ່ອງພວມຈອບກິນກຸ້ງກິນປາ, ບາງພ່ອງບິນເວີ່ນຢູ່ກາງເວຫາ. ນອກນັ້ນ ຍັງມີເຄື່ອງຫລິ້ນອີກຈຳນວນນຶ່ງ ສຳລັບກຸມມານທັງສາມ ເພື່ອຄວາມເບີກບານມ່ວນຊື່ນຈິດໃຈ.

ທັງຫ້າເຊື້ອວົງກະສັດ ມີຊີວິດຢູ່ຢ່າງສະຫນຸກສະບາຍປາສະຈາກຄວາມທຸກຮ້ອນໃດໆ ໃນຜາສາດກາງປ່າພົງໄພ. ວັນເວລາຜ່ານໄປ, ສິນໄຊໃຫຍ່ຂຶ້ນ ພວມຮຽນປາກຮຽນເວົ້າ, ມີແວວສະຫລາດຫລັກແຫລມ, ທ້າວເວົ້າອອກມາ ຢ່າງຄົນມີປັນຍາຮອບຮູ້ຫລາຍສິ່ງຫລາຍແນວ ຈົນປ້າກັບແມ່ຊີນຳບໍ່ທັນ.

ແລ້ວວັນນຶ່ງ ສິນໄຊ ກໍຖາມຂຶ້ນວ່າ : " ທະນູກັບດາບທີ່ມີມາກັບລູກໃນມື້ເກີດນັ້ນເດຢູ່ໃສ ? ຂໍແມ່ ແລະ ປ້າຢ່າຊູອັດອຳລູກ ເນີ."

ນາງລຸນເວົ້າອອຍລູກວ່າ : " ລູກຍັງເປັນເດັກນ້ອຍຢູ່ບໍ່ຄວນກີ່ດາບກີ່ທະນູ, ກ້າໃຫ້ໃຫຍ່ສາກ່ອນ ຈຶ່ງຈັບບາຍເຄື່ອງເຫລົ່ານັ້ນ ແມ່ມ້ຽນໄວ້ໃຫ້ລູກຢ່າງດີແລ້ວ, ບໍ່ມີໃຜເອົາໄປດອກ."

ສິນໄຊອ້ອນວອນແມ່ ແລະ ປ້າໃຫ້ເອົາເຄື່ອງເຫລົ່ານັ້ນມາໃຫ້ເບິ່ງ ເພາະຢາກສະແດງລິດເດດ ໃຫ້ເປັນທີ່ປະຈັກຕາ. ທ້າວກ່າວວ່າ: " ລູກຢາກລອງສາດຕະສິນໃຫ້ແມ່ແລະປ້າ ເບິ່ງວ່າຜູ້ນ້ອຍໆ ຄືຈັ່ງລູກນີ້ ກໍມີລິດເດດເກັ່ງກ້າໃດເນີ, ເຫັນແລ້ວ ແມ່ ແລະປ້າ ຈະຕ້ອງທະນົງໃຈ ແລະເຊົາເປັນທຸກເປັນຮ້ອນໃນໃຈ."

ບາງລຸນບໍ່ຢາກຂືນໃຈລູກ, ແລ້ວຕໍ່ມາ ແມ່ ແລະ ປ້າ ກໍເຫັນດີນຳກັນ ມອບດາບ ແລະ ທະນູໃຫ້ສິນໄຊ, ທ້າວນ້ອຍເອົາດາບຂັດແອວ ສ່ວນມືກຶຖືທະນູໄວ້ ດ້ວຍທ່າທາງທະນົງອົງອາດ. ແມ່ກັບປ້າແຍງເບິ່ງທ້າວ ດ້ວຍຄວາມປະເອີບໃຈ ທັງເອົາມືລູບຄຳ ສິນໄຊ ດ້ວຍຄວາມຊື່ນຊົມກະຫນອມແພງ.

ຊີວິດຢູ່ທ່າມກາງປ່າໄມ້ດົງຫນາ ເຮັດໃຫ້ສິນໄຊ ຊິນເຄີຍກັບທຳມະຊາດ ຊຶ່ງມີທັງສິ່ງທີ່ ເອື້ອອຳນວຍ ແລະ ສິ່ງທີ່ເປັນອັນຕະລາຍ, ອ້ອມຜາສາດນັ້ນ ເປັນປ່າດົງດິບ ຊຶ່ງທ້າທາຍໃຫ້ ສິນໄຊ ຄິດຢາກຜະຈົນໄພລອງເບິ່ງ, ດັ່ງນີ້ ວັນນຶ່ງ ສິນໄຊ ຈຶ່ງຈັບເອົາທະນູມາຍິງ ດ້ວຍຄວາມຫ້າວຄະນອງ. ລູກສອນພຸ່ງຕັດອາກາດ ເກີດສຽງດັງສະນັ່ນຟ້າສະເທືອນດິນ ແລ້ວແຜ່ນຜະຫຍອງຂຶ້ນສູ່ເວຫາ ທະລຸກ້ອນເມກ ລວງຂ້າມຟ້າໄປເກືອງແດນສິມພະລີ ທີ່ເປັນບ່ອນຢູ່ຂອງພະຍາຄຸດພ້ອມດ້ວຍບໍລິວານນັບບໍ່ໄຂ່ວ ພະຍາຄຸດຕື່ນຕົກໃຈ ເຮັດອີເລີເປີເສີ, ແຕ່ເມື່ອລູກສອນບໍ່ເປັນອັນຕະລາຍຕໍ່ຄຸດທັງຫລາຍ ພະຍາຄຸດຈຶ່ງຕັ້ງສະຕິ ແລະ ສຳນຶກໄດ້ວ່າ ນີ້ແມ່ນລູກສອນຂອງພະໂພທິຍານ ຜູ້ທີ່ໄດ້ລົງມາເກີດໃນໂລກມະນຸດ ເປັນຜູ້ສົ່ງມາບອກເຕືອນໃຫ້ຮູ້, ຄຸດທັງຫລາຍສົມຄວນໄປຂາບໄຫວ້ ເພື່ອສະແດງຄວາມຈົງຮັກພັກດີ. ແລ້ວພະຍາຄຸດ ກໍຄາບເອົາລູກສອນ ແລະ ອວານເອົາບໍລິວານຄຸດທັງຫມົດບິນໄປຍັງຈຸດທີ່ມາຂອງລູກສອນ. ພວກຄຸດບິນເປັນແພ ຈົນມືດຟ້າມົວດິນ ເບິ່ງຄືເມກດຳ ທີ່ເຄື່ອນໄຫວໄປຢ່າງບໍ່ມີຍາມສຸດຍາມສ້ຽງ. ບໍ່ດົນພວກຄຸດກໍໄປຮອດ ສະຖານທີ່ຂອງສິນໄຊ ໂດຍເອົາສັງວານຄຳໄປມອບໃຫ້ເປັນຂອງຂວັນ ທັງຂັນອາສາເຮັດທຸກສິ່ງທຸກຢ່າງ. ສິນໄຊ ສະແດງຄວາມຊື່ນຊົມຍິນດີ

ຕໍ່ພະຍາຄຸດ ທີ່ພາບໍລິວານມາຂາບໄຫວ້ ແລະເລົ່າເຫດການສູ່ພະຍາຄຸດຟັງວ່າ ຕົນກັບນ້ອງຄືສັງທອງ ແລະ ອ້າຍສີໂຫ ພ້ອມທັງ ແມ່ ແລະ ປ້າ ກໍຖືກບິດາໄລ່ໜີຈາກເມືອງມາຢູ່ກາງດົງກາງປ່າ ຢ່າງສະພັດສະພອຍ, ມີແຕ່ຄວາມຫງຽບເຫງົາເສົ້າໂສກາ ຈຶ່ງຢາກໃຫ້ພະຍາຄຸດນຳບໍລິວານມາຢູ່ເປັນເພື່ອນໃນຕອນກາງເວັນເປັນປະຈຳ. ເມື່ອຊາບຈຸດປະສົງດັ່ງນັ້ນ ພະຍາຄຸດກໍສັ່ງໃຫ້ບໍລິວານ ອັນມີເຫລົ່າປັກສີຫລາຍຊະນິດ ຈັດມະໂຫລະສົບຄົບງັນຂຶ້ນຢ່າງມ່ວນແມ້ງ. ນົກກໍລະວິກ ສົ່ງສຽງຮ້ອງດັງກ້ອງໄພ ສຽງມ່ວນກວ່າສຽງດົນຕີໃດໆ, ພວກນາງກິນນະລີ ຢຽດແຂນຟ້ອນ ເປັນຈັງຫວະພ້ອມກັນ ງາມໜ້າສະອອນ, ໃຜເຫັນແລ້ວກໍຫາຍທຸກຫາຍໂສກ.

ພໍຮອດຍາມຄ່ຳມາ ພວກຄຸດກໍພາກັນລາກັບຄືນສູ່ແດນສິມພະລີ ອັນເປັນປ່າໄມ້ງິ້ວຂຽວ ອຸ່ມທຸ່ມຕະຫລອດປີ. ຕໍ່ຈາກນັ້ນ ສິນໄຊ ກໍເອົາທະນູມາຍິງອີກ, ບັດນີ້ ລູກສອນໄປຕົກທີ່ເມືອງນາກ. ມະຫາສະມຸດເກີດປັ່ນປ່ວນເປັນຟອງຍວກຍູ້ກະທົບກະເທືອນໄປທົ່ວຊາວນາກທັງໝົດ. ພະຍານາກເກີດສະທ້ານຢ້ານກົວ ເພາະລູກສອນຕົກລົງໃນຜາສາດຕໍ່ໜ້າຕໍ່ຕາ. ພະຍານາກຄິດສະເດືອກທັນທີ ດັ່ງດຽວກັບພະຍາຄຸດ ຄືຮີບຄາບເອົາລູກສອນ ແລ້ວອວານເອົາບໍລິວານນາກທັງໝົດ ເຫາະເຫີນໄປຍັງຜາສາດບ່ອນທີ່ພະອິນເນລະມິດຂຶ້ນໄວ້ໃຫ້ທ້າວສິນໄຊຢູ່ກາງປ່າ, ບໍ່ດົນຊາວນາກນັບເປັນລ້ານ ກໍມາຮອດມາເຖິງ.

ພະຍານາກກ່າວວ່າ : " ທັນທີທີ່ຂ້ານ້ອຍຮູ້ຂ່າວວ່າພະອົງມາເກີດໃນໂລກມະນຸດ ຂ້ານ້ອຍ ກໍຮີບຈັດບໍລິວານມາ

ຂາບໄຫວ້. ຊາວນາກອໍອາສາເຮັດທຸກຢ່າງຕາມຄວາມປະສົງ ຂອງພະອົງ."

ສິນໄຊ ເລົ່າສູ່ພະຍານາກຟັງ ເຖິງເລື່ອງທີ່ບິດາໄປຟັງຄຳສັບສົ່ງຈາກຜູ້ຄິດລ້ຽວ ແລ້ວຂັບໄລ່ມະເຫສີທັງສອງພ້ອມດ້ວຍລູກທັງສາມ ອອກຈາກເມືອງເປັງຈານ, ຊີວິດຢູ່ປ່າເປັນໄປຢ່າງສະພັດສະພອຍຫງອຍເຫງົາ ຈຶ່ງຢາກໃຫ້ພະຍານາກມາຢູ່ເປັນໝູ່ ເພື່ອສ້າງບັນຍາກາດສົດຊື່ນຕື່ນຕາຍາມກາງຄືນ.

ດັ່ງນີ້ ການເສບລະບຳຂັບຮ້ອງຈາກຊາວເມືອງນາກກໍດັງລະງົມຟົດຟື້ນຕະຫລອດຄືນຢູ່ປ່າແຫ່ງນີ້ ຊຶ່ງແຕ່ກ່ອນເຄີຍຫງຽບເຫງົາປ່ຽວພອຍ. ພວກນາກບ່າວສາວທັງຫລາຍແປງເພດເປັນມະນຸດ ພາກັນໃສ່ສາຍບ່ຽງບ້າຍ ທີ່ປະດັບດ້ວຍເມັດແກ້ວເຫລື້ອມຍິບຍັບ ແລ້ວກໍຟ້ອນປິ່ນໄປປິ່ນມາເປັນເຫລື້ອງຫລ້າງ. ແສງເຫລື້ອມຈາກເມັດແກ້ວ ຮຸ່ງມາບແມບໄປທົ່ວປ່າເປັນທີ່ຕື່ນຕາຕື່ນໃຈເມື່ອຍາມໄດ້ເຫັນ. ມະໂຫລະສົບຄົບວັນ ດຳເນີນໄປຈົນອະລຸນເບີກຟ້າ, ພະຍານາກຈຶ່ງອຳລາຈາກໄປ ໂດຍມອບແກ້ວວິເສດ ແລະສາຍສັງວານຄຳ ໃຫ້ແກ່ສິນໄຊ ໄວ້ເປັນເຄື່ອງຄ້ຳຂອງຄູນ.

ຄຸດ ແລະນາກ ຜັດປ່ຽນກັນມາເຝົ້າຮັກສາເຊື້ອວົງກະສັດທັງຫ້າຢູ່ເປັນປະຈຳ ຢ່າງສະເຫມີຕົ້ນສະເຫມີປາຍ. ຄືນ ແລະວັນຜ່ານໄປດ້ວຍຄວາມມ່ວນແມ້ງອອນຊອນໃຈ, ທ້າວທັງສາມພາກັນຈະເລີນໄວເຕີບໃຫຍ່ຂຶ້ນໂດຍບໍ່ມີໂພຍໄພໃດໆ. ສິນໄຊ ມີລິດເດດເກັ່ງກ້າພໍປານພະອິນ, ສັງທອງ ຜູ້ເກີດຮວມທ້ອງແມ່ດຽວກັນ ມີຕົນຕົວໃສກ້ຽງປານແກ້ວຜະລຶກ ສາມາດດຸດມ້າງພູໃຫ້ມຸ່ນທະລາຍ, ສ່ວນສີໂຫ ມີງາ

ຂາວກ້ຽງກົມງາມ ສາມາດສຽບແທງ ແລະ ງັດຫີນຜາໃຫ້ແຕກມ້າງພັງທະລາຍເປັນຝຸ່ນ. ນັບແຕ່ວັນທີ່ໄດ້ພັດພາກຈາກເມືອງມາຢູ່ປ່າ ຍ້ອນກຶກບິດາຂັບໄລ່ ຈົນຮອດດຽວນີ້ກໍໄດ້ເຈັດປີພໍດີ, ມັນເປັນເວລາເຈັດປີ ແຫ່ງການມີຊີວິດຢູ່ໂດຍຕັດຂາດຈາກໂລກມະນຸດ ຫລື ໂລກແຫ່ງເມືອງເປັງຈານ.

# ທ້າວທັງທົກ

ຢູ່ເມືອງເປັງຈານ ລູກຊາຍທີ່ເກີດຈາກນາງທັງທົກກໍໃຫຍ່ກ້າໜ້າບານ ແລະມີສຽງເລົ່າລືກັນວ່າ ເປັນພວກຜູ້ມີບຸນມາເກີດ. ພວກທ້າວຮຽນຮູ້ ຮີດຄອງປະເພນີໃນລາຊະວັງ ແລະ ມີຄວາມສະຫລາດຫລັກແຫລມ ໃນການເວົ້າຈາແຕ່ກໍມີທາງສຽງວ່າ ທັງທົກສະຫລາດໃນດ້ານຫລິບລີ້ນປິ້ນຄວາມ ຄືປາກເວົ້າແນວນຶ່ງ ແຕ່ຕົວຈິງເຮັດແນວນຶ່ງ. ແນວໃດກໍຕາມ ພະຍາກຸສະລາດ ກໍຮັກແພງລູກຊາຍປານແກ່ນຕາ ແລະ ກືວ່າເປັນບຸນຂອງພະອົງ ທີ່ໄດ້ລູກຊາຍສົມຄວາມປາກະໜາ. ເປົ້າໝາຍອັນບໍ່ປ່ຽນແປງ ທີ່ພະອົງຕັ້ງໄວ້ ໃກ້ຈະເປັນຄວາມຈິງເຂົ້າໄປເລື້ອຍໆ ນັ້ນຄືພະອົງ ຈະມອບໜ້າທີ່ໃຫ້ລູກຊາຍທັງທົກໄປປາບຍັກ ແລ້ວນຳເອົາອາສຸມຸນທາກັບຄືນມາ. ກ້າໜ້າທີ່ນີ້ບໍ່ໄດ້ຮັບການປະຕິບັດໃຫ້ສຳເລັດລຸລ່ວງໄປ ຄວາມແຄ້ນເລີກໆ ຈະຍັງຄົງເຮັດໃຫ້ດວງຈິດຂອງພະອົງ ບໍ່ມີຄວາມສະຫງົບໄດ້.



ແລ້ວວັນນຶ່ງ ພະຍາກຸສະລາດ ກໍເອີ້ນລູກຊາຍທັງຫົກ ມາພົບ ແລ້ວບອກຈຸດປະສົງໃຫ້ ລູກທຸກຄົນຮູ້.

ພະອົງວ່າ : " ເມື່ອປາບຍັກລົງໄດ້ ແລະ ເອົາອາຄືນມາແລ້ວພໍ່ຈະມອບເມືອງເປັງຈານ ໃຫ້ລູກປົກຄອງ. ຜູ້ໃດຊິຍັບອາສາລ້າງແຄ້ນແທນພໍ່ ກໍໃຫ້ກຽມຕົວກຽມໃຈ, ຕ້ອງອົດທົນເຂັ້ມແຂງ, ມີໃຈກ້າຫານ ແລະ ບໍ່ງໍ້ງ່ຽງຕໍ່ສິ່ງໃດໆ."

ທ້າວທັງຫົກຕອບຮັບພ້ອມກັນເພື່ອບໆວ່າ :

" ພວກລູກ ຂໍຍັບອາສາໄປປາບຍັກມານໃຫ້ໄດ້ ເຖິງວ່າວຽກງານຈະຫຍຸ້ງຍາກກັບດານປານໃດກໍຕາມ. ແຕ່ວ່າພວກລູກນີ້ຍັງບໍ່ມີວິຊາອາຄົມໃດໆ, ດັ່ງນັ້ນ ຈຶ່ງຂໍໄປຊອກຮຽນຮູ້ຝຶກຝົນຕົນເອງໃຫ້ເກັ່ງກ້າ, ມີຄວາມສາມາດໃນເລື່ອງສາດຕະສິນສາກ່ອນ."

ພະຍາກຸສະລາດ ເຫັນດີຕາມຄວາມປະສົງຂອງພວກລູກ ທີ່ຈະໄປຮຽນວິຊາໃຫ້ມີລິດເດດ ຫມາຍຄວາມວ່າ ທ້າວທັງຫົກຈະຕ້ອງເຂົ້າປ່າ ໄປຫາພະລືສີ ຜູ້ມີລິດເດດທີ່ຈຳສິນຢູ່ກາງປ່າ ແລະ ຈະຕ້ອງໃຊ້ເວລາດົນສົມຄວນ, ມັນເປັນເລື່ອງຈຳເປັນທີ່ລູກຊາຍຂອງພະຍາ ຫລື ກະສັດຈະຕ້ອງເກັ່ງກ້າ ໃນດ້ານສາດຕະສິນ ທັງນີ້ ເພື່ອປົກປ້ອງບ້ານເມືອງ ແລະ ປາບປາມພວກຍັກມານ ທີ່ຈະມາຮາວີຕີປຸ້ນ ໂດຍສະເພາະໃນການສູ້ກັບຍັກກຸມພັນແລ້ວ ຈະຕ້ອງມີລິດເດດເກັ່ງກ້າ ເປັນຍອດຄົນຈຶ່ງຈະສູ້ໄຫວ. ພະອົງແນມເບິ່ງຫນ້າລູກຊາຍທັງຫົກດ້ວຍຄວາມປະເອີບໃຈ ແລ້ວກໍມອບຄຳໃຫ້ພວກລູກຈຳນວນເທົ່າໆກັນ ເພື່ອໄວ້ແຮກິງ ແລ້ວທ້າວທັງຫົກກໍຂາບລາພໍ່ລົງຈາກລາຊະວັງໄປ.

ພະຍາກຸສະລາດເຊື່ອໝັ້ນວ່າ ໃນບໍ່ດົນນີ້ ສັດຕູຄູ່ອາຄາດຈະຕ້ອງດັບດິ້ນປະລາໄຊຢ່າງສິ້ນນໍ້າໜ້າ.

ທ້າວທັງທັກ ຈັດແຈງແຕ່ງເຄື່ອງຂອງສຳລັບເດີນທາງໄກ ແລະ ພາຍຫລັງສັ່ງລາແມ່ທັງທັກ ແລ້ວພວກທ້າວກໍອອກເດີນທາງມຸ່ງໜ້າສູ່ສາຍພູ ທີ່ທັບກັນເປັນລັ່ນຢູ່ສຸດຂອບຟ້າທ່າມກາງຄວັນໝອກຈາງໆ. ບະຈຸດບຶ່ງໄກໆພຸ້ນລືກັນວ່າພະລືສີ ຜູ້ມີມົນຄາຖາເຂັດຢຳ ດຳລົງຕົວຢູ່ຢ່າງສັນໂດດ ທ່າມກາງທຳມະຊາດອັນສະຫງົບ.

ທັກອ້າຍນ້ອງຂຶ້ນພູສູງ ເລາະລຽບເຫວຊັນ ຫລຽວລົງລຸ່ມ ເຫັນນໍ້າຕົກໂຕນລົງຕາດຫີນ ດັງອຶງຄະນຶງ, ອາຍນໍ້າເປັນຄວັນຂາວໆລອຍກົ້ວ ປົກຄຸມປາຍໄມ້ ສີຂຽວອຸ່ມທຸ່ມ. ພວກລີງ ພວກຄ່າງ ແລະ ທະນີ ພາກັນເຕັ້ນໂຕນໂຍນໂຕໄປຕາມງ່າໄມ້ ແລະ ເຄືອເຂົາ. ແມງພູ່ ແມງກະເບື້ອ ບິນສວ່ານສົບ ຕອມດອກໄມ້ ອັນມີດອກເຜີ້ງ, ດອກກຽງລົມ, ດອກສ້ຽວ ທີ່ພວມບານເຮືອງເຮື່ອ ຢູ່ທົ່ວປ່າດົງ. ພວກທ້າວເດີນທາງເລາະປ່າ ໄດ້ສາມເດືອນປາຍ, ໄດ້ຜ່ານຜາດ່າງ ແລະ ຜາກະໄດ ແລ້ວກໍເລີຍຫລົງທາງ. ທັງທັກວົນວຽນໃນດົງທີ່ມີສັດປ່າ ເຊັ່ນ ຊ້າງ ກະທິງ ໝີ ເໝືອຍ ແຮດ ແລະ ອື່ນໆ... ໄດ້ຍິນສຽງສັດຮ້ອງແລ້ວ ກໍພາກັນຢ້ານ ສັ່ນເຊັນຮີບກ້າວຍ່າງໄປໄວໆ ເພື່ອໃຫ້ຫວີດຈາກດົງສັດຮ້າຍ, ທັງທັກຍ່າງໄປໜ້າເລື້ອຍໆ ຄິດວ່າໄປໄກຫລາຍໂຍດ ແຕ່ແລ້ວຊໍ້າພັດກ້ຽວຄືນມາບ່ອນເກົ່າ. ເທິງຟ້າເມກດຳກໍປົກຄຸມໄປທົ່ວທຸກທິດ ເຮັດໃຫ້ທ້າວທັງທັກ ອຸກອັ່ງຄັ່ງແຄ້ນ ຈົນປັນຍາເພາະຕັ້ງແຕ່ເກີດມາ ຍັງບໍ່ເຄີຍລຳບາກກາກກຳຢ່າງແສນ

ສາຫັດປານນີ້ຈັກເທື່ອ. ແລ້ວພວກທ້າວກໍພາກັນໄຫວ້ວອນ ຫາສິ່ງສັກສິດ ທີ່ຢູ່ຕາມພູຜາປ່າໄມ້ ໃຫ້ມາຊ່ອຍຊີ້ທາງ ເພື່ອ ໄປກຶກປ່ອງລ່ອງກຶກແລວ. ປາກົດວ່າ ໃນເວລາຕໍ່ມາ ເມກດໍາ ໄດ້ມະຫັບມະຫາຍໄປ, ທົບທາງແຈ້ງສະຫວ່າງ ເປັນແລວໄປ ຢ່າງຫນ້າອັດສະຈັນ. ພວກທ້າວພາກັນໄຕ່ຕາມທາງນັ້ນ ໄປ ຈົນຮອດບໍລິເວນອັນເປັນທີ່ຢູ່ຂອງສິນໄຊ.

## ທ້າວທັງທົກໄປພໍ້ສິນໄຊ

ພະຍາຄຸດ ພ້ອມດ້ວຍບໍລິວານ ທີ່ເຝົ້າຮັກສາອານາ ບໍລິເວນອ້ອມແອ້ມຜາສາດ ໄດ້ຍິນສຽງຄົນຕ່າງກຸ່ມ ຈຶ່ງບິນ ໄປບອກສິນໄຊ. ເມື່ອຮູ້ດັ່ງນັ້ນ ສິນໄຊກໍຟ້າວໄປຍັງສະຖານທີ່ ດັ່ງກ່າວທັນທີໂລດ. ທ້າວສິ່ງສຽງເອີ້ນໄປໃສ່ດັງໆ ຈົນທົກ ອ້າຍນ້ອງຕົກໃຈດ້ວຍຄວາມຢ້ານກົວ ແລ້ວກໍພາກັນປົບແລ່ນ ເຕັ້ນໂຕນ ລົງໄປລີ້ຢູ່ກ້ອງເງີບຫີນທີ່ລຸ່ມເຫວ.

" ແມ່ນໃຜຫັ້ນ ? " ສິນໄຊເອີ້ນໄປໃສ່ອີກ.

ທ້າວທັງທົກຟັງລັກໆແລ້ວ ຮູ້ວ່າແມ່ນສຽງຄົນ ບໍ່ ແມ່ນສຽງຜີສາງນາງໄມ້ໃດໆ ຈຶ່ງພາກັນປີນຂຶ້ນມາປາກ ເຫວ ແລ້ວກໍເຫັນສິນໄຊ ຜູ້ມີຜິວພັນຜ່ອງໃສ ຢືນຢູ່ດ້ວຍທ່າ ທາງສະຫງ່າຜ່າເຜີຍ. ທ້າວທັງທົກດີໃຈທີ່ພາຍຫລັງຫລົງ ທາງຢູ່ກາງປ່າມາບັດນີ້ ໄດ້ມາເຖິງບ່ອນມີຜູ້ຄົນ ຈຶ່ງພາກັນ ເຂົ້າໄປຂາບໄຫວ້ ຂໍມອບກາຍກະຫວາຍຕົວຕໍ່ສິນໄຊ. ແຕ່

ດ້ວຍສັນຊາດຍານ ຢ້ານກົວອັນຕະລາຍ ທ້າວທັງຫົກກໍມີອາການສັ່ນເຊັນ ຈົນໜ້າຕາຫລ່າເຫລືອງຄືປູຈີ່ ທີ່ເຫັນພວກຄຸດຈຳນວນຫລວງຫລາຍ ເຕັມໄປທົ່ວບໍລິເວນ. ສິນໄຊ ເຫັນອາການດັ່ງກ່າວນັ້ນ ກໍມີໃຈອີ່ດູ ແລ້ວກໍບອກໃຫ້ພະຍາຄຸດພ້ອມດ້ວຍບໍລິວານ ແລະ ສັດອື່ນໆຫລີກໜີໄປຫ່າງໆ.

ສິນໄຊສໍ້ຖາມພວກທ້າວທັງຫົກວ່າ :

" ພວກເຈົ້າເປັນເຊື້ອແນວຜູ້ໃດ, ມາແຕ່ເມືອງໃດ, ມີຄວາມທຸກຮ້ອນແນວໃດ ຈຶ່ງພາກັນຫມົ້ນປ່າຜ່າດົງ ຈົນມາຮອດມາເຖິງແຫ່ງນີ້."

ທ້າວທັງຫົກຕອບວ່າ ພວກຕົນຢູ່ເມືອງເປັງຈານ, ພາກັນອອກເດີນທາງດັ້ນປ່າຜ່າດົງມາ ນັບເປັນເວລາຫລາຍວັນຫລາຍເດືອນແລ້ວ ໄດ້ພົບກັບຄວາມລຳບາກກາກກຳຫລາຍ ເພາະຫລົງທາງ, ບໍ່ຮູ້ຮອມທາງໄປ ຈຶ່ງຕົກມາເຖິງ ແຫ່ງນີ້.

ເມື່ອຮູ້ວ່າທ້າວທັງຫົກເປັນໃຜ ມາແຕ່ໃສແລ້ວ ສິນໄຊຈຶ່ງພາໄປຍັງຫໍຄຳ ອັນເປັນທີ່ພັກຂອງຕົນ ເພື່ອພົບກັບແມ່ ແລະ ປ້າ. ທ້າວທັງຫົກເຫັນຫໍຄຳ ຫລື ຜາສາດຢູ່ກາງປ່າກໍພາກັນຕື່ນຕາຕື່ນໃຈ ທັງງຶດງໍ້ອັດສະຈັນ ໃນຄວາມວິຈິດສວຍງາມ ປານວ່າຢູ່ເມືອງສະຫວັນຊັ້ນຟ້າ. ດ້ວຍຄວາມຮູ້ສຶກຈິ່ງຈຽມ ພວກທ້າວຫມອບໆຄານໆ ແລະ ຂາບລົງຕໍ່ໜ້າແມ່ ແລະ ປ້າ ຂອງ ສິນໄຊ ທັງເລົ່າວ່າ ພວກຕົນເປັນລູກຂອງພະຍາເມືອງເປັງຈານ ໄດ້ພາກັນເດີນທາງເຂົ້າປ່າຫາຮຽນສາດຕະສິນ ເພື່ອຈະນຳໄປໃຊ້ປາບຍັກ ຜູ້ຊຶ່ງໄປລັກເອົາອາສຸມຸນທາໜີໄປ ແຕ່ຫລາຍປີມາແລ້ວ, ທີ່ຕ້ອງເຂົ້າ

ປ່າ ແລະ ມາຕົກເຂດນີ້ ກໍແມ່ນປະຕິບັດຕາມຈຸດປະສົງຂອງພະຍາຜູ້ເປັນພໍ່.

" ນັບເປັນບຸນແທ້ໆ ທີ່ພວກຂ້ານ້ອຍຫລົງທາງແລ້ວມີເທວະດາຊີ້ບອກທິດທາງ ຈຶ່ງໄດ້ມາຮອດມາເຖິງແຫ່ງນີ້." ພວກທ້າວກ່າວກະແຫລງຄວາມ.

ເມື່ອຮູ້ວ່າ ທ້າວທັງທົກບໍ່ແມ່ນຜູ້ອື່ນໄກ ແຕ່ແມ່ນເຊື້ອສາຍອັນດຽວກັບ ນາງຈັນທາ ແລະ ນາງລຸນ ຈຶ່ງບອກຄວາມຈິງວ່າ ພວກຕົນບໍ່ແມ່ນຊາວພູດອຍ ຫລື ໄທອື່ນໄທໄກແຕ່ຢ່າງໃດ, ຫາກແຕ່ແມ່ນມະເຫສີ ຂອງພະຍາກຸສະລາດແຫ່ງເມືອງເປັງຈານ ຜູ້ເປັນພໍ່ຂອງທ້າວທັງທົກນີ້ເອງ. ແຕ່ເນື່ອງຈາກວ່າ ພະຍາມີຈິດໃຈບໍ່ທ່ຽງທຳ ເຫັນຜິດເປັນກືກຈຶ່ງມີຄຳສັ່ງໃຫ້ໄລ່ຫ້າຊີວິດ ຄືທັງເມຽ ແລະລູກຂອງຕົນເອງໜີອອກຈາກເມືອງເປັງຈານ. ລູກເມຍຕ້ອງລຳບາກກາກກຳ ນອນກາງດິນ ກິນບໍ່ອີ່ມບໍ່ເຕັມ, ແຕ່ຍ້ອນບຸນສົມພານຂອງລູກນ້ອຍທັງສາມນີ້ ພະອິນແນມລົງມາເຫັນ ສະພາບອັດຕະຄັດແສນສາຫັດ ຈຶ່ງເນລະມິດຜາສາດຂຶ້ນໃຫ້ນັ່ງຫລັງຢູ່ທ່າມກາງປ່າດົງພົງໄພແຫ່ງນີ້. ສ່ວນຫມູ່ເພື່ອນທີ່ມາຫລິ້ນນຳ ຫລື ມາເຝົ້າຮັກສາ ກໍມີແຕ່ຫມູ່ສັດ ເຊັ່ນ ຄຸດ ນາກ ເສືອສິງ ຊ້າງ ແຮດ ເປັນຕົ້ນ.

ທ້າວທັງທົກ ເຫັນວ່າ ສິນໄຊ ມີລິດເດດ ສາມາດບັນຊາໃຫ້ສັດຕ່າງໆ ມາເປັນບໍລິວານໄດ້ ຈຶ່ງພາກັນກົ້ມລົງຂາບໄຫວ້ຫລາຍເທື່ອຫລາຍທີ ແລະຂໍຮຽນຮູ້ສາດຕະສິນນຳ ໂດຍຂໍເອົາຄຳ ເປັນຄ່າຕັ້ງຄາຍ ຫລືເວົ້າໃຫ້ແປນໆ ແມ່ນເອົາຄຳເປັນຄ່າຈ້າງຮຽນວິຊາອາຄົມ.



ແຕ່ສິນໄຊກ່າວວ່າ : " ຂ້ອຍບໍ່ຮູ້ເວດມົນ ເພື່ອເສກເປົ່າຫຍັງດອກ. ການທີ່ພວກສັດອັນມີ ນາກ, ຄຸດ ມາເຝົ້າຮັກສາຢູ່ບ່ອນນີ້ ກໍແມ່ນລູກສອນ ໄປໄລ່ຕ້ອນເອົາມາຕ່າງຫາກ. ຂ້ອຍເອງພຽງແຕ່ຍິງລູກສອນອອກໄປຊື່ໆ."

ທ້າວທັງຫົກ ບໍ່ລົດລະຄວາມພະຍາຍາມ ຍັງນົບນອບໄຫວ້ວອນຕໍ່ຈົນນັບຄັ້ງບໍ່ຖ້ວນ ເພື່ອໃຫ້ສິນໄຊສອນວິຊາອາຄົມໃຫ້ຕາມຈຸດປະສົງເດີມ ທີ່ຕັ້ງເອົາໄວ້ກ່ອນຈາກເມືອງມາ.

ພວກທ້າວເວົ້າອອຍ, ເວົ້າຍົວະເຍົ້າສິນໄຊ ດ້ວຍການກະແຫລງແປງລີ້ນວ່າ :

"ພະຍາພໍ່ຈິ່ມຫາມື້ລະພັນເທື່ອ, ເພິ່ນຮູ້ສຶກກິນແຫນງທີ່ໄດ້ໄລ່ຫ້າຊີວິດພວກເຈົ້າຫນີຈາກເມືອງ, ແລະເຊື່ອວ່າພວກເຈົ້າເສຽຊີວິດແຕ່ດົນແລ້ວ ເພິ່ນຈົ່ມທຸກວ່າ ທີ່ຊາຕາກັມເປັນໄປແນວນີ້ ກໍຍ້ອນເວນກັມທີ່ທຳໄວ້ແຕ່ປາງກ່ອນ. ບັດນີ້ພວກເຮົາໄດ້ມາເຫັນກັບຕາ ຈຳເປັນຕ້ອງເອົາເລື່ອງນີ້ ໄປບອກເລົ່າສູ່ເພິ່ນຟັງ. ແນວໃດເພິ່ນກໍຕ້ອງໃຫ້ເສນາອາມາດ ມາເຊີນເອົາພວກນ້ອງ ກັບຄືນເມືອເມືອງຢ່າງແນ່ນອນ."

ສິນໄຊ ເວົ້າວ່າ :

"ຂ້ອຍບໍ່ຂັບຄວາມດອກ ຖ້າພະຍາພໍ່ຢາກໃຫ້ກັບຄືນເມືອ. ຈົ່ງບອກເພິ່ນວ່າ ດຽວນີ້ພວກຂ້ອຍທັງຫ້າຢູ່ສຸກສະບາຍດີ, ມີແຕ່ຕອນເຂົ້າປ່າທຳອິດນັ້ນ ສຸດແສນລຳບາກກາກກຳ ເພາະສາມອ້າຍນ້ອງພວກຂ້ອຍ ຍັງເປັນເດັກແດງຢູ່. ດຽວນີ້ພວກເຮົາ ໃຫຍ່ກ້າຫນ້າບານ ແລະ ກຸ້ມຕົນເອງໄດ້ຫມົດທຸກຢ່າງ."

ຝ່າຍທ້າວທັງຫົກເວົ້າຂຶ້ນວ່າ :

"ພວກເຮົານີ້ຢ້ານແຕ່ພະຍາພໍ່ບໍ່ເຊື່ອ. ເພື່ອຢັ້ງຢືນວ່າ ພວກນ້ອງຍັງຢູ່ໃນດົງໃນປ່າ ແລະ ພ້ອມທີ່ຈະກັບຕ່າວຄືນເມືອງ ຢາກໃຫ້ນ້ອງບອກໃຫ້ສັດທັງຫລາຍ ຫລັ່ງເຂົ້າໄປໃນເມືອງເປັງຈານ ເພື່ອເປັນສິ່ງສະແດງວ່າ ສິນໄຊຍັງມີຊີວິດຢູ່ ແລະ ມີລິດເດດເກັ່ງກ້າສາມາດ ບັນຊາສັບພະສັດທັງຫລາຍໃຫ້ເຮັດຕາມຈຸດປະສົງຂອງຕົນໄດ້ທຸກຢ່າງ."

ພວກທ້າວເວົ້າຫລາຍສິ່ງຫລາຍແນວ ແລ້ວກໍເອົາຄຳທີ່ພະຍາພໍ່ເອົາມານັ້ນ ມອບໃຫ້ສິນໄຊທັງໝົດ.

ແຜນການເຕັມໄປດ້ວຍເຈຕະນາບໍ່ດີ ຂອງທ້າວທັງຫົກ ດຳເນີນໄປໄດ້ຂັ້ນນຶ່ງແລ້ວ. ສິນໄຊ ບໍ່ຄາດຄິດວ່າ ພວກເຂົາຈະມີຈິດໃຈໂລບລ້ຽວ ຈຶ່ງເຫັນດີຕາມທີ່ທ້າວທັງຫົກ ຂໍຮ້ອງ ແລະ ໄດ້ກຳນົດວັນ ທີ່ຈະບອກໃຫ້ສັດທັງຫລາຍ ຫລັ່ງໄຫລເຂົ້າໄປຍັງເມືອງເປັງຈານ.

ເມື່ອເຫັນດີເຫັນພ້ອມນຳກັນແລ້ວ ທ້າວທັງຫົກ ກໍຟ້າວພາກັບຕ່າວຄືນເມືອງເປັງຈານ ໂດຍໄປທັງເວັນທັງຄືນ, ຂ້າມຫ້ວຍຂ້າມເຫວ, ຜ່ານປ່າຊ້າງດົງເສືອ ດັ້ນດຸ່ງໄປ ເພື່ອໃຫ້ຮອດໄວເທົ່າໃດຍິ່ງດີ ເພາະຈະໄດ້ອວດອ້າງພະຍາພໍ່ວ່າ ພວກຕົນໄດ້ສຳເລັດການຮຽນຮູ້ ສາດຕະສິນ ຈົນມີລິດເດດເກັ່ງກ້າ ເປັນທີ່ເກງຂາມຂອງຄົນ ແລະ ສັດໃນທົ່ວແຜ່ນດິນ.

ຂະນະເດີນທາງໄປ ພວກທ້າວກໍລົມກັນວ່າ : " ພວກເຮົາຕ້ອງຕົວະພະຍາພໍ່ວ່າ ພວກເຮົາມີລິດເດດ ສາມາດສັ່ງໃຫ້ ສັບພະສັດທັງຫລາຍ ຮວມທັງສັດທີ່ໂຫດຮ້າຍ ແລະ ສັດທີ່ມີພິດຮ້າຍແຮງ ເຮັດທຸກສິ່ງທຸກຢ່າງ ຕາມການບັນຊາຂອງພວກເຮົາ. ແລ້ວຄົນທັງຫລາຍກໍຈະຢຳເກງນັບຖືພວກເຮົາ ພາກັນມານ້ອມກາຍກະຫວາຍຊີວິດ..."

# ລູກບໍ່ສັດຊື່

ພວກທ້າວທັງຫົກ ກັບຄືນມາຮອດປະຕູເມືອງ ໃນຍາມຄໍ່າຄືນ. ທະຫານຍາມຮັກສາປະຕູ ໄຕ້ໄຟເຍືອງທາງໃຫ້ ແລະ ພາກັນແຫນແຫ່ເປັນຂະບວນ ເຂົ້າໄປຍັງຜາສາດຂອງມະເຫສີທັງຫົກ ຊຶ່ງຄອງຄອຍລູກຊາຍ ດ້ວຍຄວາມເປັນຫ່ວງກັງວົນ ນັບແຕ່ວັນທີ່ພວກທ້າວຈາກໄປ. ບັນຍາກາດເບີກບານມ່ວນຊື່ນ ປາກົດໃຫ້ເຫັນອີກ ພາຍໃນຜາສາດຂອງຫົກມະເຫສີພາຍຫລັງທີ່ງຽບເຫງົາໄປ ເປັນເວລາຫລາຍເດືອນ.

ຮຸ່ງເຊົ້າມື້ໃຫມ່ ທ້າວທັງຫົກ ກໍພາກັນເຂົ້າໄປໄຫວ້ພະຍາພໍ່ ຊຶ່ງຕື່ນເຕັ້ນດີໃຈເປັນພິເສດ ແລະ ຕັ້ງຄໍາຖາມທັນທີທັນໃດໂລດ :

" ພວກລູກເຂົ້າປ່າພົງໄພ ໄປຫາຮຽນຄວາມຮູ້ສາດຕະສິນ ກໍຍັງໄດ້ດັ່ງສົມປະສົງບໍ່ ? "

ພວກທ້າວຍໍມືນົບ ແລ້ວເວົ້າອວດອ້າງວິຊາອາຄົມເພື່ອໃຫ້ພະຍາພໍ່ປະເອີບໃຈໃນຕົວ ຂອງພວກຕົນ ຊຶ່ງຄວາມຈິງແລ້ວ ເປັນການຕົວະລ່າຍ ຢ່າງບໍ່ກະດຽມປາກ.

ພວກທ້າວວ່າ : " ພວກລູກຮຽນຮູ້ສາດຕະສິນຄົບຫມົດທຸກຢ່າງ ຈຶ່ງບໍ່ຢ້ານອັນສໍ່າເທວະດາອິນພົມ, ຕໍ່ໃຫ້ຫລັ່ງກັນມາຈົນເຕັມແຜ່ນດິນ ຫລື ເຕັມແຜ່ນຟ້າ. ອັນເມືອງນ້ອຍໃຫຍ່ ພາຍໃຕ້ລຸ່ມຟ້ານີ້ ພວກລູກຊິປາບໃຫ້ຮາບຄາບ ແລ້ວໃຫ້ມານອບນ້ອມສິ່ງສ່ວຍເທົ່າໃດກໍໄດ້..."

ເມື່ອໄດ້ຟັງດັ່ງນັ້ນ ພະຍາກຸສະລາດກໍດີໃຈ ທີ່ເຫັນວ່າພວກລູກມີລິດເດດເກັ່ງກ້າ ສົມເປັນຫນໍ່ກະສັດ ທີ່ຈະສືບທອດ



ການຄອງລາຊະບັນລັງຕໍ່ໄປພາຍໜ້າ. ແລ້ວພະອົງ ກໍໃຫ້ພວກລູກສະແດງລິດເດດໃຫ້ເບິ່ງ ແຕ່ພວກທ້າວເວົ້າອ້ອມຄ້ອມວ່າ :

" ເທື່ອທໍາອິດນີ້ ພວກລູກຊິສະແດງວິຊາອາຄົມ ດ້ວຍການເຕົ້າໂຮມສັດທຸກຊະນິດ ທັງສັດນ້ອຍສັດໃຫຍ່, ທັງສັດໂຫດຮ້າຍ ແລະ ມີພິດ. ດັ່ງນັ້ນ ໃນມື້ອື່ນນີ້ ພວກລູກຊິຍິງສອນໄປໄລ່ຕ້ອນເອົາສັດທັງຫລາຍ ໃຫ້ມາເຕົ້າໂຮມກັນຢູ່ທີ່ເມືອງເປັງຈານນີ້. ຂໍໃຫ້ພະຍາພໍ່ມີຄໍາສັ່ງໃຫ້ ເສນາໄປກ່າວເຕືອນບ່າວໄພ່ລາສະດອນໃຫ້ກຽມຕົວກຽມໃຈໄວ້ ເພື່ອບໍ່ໃຫ້ແຕກຕື່ນຢ້ານກົວ ແລະ ໃຫ້ຄອງກ້າເບິ່ງສັດທັງຫລາຍ ທີ່ຈະຫລັ່ງມາຢ່າງບອກໄດ້ໃຊ້ຟັງ."

ພະຍາກຸສະລາດ ມີອາລົມສົດຊື່ນແຈ່ມໃສ, ຄວາມກັງວົນທີ່ເຄີຍມີມາ ປາກົດວ່າລຶບຫາຍໄປຈົນບໍ່ມີຮ່ອງຮອຍ. ທ້າວທັງຫົກແນມເຫັນແສງສະຫວ່າງ ທີ່ຈະກ້າວໄປສູ່ຄວາມສໍາເລັດ ໃນການໃຊ້ອຸບາຍລາຍຫລ່ຽມ. ພວກທ້າວອັດອໍາຄວາມຈິງອັນນຶ່ງໄວ້ ນັ້ນຄື ບໍ່ຍອມບອກພະຍາພໍ່ ກ່ຽວກັບເລື່ອງໄດ້ພົ້ສິນໄຊຢູ່ປ່ານັ້ນເລີຍ.

ໃນຕອນແລງວັນນັ້ນ ປະຊາຊົນລາສະດອນໃນເມືອງເປັງຈານ ໄດ້ຮັບການບອກເລົ່າປ່າວເຕືອນວ່າ ໃນວັນຮຸ່ງຂຶ້ນລາຊະບຸດທັງຫົກ ຂອງພະຍາກຸສະລາດ ຈະສະແດງລິດເດດໂດຍເອີ້ນເອົາສັບພະສັດທັງຫລາຍເຂົ້າເມືອງເປັງຈານ.

ຂ່າວນີ້ ກືວ່າເປັນເລື່ອງສໍາຄັນເປັນພິເສດ ເພາະເຮັດໃຫ້ຊາວເມືອງ ມີຄວາມເຫລື້ອມໃສສັດທາ ໃນຕົວພວກທ້າວຜູ້ທີ່ຈະປົກຄອງ ບ່າວໄພ່ລາສະດອນໃນພາຍໜ້າ.

ໃນທີ່ສຸດ ກໍຮອດວັນເວລາ ຊຶ່ງທ້າວທັງທຶກຕົກລົງນັດໝາຍກັນໄວ້ກັບ ສິນໄຊ ອັນໝາຍເຖິງວັນກຸດມາ ທີ່ພວກທ້າວໄດ້ເຂົ້າພົບຂາບໄຫວ້ພະຍາພໍ່ນັ້ນເອງ.

ສິນໄຊ ເອີ້ນບອກສັດທັງຫລາຍ ໃຫ້ເຂົ້າໄປຍັງເມືອງເປັງຈານ ເພື່ອໃຫ້ພະຍາພໍ່ ແລະ ຊາວເມືອງໄດ້ເບິ່ງໄດ້ເຫັນຢ່າງເຕັມຕາ. ພວກຄຸດ ພວກນາກ ນັບເປັນແສນເປັນລ້ານພາກັນເຫາະເຫີນໄປຢ່າງໄວວາ ຈົນທ້ອງຟ້າເມືອງເປັງຈານມືດມົວ ປານຄືນເດືອນດັບ, ທາງພາກພື້ນດິນ ພວກຊ້າງເສືອໂຄ່ງ ເສືອ ດາວ ແຮດ ກະທິງ ຕະຫລອດທັງງູນາໆຊະນິດ ກໍຫລັ່ງມາຈົນອັ່ງອໍ, ເມື່ອເປັນດັ່ງນີ້ ປະຊາລາສະດອນເລີຍພາກັນແຕກຕື່ນຢ້ານກົວ. ໃນຕົວເມືອງ ເກີດຄວາມສັບສົນອົນລະໜົນ ປານວ່າ ຟ້າຫລົ່ນທັບລົງໃສ່ພະສຸທາ, ບາງຄົນແລ່ນໜີປະລູກປະເມຽ, ບາງຄົນກອດຄໍກັນໄວ້ອຸ້ມລຸ້ມເພາະບໍ່ຮູ້ຮ່ອມທາງໜີ. ມະເຫສີ ທັງທຶກກໍຢ້ານສັ່ນເຊັ່ນ ຈົນໜ້າຫລ່າຕາຕາຍ. ສ່ວນພະຍາກຸສະລາດ ກໍຕົກຂະມ່າບໍ່ຮູ້ວ່າຊິເຮັດສິໜ້າແບບໃດ, ພະອົງຟ້າວຮຽກເສນາມຸນຕີ ເພື່ອຫາທາງແກ້ໄຂສະຖານະການກ່ອນ ທີ່ຈະເກີດຄວາມຫາຍະນະ. ໃນທີ່ສຸດ ກໍມີຄໍາສັ່ງໃຫ້ທ້າວທັງທຶກໃຊ້ລິດເດດ ບັນຊາໃຫ້ສັດທັງໝົດໜີໄປຈາກເມືອງ.

ປາກົດວ່າ ທ້າວທັງທຶກກໍຢ້ານຈົນຂວັນໜີຄືງ ເພາະຄາດບໍ່ເຖິງວ່າ ສັດຈະຫລັ່ງມາຫລາຍປານນີ້ ທັງບໍ່ເຄີຍມີປະສົບການມາກ່ອນ. ພວກທ້າວແຂງໃຈ ທໍາທ່າເປັນຜູ້ມີວິຊາອາຄົມ ແລ້ວຮ້ອງບອກສັດທັງຫລາຍໃຫ້ໜີໄປ, ສ່ວນທາງໃນກໍຮູ້ສຶກວ່າຫັນໃຈບໍ່ຮອດທ້ອງ ເພາະຢ້ານວ່າເຫດການຈະບໍ່ເປັນໄປຕາມທີ່ຕົກລົງກັນໄວ້ກັບສິນໄຊ, ນັ້ນຄືແມ່ນ

ສິນໄຊເອງທີ່ເປັນຜູ້ສັ່ງໃຫ້ສັດຫລັ່ງມາ ແລະຈະເອີ້ນໃຫ້ສັດກັບຄືນໄປ.

ໂຊກຍັງດີສຳລັບທ້າວທັງຫົກ ເພາະວ່າ ສັດທັງຫລາຍພາກັນມະຫັນມະຫາຍໄປຈົນຫມົດ, ແລ້ວສະກາບະກາບໃນຕົວເມືອງກໍຄືນສູ່ປົກກະຕິ. ພວກທ້າວໄດ້ຮັບການຍົກຍ້ອງສັນລະເສີນ ຈາກພະຍາພໍ່ ແລະ ແມ່ມະເຫສີ ຕະຫລອດທັງບ່າວໄພ່ລາສະດອນທຸກກ້ອນຫນ້າ ແລະ ໄດ້ຮັບການຍອມຮັບນັບຖືວ່າ ເປັນບຸລຸດຜູ້ລ້ຳເລີດ, ເປັນຜູ້ມີວິຊາອາຄົມເປັນຍອດ ຊຶ່ງຄົນທັງເມືອງ ໂຮ່ຮ້ອງສະດຸດີ.

ໃນໂອກາດອັນມີຄວາມຫມາຍປະຫວັດສາດນີ້ ພະຍາກຸສະລາດ ໄດ້ຈັດພິທີບາສີໃຫ້ລາຊະບຸດທັງຫົກ ຢູ່ໃນລາຊະວັງເພື່ອເປັນກຽດ ແລະ ເປັນສິລິມຸງຄຸນ ທ່າມກາງບັນຍາກາດທີ່ເຕັມໄປດ້ວຍຄວາມນັບຖື ແລະ ໄວ້ເນື້ອເຊື່ອໃຈ ຈາກຜູ້ຄົນທົ່ວທັງເມືອງ. ພວກທ້າວທັງຫົກນັ່ງຊອນລອນ ຍໍມືນົບຕໍ່ຫນ້າພານຄຳ ໂດຍມີພາມ ຜູ້ເປັນຫມໍພອນຈົ່ມຄຳສູດຂວັນອວຍພອນໃຫ້ພວກທ້າວແກ່ນກ້າດັ່ງຕາເວັນ ເຂັ້ມແຂງດັ່ງຫີນຜາ ຜານແພ້ຫມູ່ມານທັງປວງ. ສ່ວນພະຍາກຸສະລາດບອກພວກລູກວ່າ :

" ພໍ່ນີ້ກາງຕໍ່ພວກລູກ, ເຫັນລິດເດດແລ້ວກໍວາງໃຈໄດ້ ພໍ່ຈຶ່ງຂໍໃຫ້ພວກລູກ ໄປກຳຈັດຍັກກຸມພັນ ທີ່ມາບຽດບຽນອົ່ມເຫັງນ້ຳໃຈ, ຖ້າບໍ່ດັ່ງນັ້ນ ກໍບໍ່ມີມື້ເຊົາແຄ້ນ. ຍັກໂຕນີ້ມາລັກເອົາ ອາສຸມຸນທາໄປຫລາຍປີແລ້ວ, ຕ້ອງປາບມັນໃຫ້ດັບດິ້ນສິ້ນຊີ່ໄປເລີຍ. ຢ່າຍອມມັນເນີ ! "

ພວກທ້າວທັງຫົກ ຮັບປາກກັບພະຍາພໍ່ ແລ້ວກໍກຽມຕົວອອກເດີນທາງຄາວໄກອີກເທື່ອນຶ່ງ.

# ລືນໄປຫາສິນໄຊ

ດ້ວຍພາລະກິດ ທີ່ແສນຫຍຸ້ງຍາກກັນດານ, ເສັ້ນທາງກໍແຮ່ງຍາວໄກ ພວກທ້າວທັງຫົກ ເດີນທາງດັ້ນປ່າດ້ວຍຄວາມຮູ້ສຶກມືດມົນຈົນປັນຍາ, ພວກທ້າວບໍ່ມີທາງເລືອກອື່ນໃດ ຈຶ່ງເປີດຫນ້າໄປໃສ່ສະຖານທີ່ຢູ່ຂອງສິນໄຊ, ຂະນະເດີນທາງ ກໍປຶກສາຫາຣູ້ນຳກັນວ່າ ຈະຕ້ອງໄປບອກ ສິນໄຊ ໃຫ້ໄປປາບຍັກ ໂດຍຕົວະວ່າ ນີ້ເປັນຄຳສັ່ງຂອງພະຍາພໍ່, ຖ້າບໍ່ເຮັດວິທີນີ້ ກໍບໍ່ມີວິທີອື່ນ ນອກຈາກພາກັນໄປພົບກັບຄວາມຕາຍຢ່າງຫລີກບໍ່ພົ້ນ.

ເມື່ອຮອດບ່ອນຢູ່ຂອງສິນໄຊ ທ້າວທັງຫົກເວົ້າວ່າ: "ພວກອ້າຍເລົ່າສູ່ພະຍາພໍ່ຟັງຫມົດແລ້ວ ກ່ຽວກັບເລື່ອງ ທີ່ໄດ້ພົບພໍ້ນ້ອງ ແລະ ເຫັນນ້ອງຍັງມີຊີວິດຢູ່. ເພິ່ນເສຽໃຈແຮງຕໍ່ເຫດການທີ່ຜ່ານມາ ແລະ ຝາກຄວາມມານຳວ່າ ຂໍໃຫ້ນ້ອງເຫັນໃຈເພິ່ນ ທີ່ເພິ່ນໄດ້ຫລົງຜິດໄປແລ້ວ. ເພິ່ນເອງຕື່ນເຕັ້ນດີໃຈຫລາຍ ທີ່ນ້ອງມີລິດເດດເກັ່ງກ້າ ເພິ່ນ**ຈຶ່ງສັ່ງ**ມາບອກໃຫ້ນ້ອງໄປປາບຍັກ ທີ່ໄດ້ມາຍາດເອົາອາໄປ. **ເມື່ອສຳ**

ເລັດວຽກການອັນໃຫຍ່ຫລວງນີ້ແລ້ວ ພະຍາພໍ່ກໍຈະຫມົດຄວາມທຸກຮ້ອນ ຫມົດຄວາມແຄ້ນເຄືອງອຸກອັ່ງໃນໃຈ, ບັດນັ້ນ ເພິ່ນຈະມອບເມືອງເປັງຈານ ໃຫ້ນ້ອງຂຶ້ນນັ່ງຄອງສືບຕໍ່ໄປ."

ສິນໄຊກ່າວຕອບວ່າ :

" ຂ້ອຍເອງ ສໍານຶກສະເຫມີ ໃນບຸນຄຸນຂອງພະຍາພໍ່ທີ່ໃຫ້ກໍາເນີດແກ່ຂ້ອຍມາ. ຂ້ອຍບໍ່ອາດຂືນຄໍາສັ່ງຂອງເພິ່ນດອກ, ຊາໃຈຕົນເອງນີ້ ພະຍາພໍ່ສັ່ງແນວໃດ ຈະຕ້ອງເຮັດໃຫ້ໄດ້, ບໍ່ມີກອຍ. ແຕ່ແນວໃດກໍຕາມ ຂ້ອຍຕ້ອງການແມ່ກັບປ້າສາກ່ອນ ເພາະທັງສອງ ເພິ່ນເປັນຜູ້ເບິ່ງແຍງລ້ຽງດູ ນັບແຕ່ເປັນເດັກແດງໆພຸ້ນມາ ດ້ວຍຄວາມລໍາບາກຢ່າງແສນສາຫັດ."

ແລ້ວສິນໄຊ ກໍເຂົ້າໄປກົ້ມຂາບລົງຕໍ່ຫນ້າແມ່ ແລະປ້າ ຜູ້ຊຶ່ງໄດ້ເຫັນໄດ້ຍິນພວກທ້າວທັງຫົກແລ້ວ ກໍຮູ້ສຶກຂົນຫູຂົນຕາເປັນທີ່ສຸດ.

" ເຜືອ[11] ຜູ້ເປັນແມ່ ຄິດເຫັນຕອນເພິ່ນໄລ່ຫນີຈາກເມືອງແລ້ວ ກໍຮູ້ສຶກເຈັບປວດໃນເອິກ ປານເອົາສ້ຽນຕັ້ງຫມື່ນຕັ້ງແສນອັນມາສຽບແທງ. ມັນລືມບໍ່ໄດ້ງ່າຍໆ ແລະ ຈະບໍ່ມີມື້ລືມໄດ້ຜອງໃດທີ່ຍັງມີຊີວິດຢູ່. ເຊື້ອແນວຫນໍ່ກະສັດຢູ່ໃນວັງກໍມີຫລາຍຄົນ, ເປັນຫຍັງຈຶ່ງບໍ່ມີໃຜ ຂັນອາສາໄປປາບແທນ

---

[11] ເຜືອ : ພວກຂ້ອຍ, ພວກເຮົາ



ເພິ່ນ. **ຂາດຄົນກ້າຫານປານນັ້ນພຸ້ນຫວະ ?** " **ແມ່ຂອງສິນໄຊ ເວົ້າສຽດ**ໃສ່ທ້າວທັງທົກ.

ຝ່າຍທ້າວທັງທົກຍາດກັນເວົ້າວ່າ " ວຽກການອັນນີ້ ມັນໃຫຍ່ຫລວງຫນັກຫນ່ວງທີ່ສຸດ, ຄົນທັງຫມົດໃນແຜ່ນດິນນີ້ ບໍ່ມີໃຜອັນອາສາກ້າອອກໄປຕໍ່ສູ້ເລີຍ ນອກຈາກສິນໄຊເທົ່ານັ້ນ. ດັ່ງນີ້ ພະຍາພໍ່ ຈຶ່ງສັ່ງຄວາມມາບອກສິນໄຊ ໃຫ້ໄປແກ້ແຄ້ນແທນເພິ່ນ "

ທ້າວນຶ່ງເວົ້າຕອດຂຶ້ນວ່າ : " ພະຍາພໍ່ສັ່ງຄວາມມາຫາມະເຫສີທັງສອງວ່າ ຂໍອອດຄວາມຮັກຄວາມແພງຄືນ, ຂໍໃຫ້ລືມເລື່ອງບໍ່ດີບໍ່ງາມທີ່ເກີດຂຶ້ນໃນອະດີດ ຍ້ອນຄວາມຫລົງຜິດ, ຂໍໃຫ້ຄິດວ່າ ສັດສີ່ຕີນຍັງຮູ້ພະລາດ ນັກປາດຍັງຮູ້ຫລົງຄວາມໄດ້, ຄາວນັ້ນ ພວກເສນາມຸນຕີບໍ່ຄິດຮອບຄອບ ຈຶ່ງດຳເນີນກິດຈະການຜິດພາດໄປ."

ສ່ວນສິນໄຊ ໄດ້ຍິນຄຳບອກເລົ່າຂອງທ້າວທັງທົກ ກໍຮູ້ສຶກປວດຈ້າວໆ ທັງທ້າວທັນຢາກສະແດງຄວາມເກັ່ງກ້າ ຈຶ່ງອ້ອນວອນແມ່ ແລະ ປ້າຂໍຈົ່ງໄດ້ອະນຸຍາດໃຫ້ຕົນໄປແກ້ແຄ້ນແທນພໍ່ ແລະ ຂໍໃຫ້ລືມຄວາມຜິດພາດຂອງພໍ່ໃນຄັ້ງອະດີດນັ້ນສາ. ຝ່າຍ ແມ່ ແລະ ປ້າ ຂືນໃຈທີ່ສຸດ ທີ່ຈະປ່ອຍຕາມໃຈສິນໄຊ ເພາະເຫັນວ່າ ທ້າວຍັງນ້ອຍຢູ່. ອີກປະການນຶ່ງກໍຄືແມ່ກັບປ້າຈະຕ້ອງຢູ່ຢ່າງໂດດດ່ຽວຕາມລຳພັງພຽງສອງຄົນທັງເປັນຄັ້ງທຳອິດ ທີ່ລູກກັບແມ່ຈະຕ້ອງພັດພາກຈາກກັນໄປ.

ສິນໄຊເວົ້າອະທິບາຍໃຫ້ແມ່ຟັງວ່າ ເຖິງແມ່ນວ່າຕົນຈະຍັງນ້ອຍຢູ່ກໍຕາມແຕ່ຈິດໃຈ ກໍບໍ່ຫວັ່ນເກງ, ບໍ່ຢ້ານກົວສັດຕູໂຕໃດ ໂດຍສະເພາະເມື່ອມີທະນູກັບສອນ ພ້ອມທັງດາບຕິດຕົວແລ້ວ ສິນໄຊກໍເປັນເອກ ຄືບໍ່ມີຜູ້ໃດຈະເອົາຊະນະໄດ້.

ເມື່ອເວົ້າແນວໃດ ສິນໄຊກໍຍັງຢືນຢັນທີ່ຈະໄປປາບຍັກຢູ່ຄືເກົ່າ, ແມ່ກັບປ້າຈຶ່ງປ່ອຍໃຫ້ໄປ ພ້ອມກັບສີໂຫ ແລະ ສັງທອງ ແຕ່ກໍສັ່ງແລ້ວສັ່ງອີກ ໃຫ້ສິນໄຊຟ້າວຕ່າວຄືນມາ, ໃຫ້ມີສະຕິລະວັງຕົວ, ຢ່າປະໜາດສັດຕູ ໂດຍສະເພາະຍັກກຸມພັນເພາະມັນມີລິດເດດຫລາຍ.

ສິນໄຊຮັບປາກ ທີ່ຈະປະຕິບັດຕາມແມ່ສັ່ງ ແລ້ວກໍບອກສີໂຫກັບສັງທອງ ໃຫ້ກຽມຕົວກຽມໃຈ ເພື່ອການຜະຈົນໄພຄັ້ງໃຫຍ່ໃນຊີວິດ ນັ້ນຄື ການໄປແກ້ແຄ້ນແທນພະຍາພໍ່.

ແລ້ວສິນໄຊ ກໍກີທຽນເຂົ້າໄປຂາບລາແມ່ກັບປ້າ, ຕໍ່ມາກໍຮ້ອງສັ່ງລາພະຍາຄຸດ, ພະຍານາກ ໃຫ້ລະແວດລະວັງຮັກສາບໍລິເວນສະຖານທີ່ ໃຫ້ມີຄວາມສະຫງົບສັນຕິ, ແລ້ວທ້າວກໍອອກເດີນທາງ ໂດຍເອົາສອນກັບດາບຕິດຕົວໄປພ້ອມ, ສັງທອງລ່ວງໜ້າໄປກ່ອນ ໂດຍເບີກທາງ ໃຫ້ເປັນແລວໄປເພື່ອໃຫ້ສິນໄຊກັບສີໂຫ ເດີນໄຕ່ສະດວກສະບາຍ ຕິດຕາມດ້ວຍທ້າວທັງຫົກ, ມຸ່ງໜ້າສູ່ແດນຍັກ ທີ່ຢູ່ຄົບລະຟາກຟ້າ.



# ການຜະຈົນໄພ ສູ້ກັບງູຊວງ

ການເດີນທາງຜ່ານໄປຫລາຍວັນ ຄະນະຂອງສິນໄຊໄປພົ້ງູຊວງນອນຂົດຕັນທາງຢູ່ຄົ້ງນຶ້ງ ສູງຈົນພົ້ນປາຍໄມ້. ງູໃຫຍ່ໄດ້ກິ່ນຄົນກໍຍໍຄໍຂຶ້ນ ທັງພົ່ນພິດອອກເປັນຄວັນຮ້ອນແຮງເພື່ອອົ່ມຂູ່ຜູ້ມາລ່ວງລ້ຳແດນ. ສິນໄຊບໍ່ສະທົກສະທ້ານແຕ່ຢ່າງໃດ, ສ່ວນທ້າວທັງໝົກຢ້ານຈົນຫນ້າຫລ່າຕາຕາຍ ແລະຮ້ອງຂໍໃຫ້ສິນໄຊພາຫນີໄປໄວໆ.

ສິນໄຊເວົ້າວ່າ: " ບໍ່ຕ້ອງຢ້ານ, ມັນເປັນພຽງສັດເລືອຄານຊັ້ນຕ່ຳ, ພວກເຮົາມາເຈີກັບມັນຈັ່ງຊີ້ ກໍເປັນການດີເພາະຈະໄດ້ລອງແຮງເບິ່ງ, ຖືວ່າເປັນການທົດສອບຂັ້ນຕົ້ນເພື່ອແຜ້ວທາງໄປສູ່ບັ້ນຮົບສຳຄັນຢູ່ທາງຫນ້າ "

ເວົ້າແລ້ວສິນໄຊກໍລູ່ເຂົ້າໄປໃສ່ງູຊວງໂລດ, ສ່ວນທ້າວທັງທັກຟ້າວປີບໄປລີ້ຢູ່ໄກໆ. ສີໂຫຢູ່ຮຽງຂ້າງສິນໄຊບໍ່ຍອມຫ່າງເພື່ອຊ່ອຍເຫລືອຊຶ່ງກັນ ແລະ ກັນ. ງູໃຫຍ່ເຫັນເດັກນ້ອຍເຂົ້າມາຫາກໍຄຶດວ່າ ອາຫານແລ່ນມາເຂົ້າປາກ. ມັນມາຍໂຕອອກ ເອົາຫາງຟາດພື້ນ ເພື່ອຂົ່ມຂູ່ສິນໄຊ ຈົນງ່າໄມ້ຫັກມຸ່ນອັບຍັບ, ແຕ່ສິນໄຊບໍ່ສະແດງອາການຫວັ່ນໄຫວເລີຍ, ເພື່ອໃຫ້ງູຢຸດເຊົາ ອາການຈອງຫອງ ສິນໄຊຈຶ່ງຍິງສອນເຂົ້າໃສ່ເກີດແສງມາບແມບ ປານຟ້າຜ່າ, ງູຊວງ ກຶກສອນທີ່ຫົວຈົນສະເດີດຫງາຍເງີບ, ມັນດີ້ນຫາງ ຈົນຕົ້ນໄມ້ໃຫຍ່ນ້ອຍລົ້ມລ່າວແປນເອີດເຕີດ, ມັນຕັ້ງໂຕໃຫມ່ຢ່າງວ່ອງໄວ ອ້າປາກກວ້າງ ຕາໂລ້ແດງປານຕາເວັນ ແລ້ວໂດດສວາບສຸດແຮງຫວັງຄາບມະນຸດຕົວນ້ອຍໆ ແຕ່ສິນໄຊຍົກດາບຂຶ້ນປ້ອງກັນ, ອາຍພິດອັນຮ້ອນແຮງຂອງງູ ປະທະກັບດາບສິນໄຊ ຈົນເກີດໄຟລຸກວາບ ປະກາຍໄຟເຮັດໃຫ້ສິນໄຊມີອາການມົວຕາໄປຂະນະນຶ່ງ. ເມື່ອເຫັນດັ່ງນັ້ນ ສີໂຫກໍຫລູບເຂົ້າ ໃຊ້ງາແທງທັງວັດແຮງໆ ຈົນງູກະເດັນຂາດເປັນທ່ອນ ດີ້ນດ່າວໆ, ທ່ອນຫົວຍັງແຜງລິດ ໂດຍພົ່ນອາຍພິດຮ້ອນປານໄຟໄຫມ້ ລາມໄປຫລາຍບ່ອນ. ສິນໄຊພະຍາຍາມຫລົບຫລີກ ແລະ ພໍໄດ້ຈັງຫວະ ກໍຍິງສອນໄປໃສ່ຊ້ຳອີກ, ບັດນີ້ ຫົວງູຂາດຟື້ງ ສະເດັນຈົນສິ້ນລິດ, ລຳຕົວຍັງເຫນັງເນີບນາບຄ່ອຍໆ ແຕ່ບໍ່ມີພິດໄພໃດໆ ດັ່ງດຽວກັບຫາງຈີ້ຈຽມຂາດ.

ເມື່ອຜາບງູລົງໄດ້ແລ້ວ ສິນໄຊກັບສີໂຫ ກໍກວດເບິ່ງສະຫນາມຕໍ່ສູ້ ດ້ວຍຄວາມຮູ້ສຶກທະນົງອົງອາດ ເພາະຜ່ານບັ້ນຮົບມາຢ່າງມີໄຊ. ງູໂຕມະຫຶມາ ນອນຕາຍຂວາງປ່າ,

ເລືອດແດງແປດເປື້ອນໄປທົ່ວພື້ນດິນ, ແລ້ວບຸລຸດຜູ້ເກັ່ງກ້າ ກໍເອີ້ນຫາທ້າວທັງຫົກ ໃຫ້ມາເບິ່ງກັບຕາໂຕເອງ. ພວກທ້າວໂປໂລຫົວອອກມາຈາກບ່ອນລີ້ ດ້ວຍອາການຢຸດໆຢ່ອນໆ ເວົ້າຫຍັງກໍບໍ່ອອກ.

ເມື່ອພັກຜ່ອນເອົາແຮງແລ້ວ ສິນໄຊກໍພາທ້າວທັງຫົກເດີນທາງຕໍ່ໄປ. ສີໂຫຕິດຕາມອ້າງນ້ອງບໍ່ຍອມຫ່າງບາງຄັ້ງ ສີໂຫກໍໃຫ້ສິນໄຊຂຶ້ນຂີ່ຫລັງໄປ ໂດຍພາກັນຍ່າງນໍາຮອຍສັງທອງ ທີ່ລ່ວງໜ້າໄປກ່ອນແລ້ວ. ສັງທອງໄປຮອດແມ່ນໍ້າໃຫຍ່ ກໍຄອງກ້າ ເພາະເຫັນວ່າ ກະແສນໍ້າໄຫລແຮງ ທັງເປັນຟອງຍວກຍູ້. ຄະນະຂອງສິນໄຊໄປຮອດບ່ອນສັງທອງຢູ່ກໍພໍດີຄໍ່າ, ທັງໝົດຈຶ່ງພາກັນພັກແຮມຄືນຢູ່ແຄມແມ່ນໍ້າແຫ່ງນີ້.

ສັງທອງ ບອກໝົດທຸກຄົນວ່າ ທາງໄປສູ່ບ່ອນຢູ່ຂອງຍັກກຸມພັນ ບໍ່ອາດຫລີກເວັ້ນແມ່ນໍ້າແຫ່ງນີ້ໄປໄດ້, ຈໍາເປັນພວກເຮົາຕ້ອງຂ້າມໄປ, ພວກທ້າວທັງຫົກຄິດທໍ້ຖອຍ ເພາະເຫັນແມ່ນໍ້າກວ້າງສຸດຊົ່ວຕາ ຈຶ່ງຂໍຮ້ອງໃຫ້ສິນໄຊພາກັບຄືນ. ພວກທ້າວເວົ້າວ່າ : " ພວກອ້າຍບໍ່ມີລິດເດດເກັ່ງກ້າພໍ ທີ່ຈະຂ້າມແມ່ນໍ້າໄປໄດ້ ຈຶ່ງຂໍໃຫ້ນ້ອງພາກັບຄືນໄປຫາພະຍາພໍ່, ພາກັບຄືນໄປແທ້ໆ."

ສິນໄຊໄດ້ຍິນຄໍາອ້ອນວອນດັ່ງນັ້ນ ກໍຮູ້ເຖິງທາດແທ້ຂອງທ້າວທັງຫົກ, ພວກເຂົາບໍ່ມີມານະອົດທົນ ງົ້ວງຽງຕໍ່ໜ້າສະພາວະການຫຍຸ້ງຍາກ ບໍ່ສົມກັບເປັນໜໍ່ກະສັດ ແຫ່ງເມືອງເປັງຈານ.

ສິນໄຊເວົ້າໃສ່ວ່າ: " ພວກເຮົາເປັນລູກຜູ້ຊາຍ, ເປັນໜໍ່ກະສັດຜູ້ສູງສັກ, ວຽກການບໍ່ທັນແລ້ວ ຊິວາງມືເປັນບໍ ?



ກ້າຫາກໃຈບໍ່ສູ້ແທ້ໆ ກໍໃຫ້ຄືນໄປເອງ ແລ້ວສາລະພາບຕໍ່ພະຍາພໍ່ຕາມຄວາມຈິງ."

ພວກທ້າວທັງຫົກອ້ອນວອນຕໍ່ ຂໍໃຫ້ສິນໄຊ ໄປສົ່ງພວກຕົນ, ກ້າບໍ່ດັ່ງນັ້ນ ກໍມີແຕ່ສິພາກັນໄປຕາຍລ້າໆ ເທົ່ານັ້ນ. ສິນໄຊ ບໍ່ຍອມໄປສົ່ງ ແຕ່ບອກທ້າວທັງຫົກ ໃຫ້ຄອງກ້າຢູ່ແຄມນໍ້າແຫ່ງນີ້, ເກືອງປານນັ້ນກໍຕາມ ພວກທ້າວກໍຍັງຢ້ານຕາຍຢູ່ ຄືຢ້ານສັດປ່າ ຢ້ານຜີໂພງ ຜີສະມ່ອຍ[12] ມາທໍາຮ້າຍ. ເມື່ອເປັນດັ່ງນັ້ນ ສິນໄຊ ເລີຍຕັດສິນໃຈໃຫ້ສີໂຫເຝົ້າອ້າຍທັງຫົກຢູ່ແຫ່ງນີ້ ຈົນກວ່າຕົນເອງກັບສັງທອງຈະກັບຕ່າວຄືນມາ.

ຮຸ່ງເຊົ້າມື້ໃຫມ່ ສິນໄຊກັບສັງທອງ ກໍເດີນທາງຕໍ່ເພື່ອໄປໃຫ້ເຖິງຈຸດຫມາຍປາຍທາງ. ສັງທອງ ເບລະມິດຕົວເອງເປັນຄືເຮືອສະເພົາ ພາສິນໄຊຂ້າມໄປລຸດໆ ຄາວດຽວກໍຮອດຝັ່ງກົງກັນຂ້າມ, ແລ້ວສິນໄຊກໍບອກສັງທອງ ບຸປ່າຜ່າດົງຂ້າມພູຜາຫ້ວຍຮ່ອງເປັນແລວຊື່ໆ ໄປຈົນສຸດສາຍຕາ. ສິນໄຊເອົາດາບຂັດແອວ ສ່ວນມືກືທະນູແລ້ວຍ່າງນໍາຮອຍສັງທອງໄປຄົນດຽວ ທ່າມກາງພູຜາສູງຊັນທີ່ທັບກັນເປັນລັ່ນຈົນສຸດຂອບຟ້າ.

ຈົບເຫລັ້ມ ໑

---

[12] **ຜີສະມ່ອຍ** : ລິງໃຫຍ່ຢູ່ຕາມປ່າດົງດິບ, ກ້າແມ່ນປາໃຫຍ່ຢູ່ທະເລ ເອີ້ນວ່າ ປາສະມ່ອຍ.

# ເຫລັ້ມ ໔

## ພົບກັບສົງຄາມຄັ້ງຍິ່ງໃຫຍ່
## ລະຫວ່າງ
## ສິນໄຊ ແລະ ຍັກກຸມພັນ



ດອກເກດ
DokkeD
Publising Co.,Ltd

28000